ປະມວນສົນທິສັນຍາສາກົນ

# ສິດທິມະນຸດ

**COMPILATION OF**

**INTERNATIONAL CONVENTIONS**

# HUMAN RIGHTS


ກົມສົນທິສັນຍາ ແລະ ກົດໝາຍ

ກະຊວງການຕ່າງປະເທດ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**Department of Treaties and Legal Affairs**

**Ministry of Foreign Affairs**

**Lao People’s Democratic Republic**


ເຫຼັ້ມ **II**

**Volume II**

| | | | |
|---|---|---|---|
| ສາທາລະນະລັດ ປະຊາທິໄຕ ປະຊາຊົນລາວ<br>**Lao People’s Democratic Republic** | ປະເທດແຟງລັງ<br>**Finland** | ສະຫະພາບເອີຣົບ<br>**European - Union** | ອົງການສະຫະປະຊາຊາດເພື່ອການພັດທະນາ<br>**United Nations Development Programme** |

*ໂຄງການ 00045032:*

*ເພີ່ມທະວີການປະກອບສ່ວນຂອງກົດໝາຍສາກົນ*

*ໃນການປົກຄອງໂດຍກົດໝາຍຢູ່ ສປປ ລາວ*

# *Project 00045032:*

# *Enhancing the Contribution of International Law*

# *to the Strengthening of the Rule of Law in the Lao PDR*

# ຄຳນຳ

ໂດຍຜ່ານໂຄງການກົດໝາຍສາກົນ (00045032), ກົມສົນທິສັນຍາ ແລະ ກົດໝາຍ, ກະຊວງການຕ່າງປະເທດໄດ້ຈັດພິມເຜີຍແຜ່ ປະມວນສົນທິສັນຍາສິດທິມະນຸດເຫຼັ້ມ II ໃນປີ 2003.

ໄດ້ມີການແຈກຢາຍປະໃວນສົນທິສັນຍາເຫຼັ້ມນີ້ ຢ່າງກວ້າງຂວາງ ແລະ ຫຼາຍຄົນກໍໄດ້ສຶກສາຄົ້ນວ້າ ແລະ ນຳໃຊ້ຕາມຄວາມເໝາະສົມ. ສະນັ້ນ ຈຶ່ງເຫັນວ່າ ມີວາມຈຳເປັນໃນການພິມຕື່ມອີກ (ພິມຄັ້ງທີ II ຈຳນວນ 3.000 ຫົວ) ການພິມເຜີຍແຜ່ເນື້ອໃນສົນທິສັນຍາດັ່ງກ່າວ ເພື່ອເພີ່ມທະວີຄວາມຮັບຮູ້ເຂົ້າໃຈຂອງພະນັກງານ, ທະຫານ, ຕຳຫຼວດ ແລະ ມວນຊົນທົ່ວໄປ ກ່ຽວກັບ ສົນທິສັນຍາເຫຼົ່ານີ້ ເພື່ອພ້ອມກັນຜັນຂະຫຍາຍຈັດຕັ້ງປະຕິບັດເທື່ອລະກ້າວ ຕາມເງື່ອນໄຂ ແລະ ຄວາມອາດສາມາດຕົວຈິງຂອງປະເທດພວກເຮົາ.

ໃນໂອກາດນີ້ ຜູ້ຈັດພິມຂໍສະແດງຄວາມຂອບໃຈ ມາຍັງອົງການສະຫະປະຊາຊາດ ເພື່ອການພັດທະນາ, ລັດຖະບານແຟງລັງ ແລະ ສະຫະພາບເອີຣົບ ທີ່ໄດ້ໃຫ້ການສະໜັບສະໜູນ ໂຄງການໃນການຈັດພິມປະມວນສົນທິສັນຍາເຫຼັ້ມນີ້ ມານະໂອກາດນີ້ດ້ວຍ.

# ສົນທິສັນຍາ ວ່າດ້ວຍ ການສະກັດກັ້ນ ແລະ ລົງໂທດ ອາຊະຍາກຳດັບສູນເຊື້ອຊາດ.

*ຮັບຮອງເອົາ ແລະ ເປີດຮັບການລົງນາມ ແລະ ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ*
*ໂດຍຍັດຕິຂອງສະມັດຊາໃຫຍ່ເລກທີ 260A (III) ລົງວັນທີ 9 ທັນວາ 1948*
**ເລີ່ມມີຜົນບັງຄັບໃຊ້: 12 ມັງກອນ 1951 ຕາມມາດ XIII**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າເປັນພາຄີ: 8 ທັນວາ 1950**

## *ອາລຳພະບົດ*

***ໂດຍໄດ້ພິຈາລະນາ*** ເຖິງຄຳຖະແຫຼງຂອງສະມັດຊາໃຫຍ່ສະຫະປະຊາຊາດ ໃນຍັດຕິເລກທີ 96 (I) ລົງວັນທີ 11 ທັນວາ 1946 ນັ້ນວ່າ ການດັບສູນເຊື້ອຊາດແມ່ນອາຊະຍາກຳໜຶ່ງຢູ່ພາຍໃຕ້ກົດໝາຍສາກົນ, ຊຶ່ງຂັດກັບຈິດໃຈ ແລະ ຈຸດປະສົງຂອງສະຫະປະຊາຊາດ ແລະ ຖືກໂລກສີວິໄລກ່າວປະນາມ;

***ໂດຍຮັບຮູ້ວ່າ*** ໃນທຸກຍຸກສະໄໝປະຫວັດສາດການດັບສູນເຊື້ອຊາດໄດ້ກໍ່ຄວາມເສຍຫາຍໃຫ້ແກ່ມວນມະນຸດຢ່າງມະຫາສານ;

***ໂດຍເຊື່ອແນ່ວ່າ*** ການຮ່ວມມືສາກົນແມ່ນມີຄວາມຈຳເປັນເພື່ອຈະປົດປ່ອຍມວນມະນຸດຈາກເຄາະກຳອັນໜ້າລັງກຽດດັ່ງກ່າວ.

## *ບັນດາລັດພາຄີ ຈຶ່ງໄດ້ຕົກລົງຕາມທີ່ໄດ້ບັນຍັດຕໍ່ໄປນີ້:*

### <u>ມາດຕາ I</u>

ໃນສົນທິສັນຍາສະບັບນີ້, ຄຳວ່າ "ລັດທິດັບສູນເຊື້ອຊາດ" ໝາຍເຖິງໜຶ່ງໃນບັນດາການກະທຳຕໍ່ໄປນີ້ ຊຶ່ງໄດ້ກໍ່ຂຶ້ນໂດຍມີເຈດຕະນາ ເພື່ອງລ້າງຜານກຸ່ມຊົນຊາດ, ຊົນເຜົ່າ, ເຊື້ອຊາດ ຫຼື ສາສະໜາໃດໜຶ່ງ, ຢ່າງສິ້ນເຊີງ ຫຼື ສ່ວນໃດໜຶ່ງ ເຊັ່ນວ່າ

ກ) ການສັງຫານສະມາຊິກຂອງກຸ່ມດັ່ງກ່າວ.

ຂ) ການກໍ່ໃຫ້ເກີດການທຳຮ້າຍອັນຮ້າຍແຮງຕໍ່ຮ່າງກາຍ ຫຼື ຈິດໃຈຂອງສະມາຊິກຂອງກຸ່ມ.

ຄ) ການສ້າງເງື່ອນໄຂດຳລົງຊີວິດ ໂດຍເຈດຕະນາທີ່ແນໃສ່ນຳມາຊຶ່ງການລ້າງຜານກຸ່ມຢ່າງສິ້ນເຊີງ ຫຼື ສ່ວນໃດສ່ວນໜຶ່ງ.

ງ) ການວາງມາດຕະການ ທີ່ແນໃສ່ສະກັດກັ້ນ ແລະ ຄວບຄຸມການກຳເນີດພາຍໃນກຸ່ມ.

ຈ) ການບັງຄັບໃຫ້ໂອນມອບເດັກນ້ອຍຂອງກຸ່ມໜຶ່ງໄປອີກກຸ່ມໜຶ່ງ.

**<u>ມາດຕາ II</u>**

ໃນສົນທິສັນຍາສະບັບນີ້, ຄຳວ່າ "ລັດທິດັບສູນເຊື້ອຊາດ" ໝາຍເຖິງໜຶ່ງໃນບັນດາການກະທຳຕໍ່ໄປນີ້ ຊຶ່ງໄດ້ກໍ່ຂຶ້ນ ໂດຍມີເຈດຕະນາເພື່ອລ້າງຜານກຸ່ມຊົນຊາດ, ຊົນເຜົ່າ, ເຊື້ອຊາດ ຫຼື ສາສະໜາໃດໜຶ່ງ, ຢ່າງສິ້ນເຊີງ ຫຼື ສ່ວນໃດໜຶ່ງ ເຊັ່ນວ່າ

(ກ) ການສັງຫານສະມາຊິກຂອງກຸ່ມດັ່ງກ່າວ.

(ຂ) ການກໍ່ໃຫ້ເກີດການທຳຮ້າຍອັນຮ້າຍແຮງຕໍ່ຮ່າງກາຍ ຫຼື ຈິດໃຈຂອງສະມາຊິກຂອງກຸ່ມ.

(ຄ) ການສ້າງເງື່ອນໄຂດຳລົງຊີວິດ ໂດຍມີເຈດຕະນາທີ່ແນໃສ່ນຳມາ ຊຶ່ງການສ້າງຜານກຸ່ມຢ່າງສິ້ນເຊີງ ຫຼື ສ່ວນໃດສ່ວນໜຶ່ງ.

(ງ) ການວາງມາດຕະການ ທີ່ແນໃສ່ສະກັດກັ້ນ ແລະ ຄວບຄຸມການກຳເນີດພາຍໃນກຸ່ມ.

(ຈ) ການບັງຄັບໃຫ້ໂອນມອບເດັກນ້ອຍຂອງກຸ່ມໜຶ່ງໄປໃຫ້ອີກກຸ່ມໜຶ່ງ.

**<u>ມາດຕາ III</u>**

ການກະທຳຕໍ່ລົງໄປນີ້ ຈະຕ້ອງຖືກລົງໂທດໄດ້:

(ກ) ການດັບສູນເຊື້ອຊາດ.

(ຂ) ການຮ່ວມຫົວວາງແຜນ ກໍ່ການດັບສູນເຊື້ອຊາດ.

(ຄ) ການຍຸຍົງສົ່ງເສີມໂດຍກົງໃນໝູ່ມະຫາຊົນ ເພື່ອໃຫ້ກໍ່ການດັບສູນເຊື້ອຊາດ.

(ງ) ຄວາມພະຍາຍາມ ເພື່ອກໍ່ການດັບສູນເຊື້ອຊາດ.

(ຈ) ການຮ່ວມກັນກໍ່ການດັບສູນເຊື້ອຊາດ.

**<u>ມາດຕາ IV</u>**

ບຸກຄົນທີ່ໄດ້ກໍ່ການດັບສູນເຊື້ອຊາດ ຫຼື ໄດ້ມີການກະທຳໃດໜຶ່ງໃນບັນດາການກະທຳທີ່ບົ່ງໄວ້ໃນ ມາດຕາ III ນັ້ນຈະຕ້ອງຖືກລົງໂທດ, ບໍ່ວ່າເຂົາຈະເປັນຜູ້ປົກຄອງໂດຍຖືກຕ້ອງຕາມກົດໝາຍ, ເຈົ້າໜ້າທີ່ຂອງລັດ ຫຼືເອກະຊົນກໍ່ຕາມ.

**ມາດຕາ V**

ໂດຍສອດຄ່ອງກັບລັດຖະທຳມະນູນຂອງຕົນ, ລັດພາຄີໃຫ້ຄຳໝັ້ນສັນຍາທີ່ຈະຮັບຮອງເອົາກົດໝາຍອັນຈຳເປັນ ໃຫ້ແກ່ການປະຕິບັດຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ໃຫ້ມີຜົນສັກສິດໂດຍສະເພາະແລ້ວຈະກຳນົດໂທດທີ່ສັກສິດຕໍ່ບຸກຄົນທີ່ມີຄວາມຜິດ ໃນສະຖານດັບສູນເຊື້ອຊາດ ຫຼື ຍ້ອນການກະທຳໃດໜຶ່ງໃນບັນດາການກະທຳທີ່ໄດ້ບົ່ງໄວ້ໃນມາດຕາ III.

**ມາດຕາ VI**

ບຸກຄົນທີ່ຖືກກ່າວຫາວ່າໄດ້ກໍ່ການດັບສູນເຊື້ອຊາດ ຫຼື ການກະທຳອື່ນໆ ທີ່ບົ່ງໄວ້ໃນມາດຕາ III ຈະຕ້ອງຖືກພິຈາລະນາຄະດີໂດຍສານທີ່ມີສິດອຳນາດກ່ຽວຂ້ອງຂອງລັດພາຄີ ບ່ອນທີ່ໄດ້ມີການກະທຳຜິດນັ້ນ ຫຼື ສານອາຍາສາກົນທີ່ມີສິດອຳນາດກ່ຽວຂ້ອງກັບການກະທຳຜິດດັ່ງກ່າວສຳລັບລັດພາຄີທີ່ໄດ້ຮັບຮອງສິດອຳນາດຂອງສານດັ່ງກ່າວ.

**ມາດຕາ VII**

ການດັບສູນເຊື້ອຊາດ ແລະ ການກະທຳຜິດອື່ນທີ່ບົ່ງໄວ້ໃນ ມາດຕາ III ບໍ່ຖືວ່າເປັນອາຊະຍາກຳທາງການເມືອງ ເພື່ອຈຸດປະສົງຂອງການສົ່ງຜູ້ຮ້າຍຂ້າມແດນ. ລັດພາຄີໃຫ້ຄຳໝັ້ນສັນຍາວ່າ ໃນກໍລະນີດັ່ງກ່າວນັ້ນ ຈະອະນຸມັດການສົ່ງຜູ້ຮ້າຍຂ້າມແດນຕາມກົດໝາຍຂອງຕົນ ແລະ ບັນດາສົນທິສັນຍາທີ່ມີຜົນບັງຄັບໃຊ້ຢູ່ນັ້ນ.

**ມາດຕາ VIII**

ລັດພາຄີໃດກໍ່ຕາມສາມາດສະເໜີໃຫ້ອົງກອນທີ່ກ່ຽວຂ້ອງຂອງສະຫະປະຊາຊາດ ເອົາມາດຕະການພາຍໃຕ້ກົດບັດສະຫະປະຊາຊາດຕາມທີ່ເຫັນວ່າເໝາະສົມ ເພື່ອສະກັດກັ້ນ ແລະ ປາບປາມການກະທຳດັບສູນເຊື້ອຊາດ ຫຼື ການກະທຳອື່ນໆ ທີ່ບົ່ງໄວ້ໃນມາດຕາ III.

**ມາດຕາ IX**

ຂໍ້ຂັດແຍ່ງວະຫວ່າງ ລັດພາຄີດ້ວຍກັນ ທີ່ພົວພັນເຖິງການຕີຄວາມໝາຍ, ການນຳໃຊ້ ຫຼື ການປະຕິບັດສົນທິສັນຍາສະບັບນີ້, ນັບທັງຂໍ້ຂັດແຍ່ງທີ່ພົວພັນເຖິງຄວາມຮັບຜິດຊອບຂອງລັດຕໍ່ການດັບສູນເຊື້ອຊາດ ຫຼື ຕໍ່ການກະທຳອື່ນໆ ເພື່ອພິຈາລະນາຕາມການສະເໜີຂອງຄູ່ກໍລະນີຝ່າຍໃດໜຶ່ງ.

## **ມາດຕາ X**

ສົນທິສັນຍາສະບັບນີ້ ຊຶ່ງສະບັບພາສາຈີນ, ອັງກິດ, ຝຣັ່ງ, ຣັດເຊຍ ແລະ ແອັດສະປາຍ ທີ່ມີຄຸນຄ່າເທົ່າທຽມກັນນັ້ນຈະຕ້ອງມີ "ວັນທີ 9 ທັນວາ 1948".

## **ມາດຕາ XI**

ສົນທິສັນຍາສະບັບນີ້ ຈະເປີດຮັບການລົງນາມຂອງຜູ້ຕາງໜ້າປະເທດສະມາຊິກສະຫະປະຊາຊາດ ແລະ ປະເທດທີ່ບໍ່ແມ່ນສະມາຊິກສະຫະປະຊາຊາດຊຶ່ງໄດ້ຮັບເຊື້ອເຊີນໂດຍສະມັດຊາໃຫຍ່.

ສົນທິສັນຍາສະບັບນີ້ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ແລະ ສານສັດຕະຍາບັນຈະຕ້ອງໄດ້ເກັບຮັກສາໄວ້ນຳ ເລຂາທິການໃຫຍ່ສະຫະປະຊາຊາດ.

ຫຼັງຈາກວັນທີ 1 ມັງກອນ 1950, ບັນດາປະເທດສະມາຊິກສະຫະປະຊາຊາດ ແລະ ປະເທດທີ່ບໍ່ແມ່ນສະຫະປະຊາຊາດ ຊຶ່ງໄດ້ຮັບການເຊື້ອເຊີນດັ່ງກ່າວຂ້າງເທິງສາມາດເຂົ້າຮ່ວມເປັນພາຄີໄດ້, ສານເຂົ້າຮ່ວມເປັນພາຄີຈະໄດ້ເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະຊາດ.

## **ມາດຕາ XII**

ໂດຍແຈ້ງໃຫ້ເລຂາທິການໃຫຍ່ສະຫະປະຊາຊາດຊາບ, ລັດພາຄີໃດກໍ່ຕາມສາມາດຂະຫຍາຍການນຳໃຊ້ສົນທິສັນຍາສະບັບນີ້ ອອກໄປກວມເອົາທຸກດິນແດນທີ່ຕົນມີຄວາມຮັບຜິດຊອບໃນດ້ານການພົວພັນຕ່າງປະເທດ.

## **ມາດຕາ XIII**

ໃນມື້ທີ່ສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີຈຳນວນຊາວສະບັບທຳອິດໄດ້ຍື່ນຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ, ເລຂາທິການໃຫຍ່ຈະບັນທຶກກ່ຽວກັບການຍື່ນເອກະສານນີ້ ແລ້ວສຳເນົາສົ່ງໃຫ້ແຕ່ລະປະເທດສະມາຊິກ ແລະ ບໍ່ແມ່ນສະມາຊິກຂອງສະຫະປະຊາຊາດຕາມທີ່ບົ່ງໄວ້ໃນມາດຕາ XI.

ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ໃນມື້ທີເກົ້າສິບພາຍຫຼັງມີການຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີຊາວ.

ທຸກການໃຫ້ສັດຕະຍາບັນ ຫຼື ການເຂົ້າຮ່ວມເປັນພາຄີທີ່ຍື່ນພາຍຫຼັງມື້ທີ່ມີການຍື່ນສານໃຫ້ສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີດັ່ງກ່າວ.

## ມາດຕາ XIV

ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ໃນກຳນົດເວລາ ສິບປີ ນັບແຕ່ເລີ່ມມີຜົນບັງຄັບໃຊ້ຫຼັງຈາກນັ້ນສົນທິສັນຍານີ້ ຈະສືບຕໍ່ມີຜົນບັງຄັບໃຊ້ຕໍ່ໄປໃນທຸກໆປີ ສຳລັບບັນດາລັດພາຄີທີ່ບໍ່ໄດ້ປະກາດຖອນຕົວລ່ວງໜ້າຢ່າງຊ້າ ຫົກເດືອນ ທີ່ສົນທິສັນຍາຈະໝົດອາຍຸໃນໄລຍະດັ່ງກ່າວ, ການປະກາດຖອນຕົວຈະມີຜົນສັກສິດໂດຍການແຈ້ງເປັນລາຍລັກອັກສອນໃຫ້ເລຂາທິການໃຫຍ່ສະຫະປະຊາຊາດ.

## ມາດຕາ XV

ຖ້າຫາກຈຳນວນລັດພາຄີຫາກຫຼຸດລົງໜ້ອຍກວ່າ 16 ລັດຍ້ອນການຖອນຕົວນັ້ນ, ການມີຜົນບັງຄັບໃຊ້ຂອງສົນທິສັນຍາຈະສິ້ນສຸດລົງໃນມື້ທີ່ການປະກາດຖອນຕົວສຸດທ້າຍມີຜົນສັກສິດ.

## ມາດຕາ XVI

ທຸກລັດພາຄີມີສິດຍື່ນຂໍ້ສະເໜີ ເພື່ອດັດແປງສົນທິສັນຍາສະບັບນີ້ຄືນໃໝ່ໄດ້ທຸກເວລາ ໂດຍແຈ້ງຈຸດປະສົງເປັນລາຍລັກອັກສອນໄປຍັງເລຂາທິການໃຫຍ່ ສະມັດຊາໃຫຍ່ຈະຕົກລົງບາດກ້າວດຳເນີນການ, ຖ້າມີ, ເພື່ອຕອບສະໜອງຕາມການສະເໜີດັ່ງກ່າວ.

## ມາດຕາ XVII

ເລຂາທິການໃຫຍ່ສະຫະປະຊາຊາດຈະແຈ້ງໃຫ້ທຸກໆ, ປະເທດສະມາຊິກສະຫະປະຊາຊາດ ແລະ ບໍ່ແມ່ນສະມາຊິກສະຫະປະຊາຊາດທີ່ບົ່ງໄວ້ໃນມາດຕາ XI ກ່ຽວກັບເລື່ອງຕ່າງໆ ລຸ່ມນີ້:

(ກ) ການລົງນາມ, ການໃຫ້ສັດຕະຍາບັນ ແລະ ການເຂົ້າຮ່ວມເປັນພາຄີມາດຕາ XI.

(ຂ) ການແຈ້ງໃຫ້ຊາບຕາມມາດຕາ XII.

(ຄ) ວັນທີທີ່ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້ຕາມມາດຕາ XIII.

(ງ) ການປະກາດຖອນຕົວຕາມມາດຕາ XIV.

(ຈ) ການຍົກເລີກສົນທິສັນຍາຕາມມາດຕາ XV.

(ສ) ການແຈ້ງໃຫ້ຊາບຕາມມາດຕາ XVI.

**<u>ມາດຕາ XVIII</u>**

ສະບັບຕົ້ນຂອງສົນທິສັນຍານີ້ ຈະຖືກເກັບຮັກສາໄວ້ໃນຫ້ອງສາລະບັນຂອງສະຫະປະຊາຊາດ ສໍາເນົາສົນທິສັນຍາທີ່ໄດ້ຮັບການຢັ້ງຢືນນັ້ນຈະສົ່ງໃຫ້ປະເທດສະມາຊິກ ແລະ ບໍ່ແມ່ນສະມາຊິກສະຫະປະຊາຊາດຕາມທີ່ໄດ້ບົ່ງໄວ້ໃນມາດຕາ XI.

**<u>ມາດຕາ XIX</u>**

ສົນທິສັນຍາສະບັບນີ້ ຈະລົງທະບຽນໂດຍເລຂາທິການໃຫຍ່ສະຫະປະຊາຊາດ ໃນວັນທີທີ່ສົນທິສັນຍາເລີ່ມມີຜົນບັງຄັບໃຊ້.

--------------------000-------------------

# ສົນທິສັນຍາ ວ່າດ້ວຍ ສິດທາງດ້ານການເມືອງຂອງແມ່ຍິງ.

---

*ເປີດຮັບການລົງນາມ ແລະ ການໃຫ້ສັດຕະຍາບັນຕາມຍັດຕິຂອງສະມັດຊາໃຫຍ່*
*ສະຫະປະຊາຊາດ ເລກທີ 640 (VII) ລົງວັນທີ 20 ມັງກອນ 1952*
*ເລີ່ມມີຜົນບັງຄັບໃຊ້: 7 ກໍລະກົດ 1954 ໂດຍສອດຄ່ອງກັບມາດຕາ VI*
*ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າຮ່ວມເປັນພາຄີ: 28 ມັງກອນ 1969*

## *ອາລໍາພະບົດ*

***ໂດຍປາຖະໜາ*** ຢາກປະຕິບັດຫຼັກການແຫ່ງສິດສະເໝີພາບ ລະຫວ່າງ ຍິງ ແລະ ຊາຍ ຊຶ່ງລະບຸໄວ້ໃນກົດບັດສະຫະປະຊາຊາດ,

***ໂດຍຮັບຮູ້ວ່າ*** ທຸກຄົນມີສິດເຂົ້າຮ່ວມໃນກິດຈະການປົກຄອງປະເທດຂອງຕົນໂດຍກົງ ຫຼື ຜ່ານຜູ້ແທນທີ່ມາຈາກການເລືອກຕັ້ງຢ່າງເສລີ ແລະ ມີສິດເຂົ້າຮ່ວມໃຊ້ວຽກງານລັດຖະການຂອງປະເທດຕົນ ໃນເງື່ອນໄຂເທົ່າທຽມກັນ ແລະ ປະຕິບັດສິດທິທາງການເມືອງ ໂດຍສອດຄ່ອງກັບກົດບັດສະຫະປະຊາຊາດ ແລະ ຖະແຫຼງການສາກົນ ວ່າດ້ວຍ ສິດທິມະນຸດ,

***ໂດຍໄດ້*** ຕົກລົງກັນເຮັດສົນທິສັນຍາ ເພື່ອຈຸດປະສົງດັ່ງກ່າວນັ້ນ, ດັ່ງນັ້ນ ລັດພາຄີໄດ້ຕົກລົງດັ່ງນີ້:

**<u>ມາດຕາ I</u>**

ແມ່ຍິງຈະຕ້ອງໄດ້ຮັບສິດລົງຄະແນນສຽງໃນທຸກການເລືອກຕັ້ງພາຍໃນເງື່ອນໄຂເທົ່າທຽມກັບຜູ້ຊາຍໂດຍປາສະຈາກການຈໍາແນກໃດໆ ທັງສິ້ນ.

**<u>ມາດຕາ II</u>**

ແມ່ຍິງຈະຕ້ອງມີສິດສະໝັກຮັບເລືອກຕັ້ງ ເຂົ້າໃນທຸກອົງການທີ່ມາຈາກການເລືອກຕັ້ງຢ່າງເປີດເຜີຍຕາມກົດໝາຍ ໃນເງື່ອນໄຂເທົ່າທຽມກັນກັບຜູ້ຊາຍ ໂດຍປາສະຈາກການຈໍາແນກໃດໆ ທັງສິ້ນ.

**<u>ມາດຕາ III</u>**

ແມ່ຍິງຈະຕ້ອງມີສິດກໍາຕໍາແໜ່ງທາງລັດຖະການ ແລະ ປະຕິບັດທຸກໜ້າທີ່ທາງລັດຖະບານຕາມກົດໝາຍ ໃນເງື່ອນໄຂເທົ່າທຽມກັນກັບຜູ້ຊາຍ ໂດຍປາສະຈາກການຈໍາແນກໃດໆທັງສິ້ນ.

## ມາດຕາ IV

1. ສິນທິສັນຍາສະບັບນີ້ ຈະເປີດຮັບການລົງນາມຂອງຜູ້ຕາງໜ້າຂອງທຸກປະເທດສະມາຊິກສະຫະປະຊາຊາດ ແລະ ຜູ້ຕາງໜ້າຂອງປະເທດທີ່ໄດ້ຮັບການເຊື້ອເຊີນໂດຍສະມັດຊາໃຫຍ່.
2. ສິນທິສັນຍາສະບັບນີ້ ຕ້ອງໄດ້ຮັບການໃຫ້ສັດຕະຍາບັນ ແລະ ສານສັດຕະຍາບັນຈະຕ້ອງໄດ້ເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະຊາຊາດ.

## ມາດຕາ V

1. ສິນທິສັນຍາສະບັບນີ້ ຈະເລີ່ມມີຜົນບັງຄັບໃຊ້ໃນມື້ທີ ເກົ້າສິບ ພາຍຫຼັງວັນຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີຫົກ.
2. ສຳລັບ ລັດທີ່ໄດ້ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີພາຍຫຼັງມີການຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີຫົກແລ້ວສິນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຕໍ່ລັດດັ່ງກ່າວ ໃນມື້ທີ ເກົ້າສິບ ພາຍຫຼັງການຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີໂດຍລັດດັ່ງກ່າວ.

## ມາດຕາ VII

ໃນກໍລະນີລັດໃດໜຶ່ງ ຫາກສະເໜີຂໍ້ສະຫງວນກ່ຽວກັບມາດຕາໃດໜຶ່ງຂອງສິນທິສັນຍາສະບັບນີ້ ໃນເວລາລົງນາມ, ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ, ເລຂາທິການໃຫຍ່ຈະຕ້ອງສົ່ງຂໍ້ສະຫງວນໄປໃຫ້ທຸກລັດພາຄີ ຫຼື ທີ່ອາດຈະເປັນພາຄີຂອງສິນທິສັນຍາສະບັບນີ້. ລັດພາຄີໃດທີ່ປະຕິເສດຂໍ້ສະຫງວນນັ້ນ ສາມາດແຈ້ງໃຫ້ເລຂາທິການໃຫຍ່ຊາບ ພາຍໃນເກົ້າສິບວັນນັບແຕ່ມື້ໄດ້ຮັບເນື້ອໃນຂໍ້ສະຫງວນ (ຫຼື ໃນເວລາທີ່ລັດດັ່ງກ່າວກາຍເປັນພາຄີຂອງສິນທິສັນຍາ) ວ່າຕົນບໍ່ຍອມຮັບຂໍ້ສະຫງວນດັ່ງກ່າວ. ໃນກໍລະນີຄືແນວນັ້ນ. ສິນທິສັນຍາຈະມີຜົນບັງຄັບໃຊ້ລະຫວ່າງລັດດັ່ງກ່າວກັບລັດທີ່ເຮັດຂໍ້ສະຫງວນ.

## ມາດຕາ VIII

1. ທຸກປະເທດມີສິດຖອນຕົວຈາກສົນທິສັນຍາສະບັບນີ້ ໂດຍແຈ້ງໃຫ້ເລຂາທິການໃຫຍ່ສະຫະປະຊາຊາດຊາບຢ່າງເປັນລາຍລັກອັກສອນ. ການຖອນຕົວຈະມີຜົນສັກສິດພາຍຫຼັງ ໜຶ່ງປີ ນັບແຕ່ມື້ທີ່ເລຂາທິການໃຫຍ່ໄດ້ຮັບການແຈ້ງດັ່ງກ່າວ.
2. ຜົນບັງຄັບໃຊ້ຂອງສິນທິສັນຍາສະບັບນີ້ ຈະຍຸດຕິລົງນັບແຕ່ວັນທີທີ່ການຖອນຕົວ ຊຶ່ງເຮັດໃຫ້ຈຳນວນລັດພາຄີຫຼຸດລົງໜ້ອຍກວ່າຫົກລັດນັ້ນມີຜົນສັກສິດ.

## ມາດຕາ IX

ຂໍ້ຂັດແຍ່ງໃດໆ ທີ່ເກີດຂື້ນລະຫວ່າງສອງ ຫຼື ຫຼາຍກວ່າສອງລັດພາຄີ ກ່ຽວກັບ ການຕີຄວາມໝາຍ ຫຼື ນຳໃຊ້ສົນທິສັນຍາສະບັບນີ້ ຊຶ່ງບໍ່ສາມາດແກ້ໄຂໄດ້ໂດຍການເຈລະຈານັ້ນ ຈະຕ້ອງນຳຂຶ້ນພິຈາລະນາ, ເວັ້ນເສຍແຕ່ວ່າ ຄູ່ກໍລະນີຫາກຕົກລົງເອົາວິທີການແກ້ໄຂອື່ນ.

## ມາດຕາ X

ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງແຈ້ງໃຫ້ໝົດທຸກປະເທດສະມາຊິກ ແລະ ບໍ່ແມ່ນສະມາຊິກຂອງສະຫະປະຊາຊາດ ທີ່ບົ່ງໄວ້ໃນວັກທີ 1 ຂອງມາດຕາ IV ຂອງສົນທິສັນຍາກ່ຽວກັບເລື່ອງຕ່າງໆ ຕໍ່ລົງໄປນີ້:

(ກ) ການລົງນາມ, ການໃຫ້ສັດຕະຍາບັນ ຕາມມາດຕາ IV

(ຂ) ສານເຂົ້າຮ່ວມເປັນພາຄີຕາມມາດຕາ V

(ຄ) ວັນທີ ທີ່ສົນທິສັນຍສະບັບນີ້ມີຜົນບັງຄັບໃຊ້ຕາມມາດຕາ VI

(ງ) ການແຈ້ງຕາມມາດຕາ VII

(ຈ) ການແຈ້ງກ່ຽວກັບການຖອນຕົວຕາມວັກ 1 ຂອງມາດຕາ VIII

(ສ) ການຍົກເລີກຕາມວັກ 2 ຂອງມາດຕາ VIII

## ມາດຕາ XI

1. ສົນທິສັນຍາສະບັບນີ້ ຊຶ່ງສະບັບພາສາ ຈີນ, ອັງກິດ, ຝຣັ່ງ, ຣັດເຊຍ ແລະ ແອັດສປາຍ ທີ່ມີຄຸນຄ່າເທົ່າທຽມກັນນັ້ນ ຈະຕ້ອງຖືກເກັບຮັກສາໄວ້ຢູ່ໃນສາລະບັນຂອງສະຫະປະຊາຊາດ.
2. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງສົ່ງສະບັບສຳເນົາທີ່ໄດ້ຮັບການຢັ້ງຢືນແລ້ວໄປໃຫ້ທຸກປະເທດສະມາຊິກ ແລະ ບໍ່ແມ່ນສະມາຊິກສະຫະປະຊາຊາດຕາມທີ່ໄດ້ບົ່ງໄວ້ໃນວັກ 1 ຂອງມາດຕາ IV.

-------------------000--------------------

# ສົນທິສັນຍາສາກົນ
# ວ່າດ້ວຍ ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ

---

*ຮັບຮອງເອົາ ແລະ ເປີດຮັບການລົງນາມ ການໃຫ້ສັດຕະຍາບັນ ແລະ ການເຂົ້າຮ່ວມ*
*ເປັນພາຄີດ້ວຍຍັດຕິຂອງສະມັດຊາໃຫຍ່ສະຫະປະຊາຊາດ*
*ສະບັບເລກທີ 2200 A (21) ລົງວັນທີ 16 ທັນວາ 1966*
ເລີ່ມມີຜົນບັງຄັບໃຊ້: 3 ມັງກອນ 1976
ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງນາມ: 7 ທັນວາ 2000

## *ອາລຳພະບົດ*

***ໂດຍເຫັນວ່າ*** ຕາມຫຼັກການທີ່ບົ່ງໄວ້ໃນກົດບັດສະຫະປະຊາຊາດ ການຮັບຮູ້ກຽດສັກສີຂອງບຸກຄົນ ແລະ ສິດເສລີພາບ ແລະ ບໍ່ອາດລົບລ້າງໄດ້ຂອງສະມາຊິກທຸກຄົນໃນວົງຄະນາຍາດແຫ່ງມວນມະນຸດເປັນພື້ນຖານຂອງອິດສະລະພາບ, ຄວາມຍຸດຕິທຳ ແລະ ສັນຕິພາບໃນໂລກ;

***ໂດຍຮັບຮູ້ວ່າ*** ສິດທິເຫຼົ່ານີ້ແມ່ນມາຈາກກຽດສັກສີຂອງບຸກຄົນ;

***ໂດຍຮັບຮູ້ວ່າ*** ຕາມຖະແຫຼງການສາກົນ ວ່າດ້ວຍ ສິດທິມະນຸດ, ອຸດົມຄະຕິຂອງມະນຸດ ທີ່ມີເສລີພາບທັງຫຼາຍຢາກຊົມໃຊ້ອິດສະລະພາບດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ປາສະຈາກຄວາມຢ້ານກົວ ແລະ ທຸກຈົນນັ້ນ ຈະສາມາດບັນລຸໄດ້ກໍ່ຕໍ່ເມື່ອມີເງື່ອນໄຂທີ່ເອື້ອອຳນວຍຄວາມສະດວກ ເພື່ອໃຫ້ທຸກຄົນໄດ້ຊົມໃຊ້ສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ກໍ່ຄື ສິດທິທາງດ້ານການເມືອງ ແລະ ພົນລະເມືອງຂອງຕົນ;

***ໂດຍເຫັນວ່າ*** ພັນທະຂອງລັດພາຄີຕາມກົດບັດສະຫະປະຊາຊາດ ແມ່ນແນໃສ່ສົ່ງເສີມຄວາມເຄົາລົບ ແລະ ການປະຕິບັດສິດທິມະນຸດ ແລະ ເສລີພາບທົ່ວໄປ;

***ໂດຍສຳນຶກໄດ້ວ່າ*** ບຸກຄົນຜູ້ມີພັນທະຕໍ່ຄົນອື່ນ ແລະ ຕໍ່ວົງຄະນະຍາດທີ່ຕົນສັງກັດຢູ່ນັ້ນ ແມ່ນມີຄວາມຮັບຜິດຊອບ ໃນການຕໍ່ສູ້ ເພື່ອສົ່ງເສີມ ແລະ ເຄົາລົບສິດທິທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້;

***ບັນດາລັດພາຄີຂອງສົນທິສັນຍາສະບັບນີ້ຈຶ່ງຕົກລົງດັ່ງຕໍ່ໄປນີ້:***

## ພາກທີ I

### ມາດຕາ 1

1. ທຸກປະຊາຊາດມີສິດຕັດສິນບັນຫາດ້ວຍຕົນເອງ. ຍ້ອນສິດດັ່ງກ່າວນັ້ນເອງ, ປະຊາຊາດຕ່າງໆ ຈຶ່ງກຳນົດຖານະດ້ານການເມືອງຂອງຕົນ ແລະ ດຳເນີນການພັດທະນາທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຕົນຢ່າງເສລີ.

2. ເພື່ອຈຸດມຸ້ງໝາຍຂອງຕົນ, ທຸກໆປະເທດສາມາດຊົມໃຊ້ຢ່າງເສລີ ຄວາມອຸດົມຮັ່ງມີ ແລະ ຊັບພະຍາກອນທຳມະຊາດຂອງຕົນ ໂດຍບໍ່ແຕະຕ້ອງເຖິງພັນທະໃດໆ ຊຶ່ງເກີດຈາກການຮ່ວມມືສາກົນດ້ານເສດຖະກິດບົນພື້ນຖານຫຼັກການຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ບໍ່ແຕະຕ້ອງເຖິງພັນທະໃດໆ ຈະບໍ່ຖືກຢຶດເອົາພາຫະນະການລ້ຽງຊີບຂອງຕົນໄປໄດ້.

3. ລັດພາຄີຂອງສົນທິສັນຍາສະບັບນີ້, ລວມທັງລັດທີ່ມີຄວາມຮັບຜິດຊອບຕໍ່ອານາເຂດທີ່ບໍ່ທັນໄດ້ຮັບການປົກຄອງຕົນເອງ ແລະ ອານາເຂດພາຍໃຕ້ອາລັກຂາຂອງສະຫະປະຊາຊາດ ຈະຕ້ອງສົ່ງເສີມການປະຕິບັດຕັດສິນໂດຍຕົນເອງໃຫ້ປະກົດຜົນເປັນຈິງ ແລະ ຈະຕ້ອງເຄົາລົບສິດທີ່ດັ່ງກ່າວຕາມຂໍ້ບັນຍັດຂອງກົດບັດສະຫະປະຊາຊາດ.

## ພາກທີ II

### ມາດຕາ 2

1. ໂດຍການນຳໃຊ້ຊັບພະຍາກອນເທົ່າທີ່ຕົນມີ, ແຕ່ລະລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະດຳເນີນບາດກ້າວໂດຍຕົນເອງ ແລະ ໂດຍຜ່ານການຮ່ວມມື ແລະ ຊ່ວຍເຫຼືອຈາກສາກົນ, ໂດຍສະເພາະແລ້ວແມ່ນດ້ານເສດຖະກິດ ແລະ ເຕັກນິກ, ເພື່ອບັນລຸເທື່ອລະກ້າວການປະຕິບັດສິດທິ ທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້ ໃຫ້ປະກົດຜົນເປັນຈິງຢ່າງເຕັມສ່ວນດ້ວຍທຸກວິທີທີ່ເໝາະສົມ, ໂດຍສະເພະຢ່າງຍິ່ງລວມທັງການຮັບຮອງເອົາມາດຕະການທາງດ້ານນິຕິບັນຍັດ.

2. ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະຮັບປະກັນວ່າ ສິດທີທີ່ໄດ້ບົ່ງໄວ້ ໃນສົນທິສັນຍາສະບັບນີ້ ຈະໄດ້ຮັບການປະຕິບັດປາດສະຈາກການຈຳແນກໃດໆທັງສິ້ນ ເຊັ່ນ: ການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ຄຳເຫັນດ້ານການເມືອງ ແລະ ທັດສະນະອື່ນໆ ເຊື້ອຊາດ ຫຼື ສັງຄົມເດີມ, ຖານະທາງດ້ານສັງຄົມ, ເສດຖະກິດ, ຕົ້ນກຳເນີດ ຫຼື ຖານະດ້ານອື່ນໆ.

3. ໂດຍຄຳນຶງເຖິງສິດທິມະນຸດ ແລະ ເສດຖະກິດແຫ່ງຊາດ, ບັນດາປະເທດພວມພັດທະນາ ມີສິດກຳນົດຂອບເຂດທີ່ຕົນຈະຄ້ຳປະກັນສິດທິທາງດ້ານເສດຖະກິດ ທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້ ໃຫ້ແກ່ບຸກຄົນທີ່ບໍ່ຖືສັນຊາດຂອງຕົນ.

## ມາດຕາ 3

ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາ ທີ່ຈະຄ້ຳປະກັນສິດສະເໝີພາບ ລະຫວ່າງ ຍິງ - ຊາຍ ໃນການຊົມໃຊ້ສິດທິທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ທີ່ໄດ້ກຳນົດໄວ້ໃນສົນທິສັນຍາສະບັບນີ້.

## ມາດຕາ 4

ໃນການຊົມໃຊ້ສິດທິທີ່ລັດກຳນົດໃຫ້ຕາມສົນທິສັນຍາສະບັບນີ້ ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ວ່າ ລັດມີສິດວາງຂອບເຂດຈຳກັດ ໃສ່ສິດທິເຫຼົ່ານັ້ນໄດ້ກໍ່ຕໍ່ເມື່ອວ່າຂອບເຂດຈຳກັດເຫຼົ່ານັ້ນ ຖືກກຳນົດໂດຍກົດໝາຍ ຊຶ່ງບໍ່ຂັດກັບລັກສະນະແທ້ຈິງຂອງສິດທິເຫຼົ່ານີ້ ແລະ ເພື່ອຈຸດປະສົງໃນການປັບປຸງຊີວິດການເປັນຢູ່ທົ່ວໄປຂອງສັງຄົມປະຊາທິປະໄຕເທົ່ານັ້ນ.

## ມາດຕາ 5

1. ບໍ່ມີຂໍ້ບັນຍັດໃດໆຂອງສົນທິສັນຍາສະບັບນີ້ ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຈະໃຫ້ສິດແກ່ລັດ, ກຸ່ມຄົນ ຫຼື ບຸກຄົນໃດໜຶ່ງ ເຂົ້າຮ່ວມການເຄື່ອນໄຫວ ຫຼື ການກະທຳໃດໆ ທີ່ແນໃສ່ທຳລາຍສິດທິ ຫຼື ເສລີພາບທີ່ຮັບຮູ້ໃນສົນທິສັນຍາສະບັບນີ້ ຫຼື ແນໃສ່ຈຳກັດສິດທິເຫຼົ່ານີ້ເກີນຂອບເຂດທີ່ບົ່ງໄວ້ໃນສົນທິສັນຍາສະບັບນີ້.

2. ສຳລັບສິດທິມະນຸດອັນເປັນພື້ນຖານທີ່ຖືຮັບຮູ້ ຫຼື ໃຊ້ຢູ່ໃນລັດພາຄີຂອງສົນທິສັນຍາສະບັບນີ້ ໂດຍອີງຕາມກົດໝາຍ, ສົນທິສັນຍາ, ກົດລະບຽບ ຫຼື ຮີດຄອງປະເພນີນັ້ນບໍ່ມີຂໍ້ຈຳກັດ ຫຼື ການຫຼີກລ່ຽງໃດໆ ທີ່ຈະຖືກຍອມຮັບຍ້ອນຂໍ້ອ້າງທີ່ວ່າ ສົນທິສັນຍາສະບັບນີ້ ບໍ່ຮັບຮູ້ສິດເຫຼົ່ານັ້ນ ຫຼື ຮັບຮູ້ໃນຂອບເຂດຈຳກັດ.

# ພາກທີ III

## ມາດຕາ 6

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດທິຂອງທຸກຄົນໃນການອອກແຮງງານ ຊຶ່ງລວມທັງສິດທີ່ຈະໄດ້ຮັບກາລະໂອກາດ ເພື່ອຫາລ້ຽງຊີບດ້ວຍວຽກງານທີ່ຕົນເລືອກ ຫຼື ຮັບເອົາດ້ວຍຄວາມສະໝັກໃຈ ແລະ ລັດພາຄີ ຈະດຳເນີນບາດກ້າວທີ່ເໝາະສົມ ເພື່ອປົກປ້ອງສິດດັ່ງກ່າວນີ້.

2. ມາດຕະການຕ່າງໆ ທີ່ລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງດຳເນີນ ເພື່ອບັນລຸການປະຕິບັດສິດທິດັ່ງກ່າວຢ່າງເຕັມສ່ວນນັ້ນ ຕ້ອງປະກອບດ້ວຍການແນະນຳ ແລະ ໂຄງການຝຶກອົບຮົມທາງດ້ານເຕັກນິກ ແລະ ວິຊາຊີບ, ນະໂຍບາຍ ແລະ ເຕັກນິກ ເພື່ອບັນລຸການພັດທະນາອັນໝັ້ນທ່ຽງທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳ ກໍ່ຄືເພື່ອໃຫ້ວຽກເຮັດງານທຳຢ່າງເຕັມສ່ວນ ແລະ ມີຜະລິດຕະພາບພາຍໃຕ້ເງື່ອນໄຂທີ່ຄ້ຳປະກັນອິດສະລະພາບບົນພື້ນຖານທາງດ້ານການເມືອງ ແລະ ເສດຖະກິດຂອງບຸກຄົນ.

## ມາດຕາ 7

ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດທິຂອງທຸກໆຄົນ ທີ່ຈະໄດ້ຮັບເງື່ອນໄຂການອອກແຮງງານ ທີ່ຍຸຕິທຳ ແລະ ເອື້ອອຳນວຍ, ຊຶ່ງໂດຍສະເພາະຢ່າງຍິ່ງຈະຮັບປະກັນ:

(ກ). ການເບີກຈ່າຍຄ່າແຮງງານໃຫ້ຄົນງານທຸກຄົນ ທີ່ກຳນົດເປັນມາດຕະຖານຕ່ຳສຸດດ້ວຍ;

(i) ຄ່າແຮງງານທີ່ຍຸດຕິທຳ ແລະ ການຈ່າຍຄ່າແຮງງານແບບສະເໝີພາບສຳລັບວຽກງານທີ່ມີຄຸນຄ່າເທົ່າທຽມກັນ ໂດຍປາສະຈາກການຈຳແນກໃດໆທັງສິ້ນ, ໂດຍສະເພາະແມ່ນການຄ້ຳປະກັນ ໃຫ້ເພດຍິງໄດ້ຮັບເງື່ອນໄຂອອກແຮງງານເທົ່າທຽມກັນ.

(ii) ຊີວິດການເປັນຢູ່ທີ່ເໝາະສົມສຳລັບຊາວຜູ້ອອກແຮງງານ ແລະ ຄອບຄົວຂອງເຂົາເຈົ້າ ໂດຍສອດຄ່ອງກັບຂໍ້ບັນຍັດຂອງສົນທິສັນຍາສະບັບນີ້.

(ຂ). ເງື່ອນໄຂອອກແຮງງານທີ່ປອດໄພ ແລະ ຮັບປະກັນສຸຂະພາບ;

(ຄ). ໃຫ້ທຸກຄົນມີໂອກາດເທົ່າທຽມກັນ ໃນການເລືອກຊັ້ນຕຳແໜ່ງທີ່ເໝາະສົມໃນວຽກງານຂອງຕົນຕາມຄວາມຮູ້ຄວາມສາມາດໂດຍບໍ່ຕ້ອງພິຈາລະນາ ກ່ຽວກັບ ມາດຖານອື່ນນອກເໜືອຈາກຄວາມອາວຸໂສ ແລະ ຄວາມສາມາດ.

(ງ). ການພັກຜ່ອນຢ່ອນອາລົມ ພ້ອມດ້ວຍຈຳນວນຊົ່ວໂມງເຮັດວຽກທີ່ສົມເຫດສົມຜົນ ແລະ ການລາພັກປະຈຳປີໂດຍບໍ່ຕັດເງິນເດືອນ ທັງໄດ້ເງິນຄ່າແຮງງານໃນວັນພັກລັດຖະການອີກດ້ວຍ.

## ມາດຕາ 8

1. ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາວ່າ ຈະຄ້ຳປະກັນ:

(ກ). ສິດຂອງທຸກໆຄົນໃນການສ້າງຕັ້ງອົງການກຳມະບານຂອງຕົນ ແລະ ສິດເຂົ້າຮ່ວມໃນອົງການກຳມະບານຕາມທີ່ຕົນເລືອກ ໂດຍພຽງແຕ່ຢູ່ພາຍໃຕ້ກົດລະບຽບຂອງອົງການກຳມະບານກ່ຽວຂ້ອງເທົ່ານັ້ນ, ເພື່ອສົ່ງເສີມ ແລະ ປົກປ້ອງສິດຜົນປະໂຫຍດດ້ານເສດຖະກິດ ແລະ ສັງຄົມຂອງຜູ້ກ່ຽວ. ຫ້າມການຈຳກັດຮັດແຄບໃດໆຕໍ່ການໃຊ້ສິດທິນີ້ ນອກຈາສິ່ງທີ່ໄດ້ບັນຍັດໄວ້ໃນກົດໝາຍ ແລະ ຈຳເປັນສຳລັບສັງຄົມ ປະຊາທິປະໄຕ ເພື່ອເປັນປະໂຫຍດທາງດ້ານຄວາມໝັ້ນຄົງແຫ່ງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ເພື່ອປົກປ້ອງສິດທິ ແລະ ອິດສະລະພາບຂອງຜູ້ອື່ນ.

(ຂ). ສິດຂອງບັນດາອົງການກຳມະບານໃນການສ້າງຕັ້ງສະຫະພັນກຳມະບານ ຫຼື ສຳພັນກຳມະບານແຫ່ງຊາດດັ່ງກ່າວ ໃນການສ້າງຕັ້ງ ຫຼື ເຂົ້າຮ່ວມໃນອົງການຈັດຕັ້ງກຳມະບານສາກົນ.

(ຄ). ສິດເສລີພາບຂອງອົງການກຳມະບານ ໃນການເຄື່ອນໄຫວໂດຍປາສະຈາກຂໍ້ຈຳກັດໃດໆ ຍົກເວັ້ນຂໍ້ຈຳກັດທີ່ໄດ້ກຳນົດໄວ້ ໃນກົດໝາຍ ແລະ ຈຳເປັນສຳລັບສັງຄົມ ປະຊາທິປະໄຕ ເພື່ອຜົນປະໂຫຍດທາງດ້ານຄວາມໝັ້ນຄົງແຫ່ງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ເພື່ອປົກປ້ອງສິດທິ ແລະ ອິດສະລະພາບຂອງຄົນອື່ນ.

(ງ). ສິດທິໃນການປະທ້ວງໂດຍມີເງື່ອນໄຂວ່າ ການປະທ້ວງນັ້ນ ຕ້ອງດຳເນີນໄປໂດຍສອດຄ່ອງກັບກົດໝາຍຂອງປະເທດກ່ຽວຂ້ອງ.

2. ມາດຕານີ້ຈະບໍ່ກີດຂວາງການວາງຂໍ້ຈຳກັດທີ່ຖືກຕ້ອງຕາມກົດໝາຍ ໃສ່ກອງກຳລັງທະຫານ ຫຼື ຕຳຫຼວດ ຫຼື ເຈົ້າໜ້າທີ່ຂອງລັດ ໃນການໃຊ້ສິດທິເຫຼົ່ານີ້.
3. ບໍ່ມີຂໍ້ບັນຍັດໃດໆ ໃນມາດຕານີ້ ທີ່ຈະໃຫ້ອຳນາດໃນລັດພາຄີຂອງສົນທິສັນຍາອົງການແຮງງານສາກົນ ປີ 1948 ວ່າດ້ວຍ ເສລີພາບໃນການສ້າງຕັ້ງສະມາຄົມ ແລະ ການປົກປ້ອງສິດການສ້າງຕັ້ງກຳມະບານນັ້ນ ເອົາມາດຕະການທາງດ້ານນິຕິບັນຍັດ ເຊິ່ງຈະເປັນພານແຕະຕ້ອງ ຫຼື ນຳໃຊ້ກົດໝາຍໃນລັກສະນະທີ່ຈະແຕະຕ້ອງເຖິງການຮັບປະກັນສິດທິຕ່າງໆ ທີ່ບົ່ງໄວ້ໃນສົນທິສັນຍາສະບັບນັ້ນ.

## ມາດຕາ 9

ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດຂອງທຸກໆຄົນ ທີ່ຈະໄດ້ຮັບສະຫວັດດີການສັງຄົມ, ລວມທັງການປະກັນໄພສັງຄົມ.

## ມາດຕາ 10

ລັດພາຄີຂອງສົນທິສັນຍາສະບັບນີ້ຮັບຮູ້ວ່າ:

1. ໃນຖານະເປັນຫົວໜ່ວຍທຳມະຊາດ ແລະ ພື້ນຖານສຳຄັນຂອງສັງຄົມ, ຄອບຄົວ ຄວນຈະໄດ້ຮັບການປົກປ້ອງ ແລະ ຊ່ວຍເຫຼືອຢ່າງກວ້າງຂວາງເທົ່າທີ່ຈະເປັນໄປໄດ້ ໂດຍສະເພາະແມ່ນການສ້າງຄອບຄົວ ແລະ ໃນຄະນະທີ່ຄອບຄົວມີຄວາມຮັບຜິດຊອບຕໍ່ກັບການເບິ່ງແຍງລ້ຽງດູ ແລະ ສຶກສາເດັກນ້ອຍ.

   ການແຕ່ງງານກໍ່ຕ້ອງເປັນໄປຕາມຄວາມມັກຮັກເຫັນດີເຫັນພ້ອມ ດ້ວຍຄວາມສະໝັກໃຈຂອງຄູ່ບ່າວສາວ.
2. ແມ່ຄວນໄດ້ຮັບການປົກປ້ອງເປັນພິເສດ ໃນໄລຍະເວລາອັນເໝາະສົມກ່ອນ ແລະ ຫຼັງການເກີດລູກ. ໃນໄລຍະເວລາດັ່ງກ່າວ ແມ່ຜູ້ທີ່ເຮັດການຕ້ອງໄດ້ຮັບອະນຸຍາດພັກເກີດລູກໂດຍບໍ່ໄດ້ຕັດເງິນເດືອນ ຫຼື ໄດ້ຮັບສະຫວັດດີການອັນສົມເຫດສົມຜົນສຳລັບການລາພັກດັ່ງກ່າວ. ລັດຕ້ອງມີມາດຕະການພິເສດສຳລັບການປົກປ້ອງ ແລະ ຊ່ວຍເຫຼືອເດັກນ້ອຍ ແລະ ເຍົາວະຊົນ ໂດຍປາສະຈາກການຈຳແນກ

ໃດໆທັງສິ້ນຍ້ອນເຫດຜົນທາງຕົ້ນກຳເນີດ ຫຼື ເງື່ອນໄຂອື່ນໆ ເດັກນ້ອຍ ແລະ ເຍົາວະຊົນຕ້ອງໄດ້ຮັບການປົກປ້ອງຈາກການຂູດຮີດທາງດ້ານເສດຖະກິດ ແລະ ສັງຄົມ. ການໃຊ້ແຮງງານເດັກ ແລະ ເຍົາວະຊົນໃນວຽກງານທີ່ມີຜົນຮ້າຍຕໍ່ຈິດໃຈ ແລະ ສຸຂະພາບ ຫຼື ເປັນຕະລາຍ ຕໍ່ຊີວິດຂອງພວກເຂົາເຈົ້າ ຫຼື ມີທ່າຈະເປັນການສະກັດກັ້ນການພັດທະນາແບບປົກກະຕິຂອງພວກ ເຂົາເຈົ້ານັ້ນຄວນຖືວ່າເປັນການກະທຳທີ່ສາມາດລົງໂທດໄດ້ຕາມກົດໝາຍ.

ລັດຄວນວາງຂອບເຂດອາຍຸທີ່ອະນຸຍາດໃຫ້ອອກແຮງງານ ຊຶ່ງການໃຊ້ແຮງງານເດັກນ້ອຍຕ່ຳກວ່າອາຍຸທີ່ກຳນົດໄວ້ນັ້ນ ຄວນຖືກເກືອດຫ້າມ ແລະ ສາມາດລົງໂທດໄດ້ຕາມກົດໝາຍ.

## <u>ມາດຕາ 11</u>

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດຂອງທຸກຄົນທີ່ຈະໄດ້ຮັບມາດຕະຖານຊີວິດການເປັນຢູ່ທີ່ພຽງພໍສຳລັບຕົນເອງ ແລະ ຄອບຄົວ ນັບທັງມີອາຫານ, ເຄື່ອງນຸ່ງຫົ່ມ ແລະ ທີ່ຢູ່ອາໄສພຽງພໍ ແລະ ມີສິດ ຮັບການປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນເລື້ອຍໆ. ລັດພາຄີຈະດຳເນີນບາດກ້າວທີ່ເໝາະສົມເພື່ອຮັບປະກັນ ການປະຕິບັດສິດທີ່ດັ່ງກ່າວນີ້ໃຫ້ປະກົດຜົນເປັນຈິງ.
2. ໂດຍຮັບຮູ້ສິດທີ່ພື້ນຖານຂອງທຸກໆຄົນ ທີ່ຈະຫຼຸດພົ້ນອອກຈາກຄວາມອຶດຫິວ, ລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງເອົາມາດຕະການຕ່າງໆ ລວມທັງໂຄງການຕົວຈິງໂດຍຕົນເອງຜ່ານການຮ່ວມມືສາກົນ ຊຶ່ງເຫັນວ່າຈຳເປັນ.
   (ກ) ເພື່ອປັບປຸງວິທີການຜະລິດ, ການສະສົມ ແລະ ການແຈກຢາຍສະບຽງອາຫານ ໂດຍການນຳໃຊ້ຄວາມຮູ້ທາງດ້ານເຕັກນິກ ແລະ ວິທະຍາສາດຢ່າງເຕັມສ່ວນ, ໂດຍການເຜີຍແຜ່ຄວາມຮູ້ ກ່ຽວກັບ ຫຼັກໂພສະນາການ ແລະ ໂດຍການພັດທະນາ ແລະ ການນຳໃຊ້ຊັບພະຍາກອນທຳມະຊາດຢ່າງມີສະມັດຕະພາບສູງທີ່ສຸດ.
   (ຂ) ເພື່ອຮັບປະກັນການສະໜອງສະບຽງອາຫານຂອງໂລກຢ່າງສະໝ່ຳສະເໝີ ຕາມຄວາມຮຽກຮ້ອງຕ້ອງການ ໂດຍຄຳນຶງເຖິງບັນດາປະເທດທີ່ນຳເຂົ້າ ແລະ ບັນດາປະເທດທີ່ສົ່ງອອກສະບຽງອາຫານ.

## <u>ມາດຕາ 12</u>

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດທິຂອງທຸກໆຄົນທີ່ຈະໄດ້ຮັບມາດຕະຖານສູງສຸດທາງດ້ານສຸຂະພາບທາງກາຍ ແລະ ຈິດໃຈເທົ່າທີ່ຈະສາມາດບັນລຸໄດ້.
2. ບັນດາມາດຕະການທີ່ລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງດຳເນີນ ເພື່ອບັນລຸການປະຕິບັດສິດດັ່ງກ່າວນີ້ໃຫ້ປະກົດຜົນເປັນຈິງຢ່າງເຕັມສ່ວນນັ້ນ ຈະປະກອບດ້ວຍມາດຕະການທີ່ຈຳເປັນເພື່ອ:
   (ກ) ການຫຼຸດຜ່ອນອັດຕາການຕາຍຂອງເດັກໃນທ້ອງ ແລະ ອັດຕາການຕາຍຂອງເດັກນ້ອຍອ່ອນ ແລະ ເພື່ອການເຕີບໂຕທີ່ແຂງແຮງຂອງເດັກນ້ອຍ.

(ຂ) ການປັບປຸງຫຼັກການອານາໄມທາງດ້ານສະພາບແວດລ້ອມ ແລະ ອຸດສະຫະກຳຢ່າງຮອບດ້ານ.

(ຄ) ການປ້ອງກັນ, ປິ່ນປົວ, ແລະ ຄວບຄຸມໂລກລະບາດ, ໂລກປະຈຳທ້ອງຖິ່ນ, ໂລກທີ່ເກີດຈາກອັນຕະລາຍຂອງອາຊີບ ແລະ ໂລກອື່ນໆ.

(ງ) ການສ້າງເງື່ອນໄຂຕ່າງໆໃຫ້ທຸກຄົນທີ່ເຈັບປ່ວຍໄດ້ຮັບການປິ່ນປົວ ແລະ ເອົາໃຈໃສ່ຈາກແພດໝໍ.

## ມາດຕາ 13

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ສິດທິຂອງທຸກໆຄົນທີ່ຈະໄດ້ຮັບການສຶກສາ, ລັດພາຄີເຫັນດີເປັນເອກະພາບກັນວ່າ ການສຶກສາຕ້ອງເລັ່ງໃສ່ການພັດທະນາບຸກຄະລິກຂອງບຸກຄົນຢ່າງເຕັມສ່ວນ ແລະ ຄວາມຮູ້ສຶກເປັນກຽດໃນບຸກຄະລິກດັ່ງກ່າວ, ແລະ ຈະຕ້ອງເພີ່ມທະວີການເຄົາລົບສິດ ແລະ ອິດສະລະພາບອັນພື້ນຖານຂອງມະນຸດ. ລັດພາຄີຍັງໄດ້ເປັນເອກະພາບກັນຕື່ມອີກວ່າ ການສຶກສາ ຈະຕ້ອງເຮັດໃຫ້ໝົດທຸກຄົນສາມາດປະກອບສ່ວນຢ່າງແທ້ຈິງເຂົ້າໃນສັງຄົມທີ່ມີເສລີພາບ, ຈະສົ່ງເສີມຄວາມເຂົ້າອົກເຂົ້າໃຈກັນ, ຄວາມອົດກັ້ນ ແລະ ມິດຕະພາບລະຫວ່າງປະຊາຊາດ, ເຊື້ອຊາດ, ເຜົ່າພັນ ຫຼື ກຸ່ມສາສະໜາທັງໝົດ ທັງຈະເປັນການເພີ່ມທະວີການເຄື່ອນໄຫວຂອງສະຫະປະຊາຊາດໃນການປົກປັກຮັກສາສັນຕິພາບໂລກ.
2. ເພື່ອບັນລຸການປະຕິບັດສິດທິດັ່ງກ່າວ ໃຫ້ປະກົດຜົນເປັນຈິງຢ່າງເປັນສ່ວນ, ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ວ່າ:

(ກ). ການສຶກສາຂັ້ນປະຖົມຈະຕ້ອງເປັນການສຶກສາພາກບັງຄັບ, ແລະ ເປີດຮັບທຸກຄົນ ໂດຍບໍ່ຕ້ອງເສຍຄ່າ.

(ຂ). ການສຶກສາຂັ້ນມັດທະຍົມໃນຫຼາຍຮູບແບບ ທີ່ແຕກຕ່າງກັນລວມທັງອາຊີວະສຶກສາ ແລະ ການຊ່າງຂັ້ນກາງນັ້ນຈະຕ້ອງເຮັດໃຫ້ດີ ແລະ ສາມາດເຂົ້າຮຽນໄດ້ໂດຍທົ່ວໄປ ສຳລັບ ທຸກຄົນດ້ວຍທຸກວິທີທີ່ເໝາະສົມ ແລະ ສະເພາະຢ່າງຍິ່ງດ້ວຍການປະຕິບັດລະບົບການສຶກສາບໍ່ເສຍຄ່າເທື່ອລະກ້າວ.

(ຄ). ການສຶກສາຂັ້ນສູງຈະຕ້ອງເຮັດໃຫ້ສາມາດເຂົ້າຮຽນໄດ້ຢ່າງສະເໝີພາບ ສຳລັບ ໝົດທຸກຄົນບົນພື້ນຖານຄວາມສາມາດຕົວຈິງ ແລະ ໂດຍໃຊ້ທຸກວິທີທີ່ເໝາະສົມໂດຍສະເພາະຢ່າງຍິ່ງດ້ວຍການປະຕິບັດລະບົບການສຶກສາແບບບໍ່ເສຍຄ່າເທື່ອລະກ້າວ.

(ງ). ການສຶກສາຂັ້ນພື້ນຖານຈະຕ້ອງໄດ້ຮັບການຊຸກຍູ້ ຫຼື ເລັ່ງລັດເທົ່າທີ່ເປັນໄປໄດ້ສຳລັບຜູ້ທີ່ຍັງບໍ່ທັນສຳເລັດການສຶກສາຂັ້ນປະຖົມ.

(ຈ). ການພັດທະນາລະບົບໂຮງຮຽນໃນທຸກລະດັບຈະຕ້ອງດຳເນີນຢ່າງຕັ້ງໜ້າ, ລະບົບການໃຫ້ທຶນສຶກສາທີ່ສົມເຫດສົມຜົນແກ່ນັກຮຽນນັກສຶກສານັ້ນ ຈະຕ້ອງຖືກສ້າງຂຶ້ນ, ແລະ ເງື່ອນໄຂດ້ານວັດຖຸຂອງຄູອາຈານຕ້ອງໄດ້ຮັບການປັບປຸງໃຫ້ດີຂຶ້ນເລື້ອຍໆ.

3. ລັດພາຄີຂອງສົນທິສັນຍາສະບັບນີ້ໃຫ້ຄຳໝັ້ນສັນຍາທີ່ຈະເຄົາລົບອິດສະລະພາບຂອງພໍ່ແມ່, ແລະ ຜູ້ປົກຄອງຕາມກົດໝາຍ, ຊຶ່ງປະຕິບັດຕາມມາດຕະການການສຶກສາຕ່ຳສຸດທີ່ລັດວາງອອກ ຫຼື ອະນຸຍາດໃຫ້ ແລະ ໃຫ້ການຮັບປະກັນການສຶກສາດ້ານສາສະໜາ ແລະ ຈັນຍາທຳໃຫ້ແກ່ລູກຫຼານຂອງຕົນຕາມການເຊື່ອຖືຂອງເຂົາເຈົ້າເອງ.
4. ບໍ່ມີສ່ວນໃດຂອງມາດຕານີ້ ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຈະເປັນການແຊກແຊງເສລີພາບຂອງບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ໃນການສ້າງຕັ້ງ ແລະ ຊີ້ນຳບັນດາສະຖາບັນການສຶກສາ, ຊຶ່ງຈະຕ້ອງປະຕິບັດຕາມຫຼັກການທີ່ໄດ້ກຳນົດໄວ້ໃນວັກ 1 ຂອງມາດຕານີ້ຢູ່ສະເໝີ ແລະ ຕ້ອງຕອບສະໜອງຕາມຂໍ້ຮຽກຮ້ອງທີ່ວ່າ ການສຶກສາໃນສະຖາບັນເຫຼົ່ານັ້ນ ຕ້ອງໄດ້ມາດຕະຖານຕ່ຳສຸດທີ່ລັດວາງອອກ.

## ມາດຕາ 14

ແຕ່ລະລັດພາຄີຂອງສົນທິສັນຍາສະບັບນີ້, ຊຶ່ງໃນເວລາເຂົ້າເປັນພາຄີຍັງບໍ່ທັນສາມາດຮັບປະກັນການສຶກສາຂັ້ນປະຖົມໃນດິນແດນ ຫຼືໃນເຂດແຄ້ວນອື່ນທີ່ຢູ່ພາຍໃຕ້ອຳນາດສານຂອງຕົນເປັນການສຶກສາພາກບັງຄັບໂດຍບໍ່ເສຍຄ່ານັ້ນ, ໃຫ້ຄຳໝັ້ນສັນຍາທີ່ຈະດຳເນີນການຄົ້ນຄວ້າ ແລະ ຮັບຮອງເອົາແຜນງານລະອຽດໃຫ້ແລ້ວພາຍໃນ 2 ປີ ເພື່ອປະຕິບັດຫຼັກການການສຶກສາພາກບັງຄັບໂດຍບໍ່ເສຍຄ່າສຳລັບທຸກຄົນ. ແຜນງານນີ້ຕ້ອງປະຕິບັດໃຫ້ສຳເລັດໃນກຳນົດເວລາທີ່ສົມເຫດສົມຜົນຕາມທີ່ໄດ້ກຳນົດໄວ້ໃນນັ້ນ.

## ມາດຕາ 15

1. ລັດພາຄີຂອງສົນທິສັນຍາສະບັບນີ້ຮັບຮູ້ສິດຂອງທຸກຄົນ:
(ກ). ໃນການເຂົ້າຮ່ວມຊີວິດວັດທະນະທຳ;
(ຂ). ໄດ້ຮັບປະໂຫຍດຈາກຄວາມກ້າວໜ້າດ້ານວິທະຍາສາດ ແລະ ຈາກການນຳໃຊ້ຜົນສຳເລັດດ້ານດັ່ງກ່າວ;
(ຄ). ໄດ້ຮັບປະໂຫຍດຈາກການປົກປ້ອງສິດຜົນປະໂຫຍດທາງດ້ານວັດຖຸ ແລະ ຈິດໃຈອັນເກີດມາຈາກຜົນຜະລິດທາງວິທະຍາສາດ, ສິນລະປະ, ວັນນະຄະດີ ຊຶ່ງແມ່ນຜູ້ກ່ຽວເປັນຜູ້ປະດິດຄິດແຕ່ງ.
2. ມາດຕະການຕ່າງໆທີ່ລັດພາຄີຂອງສົນທິສັນຍາສະບັບນີ້ຈະຕ້ອງດຳເນີນ ເພື່ອບັນລຸການປະຕິບັດສິດທິນີ້ ໃຫ້ປາກົດຜົນເປັນຈິງຢ່າງເຕັມສ່ວນນັ້ນ ຈະຕ້ອງປະກອບດ້ວຍບັນດາມາດຕະການທີ່ຈຳເປັນໃນການອະນຸລັກ. ພັດທະນາ ແລະ ການເຜີຍແຜ່ວິທະຍາສາດ ແລະ ວັດທະນະທຳ.
3. ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະເຄົາລົບອິດສະລະພາບອັນຂາດບໍ່ໄດ້ ສຳລັບ ການຄົ້ນຄວ້າວິທະຍາສາດ ແລະ ກິດຈະກຳປະດິດຄິດແຕ່ງ.
4. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບຮູ້ຜົນປະໂຫຍດທີ່ຈະໄດ້ຮັບຈາກການຊຸກຍູ້ ແລະ ການເສີມຂະຫຍາຍການພົວພັນ ແລະ ການຮ່ວມມືສາກົນໃນຂົງເຂດວິທະຍາສາດ ແລະ ວັດທະນະທຳ.

## ພາກທີ IV

### ມາດຕາ 16

1. ລັດພາຄີຂອງສົນທິສັນຍາສະບັບນີ້ໃຫ້ຄຳໝັ້ນສັນຍາ ຈະສົ່ງບົດລາຍງານກ່ຽວກັບມາດຕະການທີ່ຕົນໄດ້ຮັບຮອງເອົາ ແລະ ຄວາມຄືບໜ້າໃນການປະຕິບັດສິດທິຕ່າງໆ ທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້ ໂດຍສອດຄ່ອງກັບຂໍ້ບັນຍັດຂອງພາກນີ້.
2. (ກ). ທຸກໆບົດລາຍງານຈະຕ້ອງຖືກນຳສະເໜີຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ, ຊຶ່ງຜູ້ກ່ຽວຈະສົ່ງສຳເນົາຂອງບົດລາຍງານນັ້ນໃຫ້ສະພາເສດຖະກິດ ແລະ ສັງຄົມ ເພື່ອພິຈາລະນາຕາມຂໍ້ບັນຍັດຂອງສົນທິສັນຍາສະບັບນີ້.

   (ຂ). ເລຂາທິການໃຫຍ່ສະຫະປະຊາຊາດຍັງຈະຕ້ອງສົ່ງສຳເນົາບົດລາຍງານຈາກລັດພາຄີຂອງສົນທິສັນຍາສະບັບນີ້ ຫຼື ບາງຕອນຂອງບົດລາຍງານດັ່ງກ່າວ ໃຫ້ອົງການວິຊາສະເພາະທີ່ກ່ຽວຂ້ອງ ຊຶ່ງບັນດາລັດດັ່ງດ່າວນີ້ ໄດ້ເປັນສະມາຊິກເນື່ອງຈາກວ່າ ບົດລາຍງານ ຫຼື ບາງຕອນຂອງບົດລາຍງານນັ້ນ ມີສ່ວນພົວພັນເຖິງບັນຫາຕ່າງໆ ທີ່ນອນຢູ່ໃນຂອບເຂດຄວາມຮັບຜິດຊອບຂອງບັນດາອົງການວິຊາສະເພາະທີ່ໄດ້ກ່າວມານັ້ນຕາມທຳມະນູນຂອງອົງການເຫຼົ່ານັ້ນ.

### ມາດຕາ 17

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງຍື່ນບົດລາຍງານຂອງຕົນເປັນໄລຍະ ໂດຍສອດຄ່ອງກັບແຜນການທີ່ຈະຖືກສ້າງຂຶ້ນໂດຍສະພາເສດຖະກິດ ແລະ ສັງຄົມພາຍໃນ 1 ປີ ນັບແຕ່ມື້ທີ່ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້ ແລະ ພາຍຫຼັງທີ່ໄດ້ມີການປຶກສາຫາລືກັບບັນດາລັດພາຄີ ແລະ ບັນດາອົງການວິຊາສະເພາະທີ່ກ່ຽວຂ້ອງ.
2. ບົດລາຍງານນັ້ນອາດຈະຊີ້ແຈງເຖິງຄວາມຫຍຸ້ງຍາກ ແລະ ປັດໄຈຕ່າງໆ ທີ່ສົ່ງຜົນກະທົບໃສ່ລະດັບການປະຕິບັດພັນທະທີ່ສົນທິສັນຍານີ້ກຳນົດໄວ້.
3. ຖ້າຫາກວ່າ ລັດພາຄີໃດໜຶ່ງເຄີຍໄດ້ສົ່ງຂໍ້ມູນທີ່ກ່ຽວຂ້ອງໃຫ້ອົງການສະຫະປະຊາຊາດ ຫຼື ໃຫ້ອົງການວິຊາສະເພາະມາກ່ອນແລ້ວລັດດັ່ງກ່າວກໍບໍ່ຈຳເປັນສະເໜີຂໍ້ມູນນັ້ນຄືນອີກ, ພຽງແຕ່ອ້າງເຖິງຂໍ້ມູນນັ້ນ ຢ່າງຊັດເຈນຕາມທີ່ໄດ້ລາຍງານໃຫ້ອົງການສະຫະປະຊາຊາດ ຫຼື ອົງການວິຊາສະເພາະທີ່ກ່ຽວຂ້ອງກໍ່ພໍແລ້ວ.

### ມາດຕາ 18

ໂດຍປະຕິບັດຕາມຄວາມຮັບຜິດຊອບຂອງຕົນພາຍໃຕ້ກົດບັດສະຫະປະຊາຊາດ ໃນຂົງເຂດສິດທິມະນຸດ ແລະ ອິດສະລະພາບອັນພື້ນຖານ, ສະພາເສດຖະກິດ ແລະ ສັງຄົມ ອາດຈະວາງແຜນຮ່ວມກັບບັນດາອົງການວິຊາສະເພາະ ກ່ຽວກັບ ການລາຍງານຂອງບັນດາອົງການດັ່ງກ່າວຕໍ່ສະພາເສດຖະກິດ ແລະ ສັງ

ຄົມກ່ຽວກັບຄວາມຄືບໜ້າ ໃນການປະຕິບັດຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ທີ່ນອນຢູ່ໃນຂອບເຂດການເຄື່ອນໄຫວຂອງອົງການວິຊາສະເພາະກ່ຽວກັບການຈັດຕັ້ງປະຕິບັດ ຊຶ່ງອົງກອນທີ່ມີສິດອຳນາດກ່ຽວຂ້ອງຂອງອົງການວິຊາສະເພາະນັ້ນໄດ້ຮັບຮອງເອົາ.

## <u>ມາດຕາ 19</u>

ສະພາເສດຖະກິດ ແລະ ສັງຄົມອາດຈະສົ່ງບົດລາຍງານທີ່ກ່ຽວຂ້ອງກັບສິດທິມະນຸດທີ່ໄດ້ຮັບຈາກບັນດາລັດພາຄີຕາມມາດຕາ 16 ແລະ 17 ແລະ ຈາກບັນດາອົງການວິຊາສະເພາະຕາມມາດຕາ 18 ໃຫ້ຄະນະກຳມາທິການສິດທິມະນຸດ ເພື່ອຄົ້ນຄວ້າ ແລະ ໃຫ້ຂໍ້ສະເໜີແນະທົ່ວໄປ ຫຼື ເພື່ອເປັນຂໍ້ມູນຂ່າວສານຕາມທີ່ເໝາະສົມ.

## <u>ມາດຕາ 20</u>

ລັດພາຄີຂອງສົນທິສັນຍາສະບັບນີ້ ແລະ ບັນດາອົງການວິຊາສະເພາະທີ່ກ່ຽວຂ້ອງ ສາມາດສະເໜີຄຳເຫັນຂອງຕົນຕໍ່ສະພາເສດຖະກິດ ແລະ ສັງຄົມ ກ່ຽວກັບ ຂໍ້ສະເໜີແນະທົ່ວໄປໃດໆຕາມມາດຕາ 19 ຫຼື ກ່ຽວກັບ ຂໍ້ສະເໜີແນະທົ່ວໄປໃນບົດລາຍງານໃດໜຶ່ງຂອງຄະນະກຳມາທິການສິດທິມະນຸດ ຫຼື ເອກະສານໃດໜຶ່ງໄດ້ອ້າງເຖິງຢູ່ໃນບົດລາຍງານດັ່ງກ່າວ.

## <u>ມາດຕາ 21</u>

ສະພາເສດຖະກິດ ແລະ ສັງຄົມຈະສົ່ງບົດລາຍງານຂອງຕົນເປັນແຕ່ລະໄລຍະ ໃຫ້ສະມັດຊາໃຫຍ່ສະຫະປະຊາຊາດ ໂດຍມີຂໍ້ສະເໜີແນະຕ່າງໆທີ່ມີລັກສະນະທົ່ວໄປ ແລະ ບົດສະຫຼຸບຫຍໍ້ ກ່ຽວກັບ ຂໍ້ມູນທີ່ໄດ້ຮັບຈາກລັດພາຄີຂອງສົນທິສັນຍາສະບັບນີ້ ແລະ ຈາກບັນດາອົງການວິຊາສະເພາະ ກ່ຽວກັບ ມາດຕະການທີ່ໄດ້ດຳເນີນ ແລະ ຄວາມຄືບໜ້າໃນການປະຕິບັດສິດທິທີ່ຖືກຮັບຮູ້ຢູ່ໃນສົນທິສັນຍາສະບັບນີ້.

## <u>ມາດຕາ 22</u>

ສະພາເສດຖະກິດ ແລະ ສັງຄົມ ອາດຈະແຈ້ງໃຫ້ອົງກອນອື່ນໆຂອງສະຫະປະຊາຊາດພ້ອມດ້ວຍອົງການທີ່ຂຶ້ນກັບອົງກອນເຫຼົ່ານັ້ນ ແລະ ອົງການວິຊາສະເພາະທີ່ໃຫ້ການຊ່ວຍເຫຼືອດ້ານເຕັກນິກຊາບ ກ່ຽວກັບ ທຸກໆບັນຫາທີ່ປະກົດຂຶ້ນໃນບົດລາຍງານຕ່າງໆ ທີ່ບົ່ງໄວ້ໃນພາກນີ້ຂອງສົນທິສັນຍາສະບັບນີ້, ຊຶ່ງອາດຈະຊ່ວຍແຕ່ລະອົງການເຫຼົ່ານັ້ນ ໃນການຕົກລົງຢູ່ໃນຂົງເຂດທີ່ຕົນຮັບຜິດຊອບກ່ຽວກັບສົນທິສັນຍາສະບັບນີ້ຢ່າງມີປະສິດທິຜົນເທື່ອລະກ້າວ.

## ມາດຕາ 23

ລັດພາຄີຂອງສົນທິສັນຍາສະບັບນີ້ ເຫັນດີເຫັນພ້ອມນຳກັນວ່າ ການເຄື່ອນໄຫວຂອງສາກົນ ເພື່ອບັນລຸການປະຕິບັດສິດທິທີ່ຖືກຮັບຮູ້ ໃນສົນທິສັນຍາສະບັບນີ້ຈະປະກອບດ້ວຍວິທີການຕ່າງໆເຊັ່ນ: ການເຮັດສົນທິສັນຍາ, ການຮັບຮອງເອົາຂໍ້ສະເໜີແນະຕ່າງໆ ການໃຫ້ການຊ່ວຍເຫຼືອດ້ານເຕັກນິກ ແລະ ການຈັດກອງປະຊຸມໃນລະດັບພາກນີ້ ແລະ ກອງປະຊຸມວິຊາການ ເພື່ອປຶກສາຫາລື ແລະ ສຶກສາຄົ້ນຄວ້າ ໂດຍມີການສົມທົບກັບລັດຖະບານທີ່ກ່ຽວຂ້ອງ.

## ມາດຕາ 24

ບໍ່ມີຂໍ້ບັນຍັດໃດໆໃນສົນທິສັນຍາສະບັບນີ້ ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຈະເປັນການທຳລາຍບັນດາຂໍ້ບັນຍັດຂອງກົດບັດສະຫະປະຊາຊາດ ແລະ ທຳມະນູນຂອງບັນດາອົງການວິຊາສະເພາະ ຊຶ່ງກຳນົດຄວາມຮັບຜິດຊອບຂອງອົງການວິຊາສະເພາະ ແລະ ອົງການຕ່າງໆຂອງສະຫະປະຊາຊາດ ໃນເລື່ອງທີ່ກ່ຽວຂ້ອງກັບບັນຫາຕ່າງໆ ທີ່ບົ່ງໄວ້ໃນສົນທິສັນຍາສະບັບນີ້.

## ມາດຕາ 25

ບໍ່ມີຂໍ້ບັນຍັດໃດໆໃນສົນທິສັນຍາສະບັບນີ້ ຈະຖືກຕີຄວາມໝາຍໄປໃນທາງທີ່ຈະເປັນການທຳລາຍສິດທີ່ມີມາໂດຍກຳເນີດຂອງທຸກໆປະຊາຊົນຄື ສິດເປັນເຈົ້າຂອງ ແລະ ນຳໃຊ້ຄວາມຮັ່ງມີ ແລະ ຊັບພະຍາກອນທຳມະຊາດຂອງເຂົາເຈົ້າຢ່າງເຕັມສ່ວນ ແລະ ຢ່າງມີເສລີພາບ.

# ພາກທີ V

## ມາດຕາ 26

1. ສົນທິສັນຍາສະບັບນີ້ ເປີດຮັບການລົງນາມຂອງລັດສະມາຊິກຂອງສະຫະປະຊາຊາດ ຫຼື ຂອງອົງການວິຊາສະເພາະຂອງສະຫະປະຊາຊາດ, ລັດພາຄີຂອງທຳມະນູນສານຍຸຕິທຳສາກົນ ແລະ ລັດອື່ນໆ ທີ່ຖືກເຊື້ອເຊີນໂດຍສະມັດຊາໃຫຍ່ສະຫະປະຊາຊາດ ເພື່ອເຂົ້າເປັນພາຄີຂອງສົນທິສັນຍາສະບັບນີ້.
2. ສົນທິສັນຍາສະບັບນີ້ ຕ້ອງໄດ້ຮັບການໃຫ້ສັດຕະຍາບັນ, ສານສັດຕະຍາບັນຈະຕ້ອງຖືກເກັບຮັກສາໄວ້ນຳ ເລຂາທິການໃຫຍ່ສະຫະປະຊາຊາດ.
3. ສົນທິສັນຍາສະບັບນີ້ ເປີດຮັບການເຂົ້າຮ່ວມເປັນພາຄີຂອງທຸກລັດທີ່ໄດ້ກ່າວໄວ້ໃນວັກທີ 1 ຂອງມາດຕານີ້.
4. ການເຂົ້າຮ່ວມເປັນພາຄີຈະມີຜົນສັກສິດ ດ້ວຍການຍື່ນສານເຂົ້າຮ່ວມເປັນພາຄີຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ.

5. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງແຈ້ງໃຫ້ໝົດທຸກໆລັດທີ່ໄດ້ລົງນາມ ຫຼື ໄດ້ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບນີ້ຊາບ ໃນແຕ່ລະຄັ້ງເມື່ອມີການຍື່ນສານສັດຕະຍາບານ ຫຼື ສານເຂົ້າຮ່ວມເປັນພາຄີ.

## ມາດຕາ 27

1. ສົນທິສັນຍາສະບັບນີ້ ຈະເລີ່ມມີຜົນບັງຄັບໃຊ້ຫຼັງຈາກສາມເດືອນ ແຕ່ມື້ໄດ້ມີການຍື່ອນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີສາມສິບໜ້າຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ.
2. ສຳລັບລັດທີ່ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີພາຍຫຼັງມີການຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີສາມສິບຫ້ານັ້ນແລ້ວ, ສົນທິສັນຍາສະບັບນີ້ ຈະເລີ່ມມີຜົນບັງຄັບໃຊ້ສຳລັບລັດດັ່ງກ່າວຫຼັງຈາກສາມເດືອນນັບແຕ່ມື້ທີ່ລັດດັ່ງກ່າວນັ້ນ ໄດ້ຍື່ນສານລັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີ.

## ມາດຕາ 28

ທຸກໆຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ຈະກວມເອົາດິນແດນໝົດທຸກພາກຂອງບັນດາລັດສະຫະພັນໂດຍບໍ່ມີຂໍ້ຈຳກັດ ຫຼື ຍົກເວັ້ນໃດໆທັງສິ້ນ.

## ມາດຕາ 29

1. ທຸກໆລັດພາຄີຂອງສົນທິສັນຍາສະບັບນີ້ ລ້ວນແຕ່ມີສິດສະເໜີດັດແກ້ ແລະ ຍື່ນຂໍ້ສະເໜີດັ່ງກ່າວຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ. ຈາກນັ້ນເລຂາທິການໃຫຍ່ສະຫະປະຊາຊາດຈະແຈ້ງທຸກຂໍ້ດັດແກ້ ດັ່ງກ່າວໃຫ້ລັດພາຄີຂອງສົນທິສັນຍາສະບັບນີ້ທັງຂໍຄຳເຫັນວ່າ ຄວນມີກອງປະຊຸມລັດພາຄີເພື່ອພິຈາລະນາ ແລະ ລົງຄະແນນສຽງຮັບເອົາຂໍ້ສະເໜີດັດແກ້ນັ້ນ ຫຼື ບໍ່ ໃນກໍລະນີມີໜຶ່ງສ່ວນສາມຂອງລັດພາຄີຫາກເຫັນດີເປີດກອງປະຊຸມ, ເລຂາທິການໃຫຍ່ສະຫະປະຊາຊາດຈະຮຽກໂຮມກອງປະຊຸມດັ່ງກ່າວພາຍໃຕ້ການນຳພາຂອງສະຫະປະຊາຊາດ. ຂໍ້ດັດແກ້ໃດໆທີ່ຖືກຮັບຮອງເອົາດ້ວຍຄະແນນສຽງສ່ວນຫຼາຍຂອງລັດພາຄີທີ່ມີໜ້າເຂົ້າຮ່ວມກອງປະຊຸມ ແລະ ລົງຄະແນນສຽງນັ້ນຈະຖືກນຳຂຶ້ນສະເໜີຕໍ່ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດ ເພື່ອຮັບຮອງເອົາ.
2. ຂໍ້ດັດແກ້ຈະມີຜົນບັງຄັບໃຊ້ໃນເມື່ອສະມັດຊາໃຫຍ່ສະຫະປະຊາຊາດຮັບຮອງເອົາ ແລະ ຖືກຮັບຮອງໂດຍສອງສ່ວນສາມຂອງລັດພາຄີຂອງສົນທິສັນຍາສະບັບນີ້ ໂດຍສອດຄ່ອງກັບຂັ້ນຕອນລັດຖະມະນູນຂອງຕົນ.
3. ເມື່ອໃດຂໍ້ດັດແກ້ມີຜົນບັງຄັບໃຊ້, ເມື່ອນັ້ນຂໍ້ດັດແກ້ດັ່ງກ່າວຈະມີຜົຣບັງຄັບໃຊ້ຕໍ່ລັດພາຄີທີ່ໄດ້ຮັບຮອງເອົາ. ສ່ວນລັດພາຄີອື່ນແມ່ນຍັງຖືວ່າ ຖືກຜູກມັດດ້ວຍຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ແລະທຸກຂໍ້ດັດແກ້ທີ່ລັດດັ່ງກ່າວໄດ້ຮັບຮອງເອົາຜ່ານມາ.

## ມາດຕາ 30

ໂດຍສອດຄ່ອງກັບແຈ້ງການຕາມມາດຕາ 26 ວັກ 5, ເລຂາທິການໃຫຍ່ສະຫະປະຊາຊາດ ຈະແຈ້ງໃຫ້ໝົດທຸກໆລັດທີ່ໄດ້ກ່າວໄວ້ໃນວັກ 1 ຂອງມາດຕາ 26 ຊາບ ກ່ຽວກັບເລື່ອງຕ່າງໆດັ່ງລຸ່ມນີ້.

(ກ). ການລົງນາມ, ການໃຫ້ລັດຕະຍາບັນ ແລະ ການເຂົ້າຮ່ວມເປັນພາຄີຂອງສົນທິສັນຍາພາຍໃຕ້ ມາດຕາ 26;

(ຂ). ວັນທີ ທີ່ສົນທິສັນຍາສະບັບນີ້ ມີຜົນບັງຄັບໃຊ້ຕາມມາດຕາ 27 ແລະ ວັນທີ ທີ່ຂໍ້ດັດແກ້ມີຜົນບັງຄັບໃຊ້ຕາມມາດຕາ 26.

## ມາດຕາ 31

1. ສົນທິສັນຍາສະບັບນີ້, ຊຶ່ງສະບັບພາສາຈີນ, ອັງກິດ, ຝຣັ່ງ, ຣັດເຊຍ ແລະ ແອັດສະປາຍ ລ້ວນແຕ່ມີຄຸນຄ່າເທົ່າທຽມກັນນັ້ນ ຈະຖືກເກັບຮັກສາໄວ້ຢູ່ສຳເນົາເອກະສານຂອງອົງການສະຫະປະຊາຊາດ.
2. ເລຂາທິການໃຫຍ່ສະຫະປະຊາຊາດ ຈະສົ່ງສະບັບສຳເນົາຂອງສົນທິສັນຍາສະບັບນີ້ທີ່ຢັ້ງຢືນຄວາມຖືກຕ້ອງຕາມສະບັບເດີມນັ້ນໃຫ້ໝົດທຸກໆ ລັດທີ່ໄດ້ກ່າວໄວ້ໃນມາດຕາ 26.

------------------000-------------------

# ສົນທິສັນຍາສາກົນ

# ວ່າດ້ວຍສິດທິທາງດ້ານການເມືອງ ແລະ ພົນລະເຮືອນ

---

*ຮັບຮອງເອົາ ແລະ ເປີດການຮັບລົງນາມ, ການໃຫ້ສັດຕະຍາບັນ ແລະ ເຂົ້າຮ່ວມເປັນພາຄີ*
*ດ້ວຍຍັດຕິຂອງສະມັດຊາໃຫຍ່ເລກທີ 2200 A (21), ລົງວັນທີ 16 ທັນວາ 1996*

ເລີ່ມມີຜົນບັງຄັບໃຊ້: 23 ມີນາ 1976

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລົງນາມ: 7 ທັນວາ 2000**

## *ອາລໍາພະບົດ*

***ໂດຍເຫັນວ່າ***, ຕາມຫຼັກການທີ່ບົ່ງໄວ້ໃນກົດບັດສະຫະປະຊາຊາດ, ການຮັບຮູ້ກຽດສັກສີຂອງບຸກຄົນ ແລະ ສິດເສລີພາບ ແລະ ບໍ່ອາດລຶບລ້າງໄດ້ຂອງສະມາຊິກທຸກຄົນໃນວົງຄະນາຍາດແຫ່ງມວນມະນຸດ ເປັນພື້ນຖານແຫ່ງອິດສະລະພາບ, ຄວາມຍຸຕິທໍາ ແລະ ສັນຕິພາບໃນໂລກ.

***ໂດຍຮັບຮູ້ວ່າ*** ສິດເຫຼົ່ານີ້ແມ່ນມາຈາກກຽດສັກສີຂອງບຸກຄົນ;

***ໂດຍຮັບຮູ້ວ່າ*** ຕາມຖະແຫຼງການສາກົນວ່າດ້ວຍສິດທິມະນຸດ, ອຸດົມການຂອງມະນຸດ ທີ່ມີເສລີພາບທັງຫຼາຍ ຢາກຊົມໃຊ້ອິດສະລະພາບດ້ານການເມືອງ ແລະ ດ້ານພົນລະເຮືອນ, ປາສະຈາກຄວາມຢ້ານກົວ ແລະ ທຸກຈົນນັ້ນ ຈະສາມາດບັນລຸໄດ້ກໍ່ຕໍ່ເມື່ອມີເງື່ອນໄຂທີ່ເອື້ອອໍານວຍຄວາມສະດວກເພື່ອໃຫ້ທຸກຄົນໄດ້ຊົມໃຊ້ສິດທິດ້ານການເມືອງ ແລະ ພົນລະເຮືອນກໍຄືສິດທິດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທໍາຂອງຕົນ.

***ໂດຍເຫັນວ່າ*** ພັນທະຂອງລັດພາຄີຕາມກົດບັດຂອງສະຫະປະຊາຊາດແມ່ນແນໃສ່ເພື່ອສົ່ງເສີມຄວາມເຄົາລົບ ແລະ ເສລີພາບທົ່ວໄປ.

***ໂດຍສໍານຶກໄດ້ວ່າ*** ບຸກຄົນຜູ້ມີພັນທະຕໍ່ຄົນອື່ນ ແລະ ຕໍ່ວົງຄະນາຍາດທີ່ຕົນສັງກັດຢູ່ນັ້ນ, ແມ່ນມີຄວາມຮັບຜິດຊອບໃນການຕໍ່ສູ້ ເພື່ອສົ່ງເສີມ ແລະ ເຄົາລົບສິດທິທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້,

***ບັນດາລັດພາຄີຂອງສົນທິສັນຍາສະບັບນີ້ ຈຶ່ງຕົກລົງດັ່ງຕໍ່ໄປນີ້:***

## ພາກທີ I

### ມາດຕາ 1

1. ທຸກໆປະຊາຊາດມີສິດຕັດສິນບັນຫາໂດຍຕົນເອງ, ຍ້ອນສິດດັ່ງກ່າວນັ້ນເອງ, ປະຊາຊາດຕ່າງໆຈຶ່ງກຳນົດຖານະດ້ານການເມືອງຂອງຕົນ, ແລະ ດຳເນີນການພັດທະນະທາງດ້ານເສດຖະກິດ, ສັງຄົມ ແລະ ວັດທະນະທຳຂອງຕົນຢ່າງເສລີ.
2. ເພື່ອຈຸດມຸ້ງໝາຍຂອງຕົນ ທຸກປະຊາຊາດສາມາດຊົມໃຊ້ຄວາມອຸດົມຮັ່ງມີ ແລະ ຊັບພະຍາກອນທຳມະຊາດຂອງຕົນຢ່າງເສລີພາບຖດບບໍ່ແຕະຕ້ອງເຖິງພັນທະໃດໆ ຊຶ່ງເກີດຈາກການຮ່ວມມືສາກົນດ້ານເສດຖະກິດ, ບົນພື້ນຖານຫຼັກການຕ່າງຝ່າຍຕ່າງມີຜົນປະໂຫຍດ, ແລະ ບໍ່ແຕະຕ້ອງເຖິງພັນທະໃດໆທີ່ເກີດຈາກກົດໝາຍສາກົນ, ໃນກໍລະນີໃດກໍ່ຕາມປະຊາຊົນຂອງກຸ່ມຊົນໃດໜຶ່ງຈະບໍ່ຖືກຍຶດເອົາພາຫະນະການຜະລິດເພື່ອລ້ຽງຊີບຂອງຕົນໄປໄດ້.
3. ລັດພາຄີຂອງສົນທິສັນຍາສະບັບນີ້, ລວມທັງລັດທີ່ມີຄວາມຮັບຜິດຊອບຕໍ່ອານາເຂດທີ່ບໍ່ທັນໄດ້ຮັບການປົກຄອງຕົນເອງ ແລະ ອານາເຂດພາຍໃຕ້ອາລັກຂາ, ຈະສົ່ງເສີມການປະຕິບັດສິດຕັດສິນໂດຍຕົນເອງໃຫ້ປະກົດຜົນເປັນຈິງ ແລະ ຈະເຄົາລົບສິດທີ່ດັ່ງກ່າວນີ້ຕາມຂໍ້ບັນຍັດຂອງກົດບັດສະຫະປະຊາຊາດ.

## ພາກທີ II

### ມາດຕາ 2

1. ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບປະກັນຈະເຄົາລົບ ແລະ ຄ້ຳປະກັນໃຫ້ທຸກຄົນທີ່ຢູ່ໃນດິນແດນ ແລະ ພາຍໃຕ້ຂອບເຂດອຳນາດສານຂອງຕົນ ໄດ້ຊົມໃຊ້ສິດທິທີ່ຮັບຮູ້ໃນສົນທິສັນຍາສະບັບນີ້ ໂດຍປາສະຈາກການຈຳແນກໃດໆທັງສິ້ນ ເຊັ່ນ: ການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ຄຳເຫັນດ້ານການເມືອງ ແລະ ທັດສະນະອື່ນໆ, ເຊື້ອຊາດ ຫຼື ສັງຄົມເດີມ, ຖານະດ້ານຊັບສິນ, ຕົ້ນກຳເນີດ ຫຼື ຖານະດ້ານອື່ນໆ.
2. ໃນປະເທດທີ່ມາດຕະການທາງດ້ານນິຕິບັນຍັດ ຫຼື ມາດຕະການດ້ານອື່ນບໍ່ທັນໄດ້ກຳນົດໄວ້, ລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງດຳເນີນບາດກ້າວທີ່ຈຳເປັນຕາມລະບຽບການຂອງລັດຖະທຳມະນູນຂອງຕົນ ແລະ ຕາມຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ເພື່ອເອົາມາດຕະການດ້ານນິຕິບັນຍັດ ຫຼື ມາດຕະການອື່ນໆ ທີ່ອາດມີຄວາມຈຳເປັນເພື່ອເຮັດໃຫ້ສິດທິ ທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້ມີຜົນສັກສິດ.
3. ແຕ່ລະລັດພາຄີຂອງສົນທິສັນຍາສະບັບນີ້ ຮັບປະກັນຈະ;

(ກ) ຄໍ້າປະກັນໃຫ້ທຸກໆຄົນ ທີ່ຖືກລະເມີດສິດທິ ຫຼື ເສລີພາບ ທີ່ກໍານົດໄວ້ໃນສົນທິສັນຍາສະບັບນີ້ ສາມາດຮ້ອງຮຽນຂໍຄວາມຊ່ວຍເຫຼືອທີ່ມີປະສິດທິພາບ ເຖິງແມ່ນວ່າການລະເມີດນັ້ນຈະກະທໍາ ໂດຍບຸກຄົນທີ່ປະຕິບັດຕາມໜ້າທີ່ທາງລັດຖະການກໍ່ຕາມ;

(ຂ) ຄໍ້າປະກັນວ່າ ອົງການສິດອໍານາດດ້ານຕຸລາການ, ບໍລິຫານ ຫຼື ນິຕິບັນຍັດ ຫຼື ອົງການອໍານາດອື່ນໆຂອງລະບົບກົດໝາຍລັດ, ຈະແກ້ໄຂກ່ຽວກັບສິດທິຂອງບຸກຄົນຜູ້ຮ້ອງຂໍການຊ່ວຍເຫຼືອ ແລະ ກະກຽມເອກະສານທີ່ຈໍາເປັນໃຫ້ແກ່ການດໍາເນີນຄະດີທາງຕຸລາການ.

(ຄ) ຄໍ້າປະກັນໃຫ້ອົງການທີ່ມີສິດອໍານາດກ່ຽວຂ້ອງດໍາເນີນຄະດີທາງຕຸລາການຖ້າຫາກວ່າ ຄະດີນັ້ນຫາກຖືກພິຈາລະນາ.

<u>ມາດຕາ 3</u>

ລັດພາຄີຂອງສົນທິສັນຍາສະບັບນີ້ ຮັບປະກັນຈະຄໍ້າປະກັນສິດສະເໝີພາບ ລະຫວ່າງຍິງ-ຊາຍ ໃນການຊົມໃຊ້ສິດທິດ້ານພົນລະເຮືອນ ແລະ ການເມືອງດັ່ງທີ່ໄດ້ລະບຸໄວ້ໃນສົນທິສັນຍາສະບັບນີ້.

<u>ມາດຕາ 4</u>

1. ໃນເວລາມີສະພາບການສຸກເສີນຂົ່ມຂູ່ຄວາມໝັ້ນຄົງຂອງຊາດ ຕາມທີ່ໄດ້ປະກາດຢ່າງເປັນທາງການ, ລັດພາຄີຂອງສົນທິສັນຍາສະບັບນີ້ອາດສາມາດເອົາມາດຕະການຫຼີກລ້ຽງພັນທະຂອງຕົນໃນສົນທິສັນຍາສະບັບນີ້ ໃນຂອບເຂດທີ່ຈໍາເປັນສໍາລັບສະຖານະການສຸກເສີນເທົ່ານັ້ນຫາກວ່າມາດຕະການດັ່ງກ່າວບໍ່ຂັດກັບພັນທະອື່ນໆ ພາຍໃຕ້ກົດໝາຍສາກົນ ແລະ ບໍ່ກ່ຽວຂ້ອງກັບການຈໍາແນກເຊື້ອຊາດ, ຜິວພັນ, ເພດ, ພາ ສາ, ສາສະໜາ ຫຼື ສັງຄົມເດີມ.
2. ບົດບັນຍັດຂອງມາດຕານີ້ຈະບໍ່ສ້າງການຫຼີກລ້ຽງໃດໆ ຈາກພັນທະທີ່ໄດ້ບົ່ງໄວ້ໃນມາດຕາ 6, 7, 8 (ວັກ 1 ແລະ 2), 11, 15, 16 ແລະ ມາດຕາ 18.
3. ຖ້າວ່າພາຄີໃດໜຶ່ງຂອງສົນທິສັນຍາສະບັບນີ້ ຫາກໃຊ້ສິດຫຼີກລ້ຽງຈະຕ້ອງໄດ້ແຈ້ງໃຫ້ລັດພາຄີອື່ນໆຂອງສົນທິສັນຍາສະບັບນີ້ຊາບໂດຍຜ່ານເລຂາທິການໃຫຍ່ສະຫະປະຊາຊາດວ່າ ຂໍ້ບັນຍັດໃດ ແລະ ດ້ວຍເຫດໃດທີ່ຕົນຕ້ອງທໍາການຫຼີກລ້ຽງລັດດັ່ງກ່າວຍັງຈະຕ້ອງໄດ້ແຈ້ງໃຫ້ຊາບຕື່ມອີກ ກ່ຽວກັບ ວັນເວລາທີ່ຕົນ ຈະຍົກເລີກການຫຼີກລ້ຽງພັນທະດັ່ງກ່າວ ໂດຍຜ່ານເລຂາທິການໃຫຍ່ສະຫະປະຊາຊາດຄືເກົ່າ.

<u>ມາດຕາ 5</u>

1. ບໍ່ມີບັນຍັດໃດໆຂອງສົນທິສັນຍາສະບັບນີ້ ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຈະໃຫ້ສິດແກ່ລັດ, ກຸ່ມຄົນ ຫຼື ບຸກຄົນໃດໜຶ່ງເຂົ້າຮ່ວມການເຄື່ອນໄຫວ ຫຼື ການກະທໍາໃດໆ ທີ່ແນໃສ່ທໍາລາຍສິດທິ ຫຼື

ເສລີພາບທີ່ຮັບຮູ້ໃນສົນທິສັນຍາສະບັບນີ້, ຫຼື ແນໃສ່ຈຳກັດເກີນຂອບເຂດທີ່ສົນທິສັນຍາສະບັບນີ້ອະນຸຍາດໃຫ້.

2. ສຳລັບສິດທິມະນຸດອັນພື້ນຖານທີ່ຖືກຮັບຮູ້ ຫຼື ໃຊ້ຢູ່ໃນລັດພາຄີຂອງສົນທິສັນຍາສະບັບນີ້, ໂດຍອີງຕາມກົດໝາຍ, ສົນທິສັນຍາ, ກົດລະບຽບ ຫຼື ຮີດຄອງປະເພນີບໍ່ມີຂໍ້ຈຳກັດ ຫຼື ການຫຼີກລ້ຽງໃດໆ ທີ່ຈະຖືກ ຍອມຮັບຍ້ອນຂໍ້ອ້າງທີ່ສົນທິສັນຍາສະບັບນີ້ ບໍ່ຮັບຮູ້ສິດທິເຫຼົ່ານັ້ນ ຫຼືວ່າຮັບຮູ້ໃນຂອບເຂດຈຳກັດ.

## ພາກທີ III

### ມາດຕາ 6

1. ມະນຸດທຸກຄົນມີສິດຕາມກົດທຳມະຊາດຄື ສິດມີຊີວິດ. ສິດທິອັນນີ້ ຈະຖືກປົກປ້ອງດ້ວຍກົດໝາຍ, ບໍ່ມີບຸກຄົນໃດມີສິດດັບມອດຊີວິດຂອງຜູ້ອື່ນໂດຍພາລະການ.
2. ໃນປະເທດທີ່ຍັງບໍ່ທັນໄດ້ລົບລ້າງການລົງໂທດປະຫານຊີວິດເທື່ອນັ້ນ, ການຕັດສິນລົງໂທດປະຫານຊີວິດອາດຈະນຳໃຊ້ສະເພາະແຕ່ກັບອາຊະຍາກຳຮ້າຍແຮງທີ່ສຸດເທົ່ານັ້ນ ແລະ ສອດຄ່ອງກັບກົດໝາຍທີ່ໃຊ້ໃນເວລາກະທຳຄວາມຜິດ ຊຶ່ງບໍ່ຂັດກັບຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ແລະ ສົນທິສັນຍາ ວ່າດ້ວຍ ການສະກັດກັ້ນ ແລະ ລົງໂທດອາຊະຍາກຳຂອງການດັບສູນເຊື້ອຊາດ. ການລົງໂທດດັ່ງກ່າວ ຈະຖືກປະຕິບັດໂດຍອີງໃສ່ຄຳຕັດສິນຂັ້ນສຸດທ້າຍຂອງສານທີ່ມີອຳນາດຕັດສິນ.
3. ເມື່ອໃດການຄາດຕະກຳຫາກເປັນການດັບສູນເຊື້ອຊາດ, ໃຫ້ເຂົ້າໃຈວ່າບໍ່ມີຂໍ້ບັນຍັດໃດໃນມາດຕານີ້ ທີ່ຈະໃຫ້ສິດແກ່ລັດພາຄີຂອງສົນທິສັນຍາສະບັບນີ້ ທຳການຫຼີກລ້ຽງພັນທະຂອງຕົນທີ່ບັນຍັດໄວ້ໃນສົນທິສັນຍາ ວ່າດ້ວຍ ການສະກັດກັ້ນ ແລະ ລົງໂທດອາຊະຍາກຳດັບສູນເຊື້ອຊາດ, ຈະແມ່ນດ້ວຍວິທີການໃດກໍ່ຕາມ.
4. ຈະເປັນບຸກຄົນໃດກໍ່ຕາມ ທີ່ຖືກລົງໂທດປະຫານຊີວິດ ມີສິດຂໍອະໄພຍະໂທດ ຫຼື ຜ່ອນ, ກໍລະນີໂທດກຳ, ການອະໄພຍະໂທດ ຫຼື ການຜ່ອນໂທດຈາກປະຫານຊີວິດອາດສາມາດອະນຸຍາດໃຫ້ໄດ້ໃນທຸກກໍລະນີ.
5. ຫ້າມຕັດສິນປະຫານຊີວິດບຸກຄົນທີ່ມີອາຍຸຕ່ຳກວ່າ 18 ປີ ແລະ ແມ່ມານ.
6. ບໍ່ມີຂໍ້ບັນຍັດໃດໆໃນມາດຕານີ້ ຖືກໃຊ້ເພື່ອກົດໜ່ວງ ຫຼື ສະກັດກັ້ນລົບລ້າງການລົງໂທດປະຫານຊີວິດ ໂດຍລັດພາຄີຂອງສົນທິສັນຍາສະບັບນີ້.

## ມາດຕາ 7

ບໍ່ມີບຸກຄົນໃດທີ່ຈະຖືກທໍລະມານ, ລົງໂທດແບບປ່າເຖື່ອນ ຫຼື ໄດ້ຮັບການກະທຳທີ່ໂຫດຮ້າຍ, ໄຮ້ມະນຸດສະທຳ ແລະ ເສື່ອມຊາມໂດຍສະເພາະແມ່ນຫ້າມເອົາມະນຸດເປັນເຄື່ອງທົດລອງທາງການແພດ ຫຼື ທາງວິທະຍາສາດ ທີ່ບໍ່ໄດ້ຮັບຄວາມເຫັນດີເຫັນພ້ອມຈາກຜູ້ກ່ຽວ.

## ມາດຕາ 8

1. ບໍ່ມີບຸກຄົນໃດຈະຖືກບັງຄັບໃຫ້ຢູ່ໃນຄວາມຂ້າທາດ; ລະບອບຂ້າທາດ ແລະ ການຄ້າຂ້າທາດໃນທຸກຮັບການຕ້ອງຖືກຫ້າມ.
2. ບໍ່ມີບຸກຄົນໃດ ທີ່ຈະຖືກບັງຄັບໃຫ້ເປັນທາດຮັບໃຊ້.
3. (ກ) ບໍ່ມີບຸກຄົນໃດທີ່ຈະຖືກເລັ່ງທວງໃຫ້ອອກແຮງງານໜັກແບບກົດຂີ່ ແລະ ບັງຄັບ.
   (ຂ) ຂໍ້ບັນຍັດໃນວັກ (ກ), ບໍ່ໄດ້ຫ້າມການປະຕິບັດການອອກແຮງງານໜັກຕາມການຕັດສິນຂອງສານໃນປະເທດທີ່ໃຊ້ການຈຳຄຸກ ແລະ ການອອກແຮງງານໜັກເປັນການລົງໂທດຕໍ່ການກະທຳຜິດທາງອາຍາ.
   (ຄ) ເພື່ອຈຸດປະສົງຂອງວັກນີ້ສຳນວນທີ່ວ່າ “ອອກແຮງງານໜັກແບບບັງຄັບ” ຈະບໍ່ລວມທັງ:
      1) ບຸກຄົນທີ່ເຮັດວຽກ ຫຼື ຮັບໃຊ້ທີ່ບໍ່ໄດ້ກ່າວໃນຂໍ້ (ຂ) ນັ້ນປົກກະຕິແລ້ວແມ່ນບຸກຄົນທີ່ຢູ່ໃນການກັກຂັງຕາມຄຳສັ່ງທີ່ຖືກຕ້ອງຕາມກົດໝາຍ ຫຼື ບຸກຄົນທີ່ຢູ່ໃນລະຫວ່າງທີ່ຖືກປ່ອຍຕົວແບບມີເງື່ອນໄຂ.
      2) ການຮັບໃຊ້ພັນທະທາງການທະຫານ ແລະ ການຮັບໃຊ້ຊາດແບບອື່ນທີ່ກຳນົດໄວ້ໃນກົດໝາຍ ສຳລັບ ປະເທດທີ່ຮັບຮູ້ການປະຕິເສດການຮັບໃຊ້ພັນທະທາງທະຫານຍ້ອນຂັດກັບມະໂນທຳ.
      3) ການຮັບໃຊ້ວຽກງານໃນຍາມສຸກເສີນ ຫຼື ມີໄພຂົ່ມຂູ່ຕໍ່ຊີວິດ ສະຫວັດດີພາບຂອງສັງຄົມ.
      4) ວຽກງານ ຫຼື ການຮັບໃຊ້ວຽກງານເຊິ່ງເປັນສ່ວນໜຶ່ງຂອງພັນທະປົກກະຕິຂອງພົນລະເມືອງຕໍ່ໄປ.

## ມາດຕາ 9

1. ທຸກຄົນມີສິດໄດ້ຮັບເສລີພາບ ແລະ ຄວາມປອດໄພຂອງບຸກຄົນ. ບໍ່ມີບຸກຄົນໃດຈະຖືກຄຸມຂັງໂດຍພາລະການ. ບໍ່ມີບຸກຄົນໃດຈະຖືກຕັດເສລີພາບຍົກເວັ້ນຈະເປັນໄປບົນພື້ນຖານ ແລະ ຂັ້ນຕອນຂອງກົດໝາຍ.
2. ທຸກຄົນຖືກຈັບກຸມຕ້ອງໄດ້ຮັບຊາບສາຍເຫດ ແລະ ຂໍ້ກ່າວຫາຕໍ່ຕົນເອງໃນເວລາຈັບກຸມ.

3. ບໍ່ວ່າບຸກຄົນໃດທີ່ຖືກຈັບກຸມ ຫຼື ຖືກຂັງຄຸກໂດຍຂໍ້ຫາທາງອາຍາ ຈະຕ້ອງຖືກນຳຂຶ້ນສານ ຫຼື ນຳໄປຫາເຈົ້າໜ້າທີ່ອື່ນໆ ທີ່ມີອຳນາດດ້ານຕຸລາການທັນທີ ແລະ ມີສິດໄດ້ຮັບການພິພາກສາຢູ່ສານ ພາຍໃນກຳນົດເວລາທີ່ສົມເຫດສົມຜົນ ຫຼື ໄດ້ຮັບການປ່ອຍຕົວ. ບໍ່ໃຫ້ຖືເປັນຫຼັກການທົ່ວໄປວ່າ ທຸກຄົນທີ່ຢູ່ໃນໄລຍະລໍຖ້າການພິຈາລະນາຄະດີຢູ່ສານຈະຕ້ອງຖືກກັກຂັງ, ແຕ່ການປ່ອຍຕົວຊົ່ວຄາວຈະຕ້ອງຮັບປະກັນການມີໜ້າທີ່ຢູ່ສານໃນທຸກເວລາຕະຫຼອດໄລຍະດຳເນີນຄະດີ ເພື່ອພິຈາລະນາຄະດີຕາມຄຳສັ່ງຂອງສານ.
4. ທຸກຄົນທີ່ຖືກຕັດອິດສະພາບໂດຍການຈັບກຸມ ຫຼື ກັກຂັງຈະຕ້ອງມີສິດນຳຄະດີຂອງຕົນຂຶ້ນດຳເນີນຢູ່ສານ ເພື່ອໃຫ້ສານຕັດສິນໂດຍໄວວາ ການກັກຂັງນັ້ນຖືກຕ້ອງຕາມກົດໝາຍ ຫຼື ບໍ່ຖ້າກັກຕົວບໍ່ຖືກຕ້ອງຕາມກົດໝາຍ ສານກໍ່ມີຄຳສັ່ງໃຫ້ປ່ອຍຕົວຜູ້ກ່ຽວທັນທີ.
5. ທຸກຄົນທີ່ຖືກເຄາະຮ້າຍຂອງການຈັບກຸມ ຫຼື ຄຸມຂັງ ທີ່ບໍ່ຖືກຕ້ອງຕາມກົດໝາຍລ້ວນແຕ່ມີສິດຮຽກຄ່າຊົດເຊີຍຄວາມເສຍຫາຍ.

<u>ມາດຕາ 10</u>

1. ທຸກໆຄົນທີ່ຖືກຕັດອິດສະລະພາບຕ້ອງໄດ້ຖືກປະຕິບັດຢ່າງມີມະນຸດສະທຳ ແລະ ດ້ວຍຄວາມເຄົາລົບກຽດສັກສີແຫ່ງຄວາມເປັນມະນຸດ.
2. (ກ) ເວັ້ນເສຍແຕ່ໃນກໍລະນີພິເສດ, ຜູ້ຕ້ອງຫາຖືກແຍກອອກຈາກຜູ້ທີ່ຖືກຕັດສິນໂທດແລ້ວ.

   (ຂ) ເດັກນ້ອຍຜູ້ທີ່ຖືກກ່າວຫາຕ້ອງຖືກແຍກອອກຈາກຜູ້ໃຫຍ່ ແລະ ຄະດີຂອງຜູ້ກ່ຽວຈະຖືກຕັດສິນໂດຍໄວທີ່ສຸດເທົ່າທີ່ຈະໄວໄດ້.
3. ລະບົບການດັດສ້າງຈະປະກອບດ້ວຍນະໂຍບາຍຕໍ່ນັກໂທດ ຊຶ່ງຈຸດປະສົງອັນສຳຄັນແມ່ນແນໃສ່ເຮັດໃຫ້ພວກເຂົາຫັນປ່ຽນ ແລະ ປັບຕົວເຂົ້າກັບສັງຄົມ. ເດັກນ້ອຍທີ່ທຳຄວາມຜິດຈະຖືກແຍກອອກຈາກຜູ້ໃຫຍ່ ແລະ ໄດ້ຮັບການປະຕິບັດທີ່ເໝາະສົມກັບອາຍຸ ແລະ ຖານະທາງດ້ານກົດໝາຍຂອງພວກເຂົາເຈົ້າ.

<u>ມາດຕາ 11</u>

ບໍ່ມີບຸກຄົນໃດຈະຖືກຈຳຄຸກ ດ້ວຍເຫດຜົນພຽງແຕ່ບໍ່ສາມາດປະຕິບັດພັນທະຕາມສັນຍາເທົ່ານັ້ນ.

<u>ມາດຕາ 12</u>

1. ທຸກໆຄົນທີ່ຢູ່ໃນດິນແດນຂອງລັດໃດໜຶ່ງ ໂດຍຖືກຕ້ອງຕາມກົດໝາຍ ມີສິດເສລີພາບໃນການສັນຈອນໄປມາ ແລະ ເລືອກບ່ອນຢູ່ອາໄສຂອງຕົນ.
2. ທຸກຄົນມີສິດເສລີພາບ ທີ່ຈະອອກຈາກປະເທດໃດກໍ່ໄດ້ລວມທັງປະເທດຂອງຜູ້ກ່ຽວເອງ.

3. ສິດທີ່ດັ່ງກ່າວຂ້າງເທິງຈະບໍ່ຖືກຈຳກັດຮັດແຄບໃດໆທັງສິ້ນ ເວັ້ນເສຍແຕ່ສິ່ງທີ່ຖືກກຳນົດໄວ້ໃນກົດໝາຍທີ່ມີຄວາມຈຳເປັນສຳລັບປ້ອງກັນຄວາມໝັ້ນຄົງຂອງຊາດ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາທາລະນະສຸກ ຫຼື ຈັນຍາທຳຂອງສັງຄົມ ຫຼື ສິດ ແລະ ເສລີພາບຂອງບຸກຄົນອື່ນໂດຍສອດຄ່ອງກັບສິດອື່ນໆ ທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້.
4. ທຸກຄົນຈະບໍ່ຖືກຕັດສິດໂດຍພາລະການໃນການເຂົ້າມາໃນປະເທດຂອງຕົນ.

<u>ມາດຕາ 13</u>

ຄົນຕ່າງດ້າວທີ່ອາໄສຢູ່ໃນດິນແດນຂອງລັດພາຄີຂອງສົນທິສັນຍາສະບັບນີ້ ໂດຍຖືກຕ້ອງຕາມກົດໝາຍນັ້ນຈະຖືກເນລະເທດໄດ້ກໍ່ຕໍ່ເມື່ອມີການຕັດສິນຖືກຕ້ອງຕາມກົດໝາຍ ແລະ ມີສິດທີ່ຈະຊີ້ແຈງເຫດຜົນເພື່ອຄັດຄ້ານຄຳສັ່ງເນລະເທດດັ່ງກ່າວ. ຍົກເວັ້ນກໍລະນີສຸກເສີນ ທີ່ພົວພັນເຖິງຄວາມປອດໄພແຫ່ງຊາດ, ບຸກຄົນທີ່ຖືກເນລະເທດດັ່ງກ່າວຈະຖືກອະນຸຍາດໃຫ້ສະເໜີເຫດຜົນຄັດຄ້ານການເນລະເທດ ແລະ ມີສິດທີ່ຈະສະເໜີໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ຫຼື ບຸກຄົນໂດຍສະເພາະແມ່ນຜູ້ໄດ້ຮັບການແຕ່ງຕັ້ງຈາກເຈົ້າໜ້າທີ່ ທີ່ມີອຳນາດພິຈາລະນາຄະດີໂດຍມີຕົວແທນໄດ້.

<u>ມາດຕາ 14</u>

1. ທຸກຄົນມີຄວາມສະເໝີພາບຕໍ່ໜ້າສານ. ທຸກຄົນກໍ່ມີສິດໄດ້ຮັບການພິຈາລະນາສິດ ແລະ ພັນທະຂອງຕົນຢ່າງຍຸດຕິທຳ ແລະ ເປີດເຜີຍໂດຍສານທີ່ມີອຳນາດ, ເອກະລາດ ແລະ ບໍ່ລຳອຽງ ຊຶ່ງຖືກສ້າງຂຶ້ນຕາມກົດໝາຍ. ການຕັດສິນປິດລັບອາດຈະຖືກດຳເນີນໄປຈົນໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງຄະດີດ້ວຍເຫດຜົນທາງດ້ານປະເພນີ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມໝັ້ນຄົງຂອງຊາດໃນສັງຄົມປະຊາທິປະໄຕ ຫຼື ເມື່ອສານເຫັນຈຳເປັນປົກປ້ອງຊີວິດສ່ວນຕົວຂອງສອງຝ່າຍ ຫຼື ສານເຫັນວ່າ ການເປີດເຜີຍ ການດຳເນີນຄະດີຈະເປັນຜົນເສຍຫາຍຕໍ່ຄວາມຍຸຕິທຳ, ແຕ່ວ່າທຸກຄຳຕັດສິນຄະດີແພ່ງ ແລະ ຄະດີອາຍາ ຈະບໍ່ປິດລັບຍົກເວັ້ນກໍລະນີ ເພື່ອຜົນປະໂຫຍດຂອງເດັກ.
2. ທຸກຄົນທີ່ຖືກຕ້ອງຫາທາງອາຍາຈະຕ້ອງຖືກຖືວ່າ ເປັນຜູ້ບໍລິສຸດຈົນກວ່າກົດໝາຍຈະພິສູດໄດ້ວ່າ ຜູ້ກ່ຽວມີຄວາມຜິດຈິງ.
3. ໃນການຕັດສິນ ກ່ຽວກັບ ການກ່າວຫາທາງອາຍາຕໍ່ຕົນເອງ, ທຸກຄົນທີ່ຖືກກ່າວຫາທາງອາຍາມີສິດຢ່າງໜ້ອຍໄດ້ຮັບການຄ້ຳປະກັນເງື່ອນໄຂດັ່ງລຸ່ມນີ້ດ້ວຍຄວາມສະເໝີພາບຢ່າງເຕັມສ່ວນ:

(ກ) ຕ້ອງໄດ້ຊາບເນື້ອຫາ ແລະ ເຫດຜົນຂອງຄຳກ່າວຫາຕໍ່ຕົນເອງໂດຍໄວ ແລະ ລະອຽດດ້ວຍພາສາທີ່ຜູ້ກ່ຽວເຂົ້າໃຈ;

(ຂ) ມີເວລາພຽງພໍ ແລະ ສິ່ງອຳນວຍຄວາມສະດວກ ທີ່ຈຳເປັນໃຫ້ແກ່ການກະກຽມ ເພື່ອປ້ອງກັນຕົນເອງ ແລະ ມີສິດຕິດຕໍ່ພົວພັນກັບທີ່ປຶກສາທີ່ຜູ້ກ່ຽວເລືອກເອງ;

(ຄ) ຖືກເອົາຂຶ້ນພິຈາລະນາຢູ່ສານໂດຍໄວ ປາສະຈາກການຊັກຊ້າ ທີ່ບໍ່ສົມຄວນ;

(ງ) ມີສິດເຂົ້າຮ່ວມໃນການຕັດສິນຄະດີ ແລະ ສູ້ຄະດີໂດຍຕົນເອງ ຫຼື ໂດຍການຊ່ວຍເຫຼືອຂອງທະນາຍຄວາມຕາມທີ່ຜູ້ກ່ຽວເລືອກ. ຖ້າຜູ້ກ່ຽວບໍ່ມີທະນາຍຄວາມ ຜູ້ກ່ຽວຈະໄດ້ຮັບແຈ້ງວ່າຜູ້ກ່ຽວມີສິດເອົາທະນາຍຄວາມໄດ້ ແລະ ຖ້າເຫັນວ່າມີຄວາມຈຳເປັນໃນການຕັດສິນ ຜູ້ກ່ຽວຈະໄດ້ຮັບການຊ່ວຍເຫຼືອຈາກທະນາຍຄວາມທີ່ສານຫາມາໃຫ້ ໂດຍບໍ່ຕ້ອງເສຍຄ່າ ຖ້າຜູ້ກ່ຽວບໍ່ສາມາດເສຍໄດ້.

(ຈ) ສິດສອບຖາມພະຍານທີ່ເປັນປໍລະປັກຕໍ່ຕົນ ແລະ ອະນຸຍາດໃຫ້ພະຍານຝ່າຍຕົນມາໃຫ້ການຕໍ່ສານແທນ ພາຍໃຕ້ເງື່ອນໄຂອັນດຽວກັນກັບຝ່າຍກົງກັນຂ້າມ;

(ສ) ຜູ້ກ່ຽວຈະມີນາຍພາສາໂດຍບໍ່ຄິດຄ່າ ຖ້າຫາກວ່າຜູ້ກ່ຽວບໍ່ເຂົ້າໃຈ ຫຼື ເວົ້າພາສາທີ່ໃຊ້ຢູ່ໃນສານນັ້ນໄດ້;

(ຊ) ບໍ່ຖືກບັງຄັບໃຫ້ຮັບສາລະພາບຜິດ.

4. ໃນກໍລະນີມີຜູ້ກະທຳຜິດເປັນເດັກນ້ອຍ, ໃນການດຳເນີນຄະດີຕ້ອງຄຳນຶງເຖິງອາຍຸ ແລະ ຄວາມປະສົງ ເພື່ອສຶກສາອົບຮົມ ແລະ ກໍ່ສ້າງໃຫ້ເດັກນ້ອຍຜູ້ນັ້ນປ່ຽນແປງ.
5. ບຸກຄົນທີ່ຖືກຕັດສິນວ່າ ມີຄວາມຜິດທາງອາຍາມີສິດອຸທອນຕໍ່ສານຂັ້ນສູງກວ່າ ເພື່ອພິຈາລະນາຄືນຄຳຕັດສິນ ແລະ ໂທດຂອງຜູ້ກ່ຽວຕາມກົດໝາຍ.
6. ເມື່ອບຸກຄົນໃດໜຶ່ງຖືກຕັດສິນຂັ້ນສຸດທ້າຍວ່າ ມີໂທດຜິດທາງອາຍາ ແລະ ຫຼັງຈາກນັ້ນຄຳຕັດສິນຖືກລົບລ້າງຍ້ອນໄດ້ມີຂໍ້ເທດຈິງໃໝ່ ຊຶ່ງສະແດງໃຫ້ເຫັນວ່າ ການດຳເນີນຄະດີນັ້ນຜິດພາດ, ບຸກຄົນຜູ້ທີ່ຖືກລົງໂທດຕາມການຕັດສິນນັ້ນ ຕ້ອງໄດ້ຮັບການຊົດເຊີຍຄ່າເສຍຫາຍຕາມກົດໝາຍເວັ້ນເສຍແຕ່ການທີ່ບໍ່ໄດ້ເປີດເຜີຍຂໍ້ເທດຈິງນັ້ນທັນເວລາແມ່ນເປັນຄວາມຜິດທັງໝົດ ຫຼື ສ່ວນໃດສ່ວນໜຶ່ງຂອງຜູ້ກ່ຽວເອງ.
7. ບໍ່ມີບຸກຄົນໃດທີ່ອາດຈະຖືກຕັດສິນ ຫຼື ລົງໂທດຄືນໃໝ່ສຳລັບຄະດີທີ່ໄດ້ຕັດສິນເປັນຂັ້ນສຸດທ້າຍແລ້ວວ່າມີໂທດ ຫຼື ບໍລິສຸດໂດຍສອດຄ່ອງກັບກົດໝາຍ ແລະ ການດຳເນີນຄະດີອາຍາຂອງແຕ່ລະປະເທດ.

## ມາດຕາ 15

1. ບໍ່ມີບຸກຄົນໃດທີ່ຈະຖືກຖືວ່າມີຄວາມຜິດທາງອາຍາ ຍ້ອນການທຳ ຫຼື ລະເວັ້ນ ຊຶ່ງບໍ່ຖືວ່າເປັນຄວາມຜິດທາງອາຍາພາຍໃຕ້ກົດໝາຍພາຍໃນ ຫຼື ກົດໝາຍສາກົນໃນເວລາທີ່ມີການກະທຳ ຫຼື ລະເວັ້ນ, ພ້ອມດຽວກັນກໍ່ຫ້າມຕັດສິນໂທດໃສ່ຜູ້ກ່ຽວໜັກກວ່າໂທດ ທີ່ກຳນົດໃສ່ຄວາມຜິດດັ່ງກ່າວໃນເວລານັ້ນ. ຖ້າຫາກວ່າ ພາຍຫຼັງການກະທຳຄວາມຜິດດັ່ງກ່າວ ຈະໄດ້ຮັບໂທດເບົາລົງຕາມກົດໝາຍດັ່ງກ່າວ.

2. ບໍ່ມີຂໍ້ຄວາມໃດໆໃນມາດຕານີ້ ທີ່ຈະແຕະຕ້ອງເຖິງການດຳເນີນຄະດີ ແລະ ການລົງໂທດບຸກຄົນ ທີ່ໄດ້ກະທຳ ຫຼື ລະເວັ້ນການກະທຳ ຊຶ່ງເປັນຄວາມຜິດທາງອາຍາໃນເວລານັ້ນ ຕາມຫຼັກການທົ່ວໄປຂອງກົດໝາຍທີ່ຖືກຮັບຮູ້ໂດຍວົງຄະນາຍາດປະຊາຊາດມາແລ້ວ.

ມາດຕາ 16

ທຸກຄົນມີສິດທີ່ທີ່ຖືກຮັບຮູ້ ໃນທຸກສະຖານທີ່ ກ່ຽວກັບ ຖານະດ້ານກົດໝາຍຂອງຕົນ.

ມາດຕາ 17

1. ຊີວິດສ່ວນຕົວຂອງທຸກຄົນໆຄົນນັບທັງຄອບຄົວ, ເຮືອນຊານບ້ານຊ່ອງ ຫຼື ຈົດໝາຍ ແລະ ເອກະສານຂອງຜູ້ກ່ຽວຈະບໍ່ຖືກລ່ວງລ້ຳຢ່າງຜິດກົດໝາຍ ຫຼື ໂດຍພາລະການ, ກຽດສັກສີ ແລະ ຊື່ສຽງຂອງຜູ້ກ່ຽວ ກໍຈະບໍ່ຖືກລົບລູ່ຄືກັນ.
2. ທຸກຄົນມີສິດ ທີ່ຈະໄດ້ຮັບການປົກປ້ອງດ້ວຍກົດໝາຍຕໍ່ການລວ່ງລ້ຳ ຫຼື ການລົບລູ່ດັ່ງກ່າວ.

ມາດຕາ 18

1. ທຸກໆຄົນມີສິດມີອິດສະລະພາບໃນການຄົ້ນຄິດ, ມະໂນທຳ ແລະ ການເຊື່ອຖືສາສະໜາ. ສິດທິນີ້ລວມທັງອິດສະລະພາບໃນການຈະຖື ຫຼື ເຂົ້າສາສະໜາ ຫຼື ຄວາມເຊື່ອຖືໃດໜຶ່ງ ທີ່ຜູ້ກ່ຽວເລືອກເອົາຕາມໃຈຊອບ, ແລະ ມີອິດສະລະພາບໃນການສະແດງອອກທາງສາສະໜາຢູ່ໃນສະຖານທີ່ສ່ວນຕົວ ຫຼື ສາທາລະນະ ດ້ວຍຕົນເອງ ຫຼື ລວມໝູ່.
2. ບໍ່ມີບຸກຄົນໃດທີ່ຈະຖືກບັງຄັບ ໂດຍເຮັດໃຫ້ເສຍຫາຍອິດສະລະພາບໃນການຖື ຫຼື ເຂົ້າສາສະໜາ ຫຼື ຄວາມເຊື່ອຖືທີ່ຜູ້ກ່ຽວເລືອກເອົາຕາມໃຈຊອບ.
3. ອິດສະລະພາບໃນການສະແດງອອກ ກ່ຽວກັບ ສາສະໜາ ຫຼື ຄວາມເຊື່ອຖືຂອງຕົນ ຈະຖືກຈຳກັດກໍ່ຕໍ່ເມື່ອກົດໝາຍໄດ້ບົ່ງໄວ້ຕາມຄວາມຈຳເປັນ ເພື່ອປົກປັກຮັກສາຄວາມໝັ້ນຄົງ, ຄວາມເປັນລະບຽບຮຽບຮ້ອຍ, ສາທາລະນະສຸກ ຫຼື ຈາລິຍະທຳຂອງສັງຄົມ ຫຼື ສິດ ແລະ ອິດສະລະພາບພື້ນຖານຂອງບຸກຄົນອື່ນໆ.
4. ລັດພາຄີຂອງສົນທິສັນຍາສະບັບນີ້ຮັບປະກັນ ຈະເຄົາລົບອິດສະລະພາບຂອງພໍ່, ແມ່ ແລະ ຜູ້ປົກຄອງເດັກໃນການຮັບປະກັນໃຫ້ເດັກໄດ້ຮັບການສຶກສາດ້ານສາສະໜາ ແລະ ຈັນຍາທຳຕາມການເຊື່ອຖືຂອງເຂົາເຈົ້າ.

ມາດຕາ 19

1. ທຸກໆຄົນລ້ວນແຕ່ມີສິດຍຶດຖືຄຳຄິດເຫັນຂອງຕົນ ໂດຍປາສະຈາກການແຊກແຊງໃດໆທັງສິ້ນ.

2. ທຸກຄົນມີສິດເສລີພາບໃນການສະແດງແນວຄວາມຄິດຂອງຕົນ, ສິດດັ່ງກ່າວນີ້ລວມທັງເສລີພາບໃນການຊອກສະແຫວງຫາ, ຮັບ ແລະ ເຜີຍແຜ່ຂໍ້ມູນຂ່າວສານ ພ້ອມທັງແນວຄວາມຄິດທຸກຢ່າງ ໂດຍບໍ່ມີພົມແດນ, ທັງດ້ວຍວາຈາ ແລະ ເປັນລາຍລັກອັກສອນ, ໃນຮູບການສິນລະປະກຳ ຫຼື ຜ່ານສື່ສານອື່ນໆທີ່ຜູ້ກ່ຽວເລືອກເອົາຕາມໃຈຊອບ.
3. ໃນການໃຊ້ສິດທີ່ບັນຍັດໄວ້ໃນວັກທີ 2 ຂອງມາດຕານີ້ ມີພັນທະ ແລະ ຄວາມຮັບຜິດຊອບພິເສດໄປໃນຕົວ ເພາະສະນັ້ນ, ການໃຊ້ສິດນັ້ນ ຈະຖືກຈຳກັດໄດ້ກໍ່ຕໍ່ເມື່ອບັນຍັດໄວ້ໃນກົດໝາຍ ແລະ ຈຳເປັນສຳລັບ:

(ກ) ໃຫ້ຄວາມເຄົາລົບຕໍ່ສິດທິ ແລະ ຊື່ສຽງຂອງຜູ້ອື່ນ.

(ຂ) ການປົກປັກຮັກສາຄວາມໝັ້ນຄົງແຫ່ງຊາດ ຫຼື ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ຫຼື ສາທາລະນະສຸກ ແລະ ຈັນຍາທຳຂອງສັງຄົມ.

## ມາດຕາ 20

1. ການໂຄສະນາຊວນເຊື່ອເຮັດສົງຄາມຈະຕ້ອງຖືກຫ້າມດ້ວຍກົດໝາຍ.
2. ທຸກການຍຸຍົງຄວາມກຽດຊັງໃນຊາດ, ຜິວພັນ ຫຼື ລະຫວ່າງສາສະໜາ ຊຶ່ງຈະສ້າງການຈຳແນກ, ຄວາມເປັນປໍລະປັກ ຫຼື ຄວາມຮຸນແຮງນັ້ນຈະຕ້ອງຖືກຫ້າມດ້ວຍກົດໝາຍ.

## ມາດຕາ 21

ສິດທິໃນການໂຮມຊຸມນຸມແບບສັນຕິຈະຕ້ອງຖືກຮັບຮູ້, ຫ້າມວາງຂໍ້ຈຳກັດຮັດແຄບໃດໆ ໃສ່ການໃຊ້ສິດດັ່ງກ່າວນີ້ ນອກຈາກຂໍ້ຈຳກັດທີ່ຖືກຕ້ອງຕາມກົດໝາຍ ແລະ ຈຳເປັນສຳລັບ ສັງຄົມປະຊາທິປະໄຕ ເພື່ອຜົນປະໂຫຍດດ້ານຄວາມໝັ້ນຄົງແຫ່ງຊາດ ຫຼື ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາທາລະນະສຸກ ຫຼື ຈັນຍາທຳຂອງສັງຄົມ ຫຼື ການປົກປ້ອງສິດທິ ແລະ ເສລີພາບຂອງບຸກຄົນອື່ນໆ.

## ມາດຕາ 22

1. ທຸກຄົນມີສິດເສລີພາບໃນການສ້າງຕັ້ງສະມາຄົມກັບຄົນອື່ນໆ ລວມທັງສິດທິໃນການສ້າງຕັ້ງ ຫຼື ເຂົ້າຮ່ວມກຳມະບານ ເພື່ອປົກປ້ອງຜົນປະໂຫຍດຂອງຕົນ.
2. ຫ້າມທຸກການຈຳກັດຮັດແຄບຕໍ່ການໃຊ້ສິດທິອັນນີ້ ນອກຈາກສິ່ງທີ່ຖືກບັນຍັດໄວ້ໃນກົດໝາຍ ແລະ ຈຳເປັນສຳລັບສັງຄົມປະຊາທິປະໄຕ ເພື່ອຜົນປະໂຫຍດທາງດ້ານຄວາມໝັ້ນຄົງແຫ່ງຊາດ ຫຼື ຄວາມປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ, ສາທາລະນະສຸກ ຫຼື ຈັນຍາທຳຂອງສັງຄົມ ຫຼື ການປົກປ້ອງສິດ ແລະ ອິດສະລະພາບຂອງຄົນອື່ນ. ມາດຕານີ້ຈະບໍ່ຫ້າມການວາງຂໍ້ຈຳກັດຮັດແຄບທີ່ຖືກຕ້ອງ ຕາມກົດໝາຍຕໍ່ກຳລັງປະກອບອາວຸດ ແລະ ກຳລັງຕຳຫຼວດໃນການໃຊ້ສິດທິດັ່ງກ່າວນີ້.

3. ບໍ່ມີຂໍ້ຂໍ້ບັນຍັດໃດໆໃນມາດຕານີ້ ທີ່ຈະໃຫ້ອຳນາດແກ່ລັດພາຄີຂອງສົນທິສັນຍາອົງການແຮງງານສາກົນປີ 1948 ວ່າດ້ວຍ ເສລີພາບໃນການສ້າງຕັ້ງສະມາຄົມ ແລະ ການປົກປ້ອງສິດໃນການສ້າງຕັ້ງກຳມະບານເອົາມາດຕະການທາງດ້ານນິຕິບັນຍັດ ຊຶ່ງຈະເປັນການແຕະຕ້ອງ ຫຼື ນຳໃຊ້ກົດໝາຍໃນລັກສະນະທີ່ຈະ ແຕະຕ້ອງເຖິງການຮັບປະກັນສິດທິຕ່າງໆ ທີ່ກຳນົດໄວ້ໃນສົນທິສັນຍາສະບັບນັ້ນ.

## ມາດຕາ 23

1. ຄອບຄົວເປັນສ່ວນປະກອບໂດຍທຳມະຊາດ ແລະ ເປັນພື້ນຖານຂອງສັງຄົມມີສິດທີ່ຈະໄດ້ຮັບການປົກປ້ອງຈາກສັງຄົມ ແລະ ລັດ.
2. ຮັບຮູ້ສິດທິຂອງແມ່ຍິງ ແລະ ຊາຍ ທີ່ເຖິງກະສຽນສົມລົດ ໃນການແຕ່ງການ ແລະ ສ້າງຄອບຄົວ.
3. ທຸກການສົມລົດຈະເກີດຂຶ້ນໄດ້ກໍ່ຕໍ່ເມື່ອ ຄູ່ບ່າວສາວເຫັນດີເຫັນພ້ອມຢ່າງເຕັມສ່ວນ ແລະ ດ້ວຍຄວາມສະໝັກໃຈ.
4. ລັດພາຄີຂອງສົນທິສັນຍາສະບັບນີ້ ຈະດຳເນີນບາດກ້າວທີ່ເໝາະສົມ ເພື່ອຮັບປະກັນສິດສະເໝີພາບ ແລະ ຄວາມຮັບຜິດຊອບຂອງຄູ່ສົມລົດໃນການສົມລົດ, ໃນເວລາຢູ່ຮ່ວມກັນ ແລະ ໃນເວລາຢ່າຮ້າງ. ສຳລັບກໍລະນີມີການຢ່າຮ້າງຕ້ອງມີມາດຕະການອັນຈຳເປັນ ເພື່ອໃຫ້ການປົກປ້ອງແກ່ຜົນປະໂຫຍດຂອງເດັກ.

## ມາດຕາ 24

1. ເດັກທຸກຄົນ, ໃນຖານະເປັນຜູ້ທີ່ຍັງຢູ່ໃນໄວເຍົາ, ຈະຕ້ອງມີສິດໄດ້ຮັບມາດຕະການປົກປ້ອງຄຸ້ມຄອງຈາກຄອບຄົວ, ສັງຄົມ ແລະ ຈາກລັດຕາມຄວາມຮຽກຮ້ອງຕ້ອງການອັນຈຳເປັນໂດຍປາສະຈາກການຈຳແນກໃດໆ ເຊັ່ນ: ການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ກົກເຄົ້າທາງດ້ານເຊື້ອຊາດ ຫຼື ທາງສັງຄົມ, ຖານະດ້ານຊັບສິນ ຫຼື ຖານະກຳເນີດ.
2. ເດັກທຸກຄົນຕ້ອງຖືກຂຶ້ນສຳມະໂນຄົວ ແລະ ຖືກຕັ້ງຊື່ທັນທີພາຍຫຼັງການກຳເນີນ.
3. ເດັກທຸກຄົນມີສິດໄດ້ຮັບສັນຊາດ.

## ມາດຕາ 25

ໂດຍປາສະຈາກການຈຳແນກໃດໆທີ່ກ່າວຢູ່ໃນມາດຕາ 2 ແລະ ໂດຍປາສະຈາກການຈຳກັດຮັດແຄບທີ່ໄຮ້ເຫດຜົນ, ພົນລະເມືອງທຸກຄົນຈະມີສິດ ແລະ ກາລະໂອກາດດັ່ງນີ້:

(ກ) ເຂົ້າຮ່ວມໃນກິດຈະການປົກຄອງປະເທດຂອງຕົນໂດຍກົງ ຫຼື ຜ່ານຜູ້ແທນທີ່ມາຈາກການເລືອກຕັ້ງຢ່າງເສລີ.

(ຂ) ມີສິດປ່ອນບັດ ຫຼື ສະໝັກຮັບເລືອກຕັ້ງໃນການເລືອກຕັ້ງທີ່ບໍລິສຸດ ຊຶ່ງຈະຕ້ອງມີຂຶ້ນ ໂດຍການລົງຄະແນນສຽງແບບທົ່ວໄປ, ສະເໝີພາບ ແລະ ປິດລັບ ເພື່ອຄ້ຳປະກັນການສະແດງອອກຢ່າງເສລີເຖິງເຈດຕະນາລົມອັນແທ້ຈິງຂອງຜູ້ໃຊ້ສິດເລືອກຕັ້ງ.

(ຄ) ເຂົ້າຮັບໃຊ້ວຽກງານລັດຖະການໃນປະເທດຂອງຕົນໃນເງື່ອນໄຂເທົ່າທຽມກັນ.

## ມາດຕາ 26

ທຸກໆຄົນມີຄວາມສະເໝີພາບຕໍ່ໜ້າກົດໝາຍ ແລະ ມີສິດໄດ້ຮັບການປົກປ້ອງອັນເທົ່າທຽມກັນຈາກກົດໝາຍ ໂດຍປາສະຈາກການຈຳແນກ. ຕໍ່ບັນຫານີ້, ກົດໝາຍຈະຕ້ອງຫ້າມທຸກການຈຳແນກ ແລະ ຮັບປະກັນໃຫ້ທຸກຄົນໄດ້ຮັບການປົກປ້ອງທີ່ສະເໝີພາບ ແລະ ມີປະສິດທິພາບ, ຕ້ານທຸກການຈຳແນກເຊື້ອຊາດ, ຜິວພັນ, ເພດ, ພາສາ, ສາສະໜາ, ຄຳເຫັນດ້ານການເມືອງ ແລະ ທັດສະນະອື່ນໆ, ຕົ້ນກຳເນີດທາງດ້ານເຊື້ອຊາດ, ສັງຄົມ, ຖານະກຳເນີດ ຫຼື ຖານະອື່ນໆ.

## ມາດຕາ 27

ໃນລັດພາຄີທີ່ມີປະຊາຊົນກຸ່ມນ້ອຍ ເຊັ່ນ: ຊົນເຜົ່າ, ສາສະໜາ, ພາສາ, ບຸກຄົນທີ່ຂຶ້ນກັບຊົນກຸ່ມນ້ອຍດັ່ງກ່າວ ຈະຕ້ອງມີສິດໃນການອະນຸລັກວັດທະນະທຳຂອງຕົນ, ໃນການເຜີຍແຜ່ ແລະ ປະຕິບັດຄອງສາສະໜາ ຫຼື ມີສິດໃຊ້ພາສາຂອງຕົນຮ່ວມກັບຄົນອື່ນພາຍໃນກຸ່ມຂອງຕົນ.

# ພາກທີ IV

## ມາດຕາ 28

1. ຄະນະກຳມະການສິດທິມະນຸດ (ຕໍ່ໄປນີ້ຈະເອີ້ນວ່າ: ຄະນະກຳມະການ) ຈະໄດ້ຖືກສ້າງຕັ້ງຂຶ້ນ ຊຶ່ງຈະປະກອບດ້ວຍສະມາຊິກ 18 ຄົນທີ່ມີໜ້າທີ່ດັ່ງຕໍ່ໄປນີ້.
2. ຄະນະກຳມະການດັ່ງກ່າວ ຈະປະກອບດ້ວຍຊ່ຽວຊານທີ່ມີສັນຊາດຂອງລັດພາຄີຂອງສົນທິສັນຍາສະບັບນີ້, ຊຶ່ງເປັນບຸກຄົນທີ່ມີຈັນຍາທຳສູງສົ່ງ ແລະ ມີຄວາມສາມາດເປັນທີ່ຍອມຮັບໃນຂົງເຂດສິດທິມະນຸດ, ພ້ອມກັນນີ້ ກໍພິຈາລະນາຊອກຫາບຸກຄົນຜູ້ທີ່ມີປະສົບການທາງດ້ານກົດໝາຍເຂົ້າຮ່ວມນຳ.
3. ສະມາຊິກຂອງຄະນະກຳມະການຕ້ອງໄດ້ມາຈາກການເລືອກຕັ້ງ ແລະ ຈະປະຕິບັດໜ້າທີ່ໃນຖານະສ່ວນຕົວ.

## ມາດຕາ 29

1. ການເລືອກຕັ້ງເອົາສະມາຊິກຂອງຄະນະກຳມະການ ຈະດຳເນີນໄປດ້ວຍການລົງຄະແນນສຽງປິດລັບ ເອົາບຸກຄົນທີ່ມີມາດຖານຕາມມາດຕາ 28 ໄດ້ກຳນົດໄວ້ ແລະ ຖືກສະເໜີໂດຍລັດພາຄີຂອງສົນທິສັນຍາສະບັບນີ້.
2. ແຕ່ລະລັດພາຄີຂອງສົນທິສັນຍາສະບັບນີ້ມີສິດສົ່ງຜູ້ສະໝັກເຂົ້າແຂ່ງຂັນໄດ້ບໍ່ໃຫ້ເກີນສອງຄົນ ແລະແຕ່ລະຄົນຕ້ອງຖືສັນຊາດຂອງລັດທີ່ຜູ້ສົ່ງກ່ຽວເຂົ້າສະໝັກ.
3. ຜູ້ສະໝັກທຸກຄົນມີສິດສະໝັກຄືນໃໝ່ໄດ້.

## ມາດຕາ 30

1. ການດຳເນີນການເລືອກຕັ້ງຄັ້ງທຳອິດບໍ່ໃຫ້ຊ້າເກີນ ຫົກ ເດືອນ ພາຍຫຼັງທີ່ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້.
2. ຢ່າງໜ້ອຍສີ່ເດືອນກ່ອນການເລືອກຕັ້ງຄະນະກຳມະການແຕ່ລະຄັ້ງ ໂດຍບໍ່ນັບການເລືອກຕັ້ງແທນຕຳແໜ່ງວ່າງຕາມມາດຕາ 34, ເລຂາທິການໃຫຍ່ສະຫະປະຊາຊາດ ຈະສົ່ງຄຳເຊີນເປັນລາຍລັກອັກສອນ ໄປຍັງລັດພາຄີຂອງສົນທິສັນຍາສະບັບນີ້ ເພື່ອໃຫ້ສົ່ງຜູ້ສະໝັກຮັບເລືອກຕັ້ງເຂົ້າເປັນສະມາຊິກຄະນະກຳມະການພາຍໃນສາມເດືອນ.
3. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຈັດລຽງລາຍຊື່ຜູ້ສະໝັກຮັບເລືອກຕັ້ງທັງໝົດຕາມລຳດັບຕົວອັກສອນ ໂດຍບອກຊື່ລັດພາຄີທີ່ສະເໜີພວກກ່ຽວມາແລ້ວຈັດສົ່ງບັນຊີດັ່ງກ່າວ ໄປໃຫ້ລັດພາຄີຂອງສົນທິສັນຍາສະບັບນີ້ຢ່າງຊ້າບໍ່ໃຫ້ກາຍ ໜຶ່ງເດືອນ ກ່ອນມື້ເລືອກຕັ້ງແຕ່ລະຄັ້ງ.
4. ການເລືອກຕັ້ງສະມາຊິກຄະນະກຳມະການ ຈະຖືກຈັດຂຶ້ນໃນກອງປະຊຸມລັດພາຄີຂອງສົນທິສັນຍາສະບັບນີ້ ຊຶ່ງຮຽກໂຮມໂດຍເລຂາທິການໃຫຍ່ສະຫະປະຊາຊາດ ແລະ ຈັດຂຶ້ນທີ່ສຳນັກງານໃຫຍ່ສະຫະປະຊາຊາດ, ໃນກອງປະຊຸມດັ່ງກ່າວຄົບອົງປະຊຸມຈະປະກອບດ້ວຍສອງສ່ວນສາມຂອງລັດພາຄີຂອງສົນທິສັນຍາສະບັບນີ້. ບຸກຄົນທີ່ໄດ້ຮັບການເລືອກຕັ້ງຈາກກອງປະຊຸມນີ້ ແມ່ນຜູ້ສະໝັກທີ່ໄດ້ຮັບຄະແນນສຽງຫຼາຍທີ່ສຸດ ແລະ ເປັນສ່ວນຫຼາຍການເຄິ່ງຂອງລັດພາຄີທີ່ມີໜ້າ ແລະ ລົງຄະແນນສຽງໃນກອງປະຊຸມດັ່ງກ່າວ.

## ມາດຕາ 31

1. ໃນຄະນະກຳມະການບໍ່ໃຫ້ມີສະມາຊິກທີ່ມາຈາກລັດດຽວກັນເກີນໜຶ່ງຄົນ.
2. ໃນການເລືອກຕັ້ງຄະນະກຳມະການ ຕ້ອງພິຈາລະນາເຖິງການຈັດແບ່ງສະມາຊິກໃຫ້ສະໝ່ຳສະເໝີຕາມພູມີສາດ ແລະ ຕ້ອງພິຈາລະນາການມີຜູ້ແທນຈາກຮູບແບບແຫ່ງອາລິຍະທຳ ທີ່ແຕກຕ່າງກັນ ແລະ ຈາກລະບົບກົດໝາຍທີ່ສຳຄັນຕົ້ນຕໍຕ່າງໆ.

## ມາດຕາ 32

1. ສະມາຊິກຂອງຄະນະກຳມະການຈະຖືກເລືອກຕັ້ງເຂົ້າຕຳແໜ່ງຊຸດລະ 4 ປີ. ພວກເຂົາເຈົ້າມີສິດສະໝັກເລືອກຕັ້ງເຂົ້າໃນກຳມະການຊຸດໃໝ່ໄດ້ອີກຖ້າຖືກສົ່ງເຂົ້າສະໝັກຄືນ. ແນວໃດກໍຕາມ, ອາຍຸການຂອງສະມາຊິກ 9 ຄົນ ທີ່ຖືກເລືອກຕັ້ງໃນການເລືອກຕັ້ງຄັ້ງທຳອິດຈະສິ້ນສຸດລົງ ເມື່ອຄົບກຳນົດ 2 ປີ. ພາຍຫຼັງການເລືອກຕັ້ງຄັ້ງທຳອິດ, ປະທານກອງປະຊຸມທີ່ກ້າວເຖິງໃນມາດຕາ 30 ວັກ 4 ຈະຕ້ອງເລືອກເອົາສະມາຊິກ 9 ຄົນນີ້ທັນທີໂດຍການຈົກສະຫຼາກ.
2. ບັນດາການເລືອກຕັ້ງປົກກະຕິຕາມກຳນົດຈະຕ້ອງຖືກຈັດຂຶ້ນຕາມຂໍ້ບັນຍັດຂອງມາດຕາຕ່າງໆ ໃນພາກນີ້ທີ່ບົ່ງໄວ້ຂ້າງເທິງ.

## ມາດຕາ 33

1. ໂດຍການເຫັນດີເປັນເອກະພາບຈາກກຳມະການຜູ້ອື່ນໆ, ຖ້າວ່າກຳມະການທ່ານໃດຫາກຢຸດຕິການປະຕິບັດໜ້າທີ່ໂດຍເຫດຜົນໃດກໍ່ຕາມນອກຈາກການຢຸດຕິຊົ່ວຄາວ, ປະທານຄະນະກຳມະການຈະແຈ້ງໃຫ້ເລຂາທິການໃຫຍ່ສະຫະປະຊາດຊາບດ ຊຶ່ງຈະໄດ້ປະກາດຕຳແໜ່ງວ່າງດັ່ງກ່າວ.
2. ໃນກໍລະນີສະມາຊິກຄົນໃດຄົນໜຶ່ງໃນຄະນະກຳມະການຫາກເສຍຊີວິດ ຫຼື ລາອອກຈາກຕຳແໜ່ງ, ປະທານຄະນະກຳມະການຈະແຈ້ງໄປຍັງເລຂາທິການໃຫຍ່ສະຫະປະຊາຊາດທັນທີ ຊຶ່ງຈະໄດ້ປະກາດໃຫ້ທຸກປະເທດຊາບເຖິງຕຳແໜ່ງວ່າງຂອງກກຳມະການຄົນນັ້ນນັບແຕ່ມື້ເສຍຊີວິດ ຫຼື ມື້ທີ່ການລາອອກຂອງຜູ້ກ່ຽວມີຜົນປະຕິບັດ.

## ມາດຕາ 34

1. ເມື່ອມີການປະກາດຕຳແໜ່ງວ່າງມາດຕາ 33 ແລະ ອາຍຸການຂອງສະມາຊິກຜູ້ທີ່ຈະຖືກປ່ຽນນັ້ນຫາກບໍ່ທັນໝົດກຳນົດພາຍໃນຫົກເດືອນ, ເລຂາທິການໃຫຍ່ສະຫະປະຊາຊາດຈະຕ້ອງແຈ້ງໄປຍັງແຕ່ລະ ລັດພາຄີຂອງສົນທິສັນຍາສະບັບນີ້ ຊຶ່ງພາຍໃນກຳນົດສອງເດືອນ ລັດພາຄີສາມາດສົ່ງຜູ້ສະໝັກເຂົ້າແຂ່ງຂັນ ຊີງຕຳແໜ່ງວ່າງດັ່ງກ່າວຕາມມາດຕາ 29.
2. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງລຽງລາຍຊື່ຜູ້ສະໝັກຕາມລຳດັບຕົວອັກສອນແລ້ວສົ່ງບັນຊີລາຍຊື່ນັ້ນໄປໃຫ້ລັດພາຄີຂອງສົນທິສັນຍາສະບັບນີ້. ຈາກນັ້ນການເລືອກຕັ້ງແທນຕຳແໜ່ງວ່າງຈະມີຂຶ້ນຕາມຂໍ້ບັນຍັດທີ່ກ່ຽວຂ້ອງໃນພາກນີ້.
3. ສະມາຊິກຂອງຄະນະກຳມະການ ທີ່ໄດ້ຖືກເລືອກຕັ້ງເຂົ້າແທນຕຳແໜ່ງວ່າງທີ່ປະກາດອອກຕາມມາດຕາ 33 ຈະດຳລົງຕຳແໜ່ງໄປຕາມມາດຕາ 33.

**ມາດຕາ 35**

ໂດຍໄດ້ຮັບການອະນຸມັດຈາກສະມັດຊາໃຫຍ່ສະຫະປະຊາຊາດ, ສະມາຊິກຂອງຄະນະກຳມະການຈະໄດ້ຮັບເງິນເດືອນ ແລະ ຜົນປະໂຫຍດຕອບແທນອື່ນຈາກງົບປະມານຂອງສະຫະປະຊາຊາດຕາມເງື່ອນໄຂທີ່ສະມັດຊາໃຫຍ່ສະຫະປະຊາຊາດວາງອອກ ອີງຕາມຄວາມຮັບຜິດຊອບຂອງຄະນະກຳມະການດັ່ງກ່າວ.

**ມາດຕາ 36**

ເລຂາທິການໃຫຍ່ສະຫະປະຊາຊາດ ຈະປະກອບພະນັກງານທີ່ຈຳເປັນ ແລະ ອຸປະກອນອຳນວຍຄວາມສະດວກຕ່າງໆ ໃຫ້ຄະນະກຳມະການເພື່ອໃຫ້ອົງກອນນີ້ປະຕິບັດພາລະບົດບາດຂອງຕົນທີ່ກຳນົດໄວ້ໃນສົນທິສັນຍາສະບັບນີ້ຢ່າງມີປະສິດທິພາບ.

**ມາດຕາ 37**

1. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຮຽກໂຮມກອງປະຊຸມຄັ້ງທຳອິດຂອງຄະນະກຳມະການຂຶ້ນທີ່ສຳນັກງານໃຫຍ່ສະຫະປະຊາຊາດ.
2. ພາຍຫຼັງກອງປະຊຸມຄັ້ງທຳອິດຄະນະກຳມະການ ຈະມີການປະຊຸມຕາມກຳນົດໄດ້ບົ່ງໄວ້ໃນລະບຽບການພາຍໃນຂອງຄະນະກຳມະການ.
3. ຄະນະກຳມະການຈະປະຊຸມກັນເປັນປົກກະຕິທີ່ສຳນັກງານໃຫຍ່ສະຫະປະຊາຊາດ ຫຼື ສຳນັກງານສະຫະປະຊາຊາດ ທີ່ ເຊີແນວ.

**ມາດຕາ 38**

ກ່ອນເຂົ້າຮັບໜ້າທີ່, ສະມາຊິກຂອງຄະນະກຳມະການທຸກໆຄົນຈະຕ້ອງປະຕິຍານຕົນໃນທີ່ປະຊຸມຂອງຄະນະກຳມະການວ່າ ຕົນຈະປະຕິບັດໜ້າທີ່ຢ່າງທ່ຽງທຳ ແລະ ຢ່າງມີມະໂນທຳ.

**ມາດຕາ 39**

1. ຄະນະກຳມະການຈະເລືອກຕັ້ງຄະນະປະຈຳຂອງຕົນທຸກໆສອງປີ, ສະມາຊິກຄະນະປະຈຳມີສິດໄດ້ຮັບເລືອກຕັ້ງຄືນອີກ.
2. ຄະນະກຳມະການຈະວາງລະບຽບການພາຍໃນຂອງຕົນ ໃນນັ້ນມີຂໍ້ບັນຍັດເຊັ່ນ:
   (ກ) ສະມາຊິກ 12 ຄົນຈະຄົບອົງປະຊຸມ.
   (ຂ) ການລົງມະຕິຂອງຄະນະກຳມະການຕ້ອງເອົາຕາມສຽງສ່ວນຫຼາຍຂອງສະມາຊິກທີ່ເຂົ້າຮ່ວມປະຊຸມ.

## ມາດຕາ 40

1. ລັດພາຄີຂອງສົນທິສັນຍາສະບັບນີ້ຮັບປະກັນຈະສົ່ງບົດລາຍງານ ກ່ຽວກັບ ມາດຕະການຕ່າງໆທີ່ໄດ້ປະຕິບັດ ເພື່ອຈະເຮັດໃຫ້ສິດທິທີ່ຖືກຮັບຮູ້ໃນສົນທິສັນຍາສະບັບນີ້ປະກົດຜົນເປັນຈິງ ແລະ ກ່ຽວກັບຜົນ ຄືບໜ້າໃນການຊົມໃຊ້ສິດທິດັ່ງກ່າວ.
   (ກ) ຈະສົ່ງບົດລາຍງານດັ່ງກ່າວພາຍໃນໜຶ່ງປີນັບແຕ່ມື້ສົນທິສັນຍາສະບັບນີ້ ມີຜົນບັງຄັບໃຊ້ສຳລັບລັດພາຄີ ທີ່ກ່ຽວຂ້ອງ.
   (ຂ) ຕໍ່ຈາກນັ້ນຕ້ອງສົ່ງຕາມຄະນະກຳມະການທວງ.
2. ບົດລາຍງານທັງໝົດທີ່ຕ້ອງສົ່ງໃຫ້ເລຂາທິການໃຫຍ່ສະຫະປະຊາຊາດ ຊຶ່ງຈະຈັດສົ່ງຕໍ່ໄປຍັງຄະນະກຳມະການ ເພື່ອພິຈາລະນາ. ບົດລາຍງານນັ້ນຕ້ອງຊີ້ບອກເຖິງປັດໄຈ ແລະ ຄວາມຫຍຸ້ງຍາກຕ່າງໆ. ຖ້າມີ, ທີ່ກະທົບໃສ່ການປະຕິບັດສົນທິສັນຍາສະບັບນີ້.
3. ພາຍຫຼັງທີ່ມີການປຶກສາຫາລືກັບຄະນະກຳມະການແລ້ວ, ເລຂາທິການໃຫຍ່ສະຫະປະຊາຊາດອາດຈະສົ່ງສຳເນົາບົດລາຍງານໃນສ່ວນທີ່ກ່ຽວຂ້ອງໃຫ້ອົງການວິຊາສະເພາະ ຊຶ່ງອາດຈະຕົກຢູ່ໃນຂອບເຂດຄວາມຮັບຜິດຊອບຂອງອົງການນັ້ນ.
4. ຄະນະກຳມະການ ຈະສຶກສາຄົ້ນຄວ້າບົດລາຍງານທີ່ລັດພາຄີຂອງສົນທິສັນຍາສະບັບນີ້ສົ່ງຂຶ້ນມາ. ຄະນະກຳມະການຈະສົ່ງບົດລາຍງານຂອງຕົນ ແລະ ຂໍ້ສະເໜີແນະຕາມທີ່ຕົນເຫັນເໝາະສົມໃຫ້ລັດພາຄີ ທີ່ກ່ຽວຂ້ອງຄະນະກຳມະການກໍຍັງອາດຈະສົ່ງຄວາມເຫັນເຫຼົ່ານີ້ ພ້ອມທັງກສຳເນົາບົດລາຍງານທີ່ຕົນໄດ້ຮັບຈາກລັດພາຄີໃຫ້ສະພາເສດຖະກິດ ແລະ ສັງຄົມ.
5. ລັດພາຄີຂອງສົນທິສັນຍາສະບັບນີ້ອາດສະເໜີຂໍ້ສັງເກດ ກ່ຽວກັບ ຄຳເຫັນປະກອບຕາມວັກ 4 ຂອງມາດຕານີ້ຕໍ່ຄະນະກຳມະການ.

## ມາດຕາ 41

1. ລັດພາຄີໃດໜຶ່ງຂອງສົນທິສັນຍາສະບັບນີ້ ມີສິດທີ່ຈະປະກາດໄດ້ທຸກເວລາພາຍໃຕ້ມາດຕານີວ່າ ຕົນຮັບຮູ້ອຳນາດຂອງຄະນະກຳມະການໃນການຮັບ ແລະ ພິຈາລະນາເອກະສານແຈ້ງຄວາມຕ່າງໆ ທີ່ລັດພາຄີໜຶ່ງກ່າວຫາອີກລັດໜຶ່ງວ່າບໍ່ປະຕິບັດພັນທະຂອງຕົນພາຍໃຕ້ສົນທິສັນຍາສະບັບນີ້. ເອກະສານແຈ້ງຄວາມພາຍໃຕ້ມາດຕານີ້ຈະຖືກຮັບ ແລະ ພິຈາລະນາກໍຕໍ່ເມື່ອເອກະສານນັ້ນຍື່ນຂຶ້ນມາໂດຍລັດທີ່ປະກາດຮັບຮູ້ອຳນາດຂອງຄະນະກຳມະການ. ຄະນະກຳມະການຈະບໍ່ຮັບ ແລະ ພິຈາລະນາເອກະສານແຈ້ງຄວາມ ທີ່ພົວພັນເຖິງລັດພາຄີທີ່ບໍ່ທັນໄດ້ມີການປະກາດດັ່ງກ່າວ. ເອກະສານແຈ້ງຄວາມທີ່ໄດ້ຮັບພາຍໃຕ້ມາດຕານີ້ ຈະຖືກແກ້ໄຂຕາມຂັ້ນຕອນດັ່ງລຸ່ມນີ້:

(ກ) ຖ້າລັດພາຄີໜຶ່ງຫາກພິຈາລະນາເຫັນວ່າ ລັດພາຄີອື່ນບໍ່ປະຕິບັດຕາມຂໍ້ບັນຍັດຂອງສົນທິສັນຍາສະບັບນີ້, ລັດດັ່ງກ່າວມີສິດທີ່ຈະນຳສະເໜີເລື່ອງດັ່ງກ່າວຕໍ່ລັດພາຄີທີ່ກ່ຽວຂ້ອງ ດ້ວຍການສົ່ງຄຳ

ກ່າວຫາເຫັນລາຍລັກອັກສອນຫາລັດພາຄີດັ່ງກ່າວ. ພາຍໃນ ສາມ ເດືອນ ນັບແຕ່ມື້ໄດ້ຮັບເອກະສານ, ລັດທີ່ຮັບຕ້ອງໃຫ້ຄຳຕອບແກ່ລັດທີ່ສົ່ງເອກະສານນັ້ນໂດຍມີການອະທິບາຍ ຫຼື ຈະປະຕິບັດເພື່ອແກ້ໄຂບັນຫານັ້ນເທົ່າທີ່ເປັນໄປໄດ້.

(ຂ) ຖ້າບັນຫາດັ່ງກ່າວບໍ່ໄດ້ແກ້ໄຂໃຫ້ເປັນທີ່ພໍໃຈຂອງລັດທີ່ກ່ຽວຂ້ອງທັງສອງພາຍໃນ ຫົກເດືອນ ຫຼັງຈາກໄດ້ຮັບເອກະສານທຳອິດໂດຍລັດທີ່ຮັບ, ແຕ່ລະລັດມີສິດທີ່ຈະນຳສະເໜີຕໍ່ຄະນະກຳມະການໂດຍແຈ້ງໃຫ້ຄະນະກຳມະການ ແລະ ຄູ່ກໍລະນີຊາບ;

(ຄ) ຄະນະກຳມະການຈະພິຈາລະນາແກ້ໄຂບັນຫາທີ່ຖືກນຳຂຶ້ນສະເໜີຕໍ່ຕົນກໍ່ຕໍ່ເມື່ອຄະນະກຳມະການນີ້ ມີຄວາມແນ່ໃຈວ່າທຸກວິທີການແກ້ໄຂຢູ່ພາຍໃນ ໄດ້ນຳໃຊ້ໝົດແລ້ວຕາມຫຼັກການທີ່ຮັບຮູ້ທົ່ວໄປຂອງກົດໝາຍສາກົນແຕ່ບໍ່ໄດ້ຜົນ. ແຕ່ວ່າຄະນະກຳມະການຈະບໍ່ຖືຫຼັກການນີ້ຕາຍຕົວ, ໃນກໍລະນີການແກ້ໄຂບັນຫານັ້ນຫາກຖືກແກ່ຍາວຢ່າງບໍ່ສົມເຫດສົມຜົນ;

(ງ) ຄະນະກຳມະການຈະຈັດກອງປະຊຸມລັບ ເມື່ອມີການພິຈາລະນາເອກະສານຕາມມາດຕານີ້;

(ຈ) ໂດຍເປັນໄປຕາມຂໍ້ບັນຍັດຂອງຂໍ້ (ຄ), ຄະນະກຳມະການຈະຕ້ອງກຽມພ້ອມເປັນຜູ້ໄກ່ເກ່ຍໃຫ້ລັດພາຄີທີ່ກ່ຽວຂ້ອງ ແນໃສ່ແກ້ໄຂບັນຫາແບບຖານມິດບົນພື້ນຖານຄວາມເຄົາລົບສິດທິມະນຸດ ແລະ ເສລີພາບພື້ນຖານດັ່ງທີ່ໄດ້ຮັບຮູ້ໃນສົນທິສັນຍາສະບັບນີ້.

(ສ) ໃນທຸກບັນຫາທີ່ສະເໜີໃຫ້ຕົນແກ້ໄຂ, ຄະນະກຳມະການສາມາດທວງເອົາຂໍ້ມູນນຳລັດພາຄີທີ່ກ່ຽວຂ້ອງຕາມທີ່ໄດ້ກ່າວໄວ້ໃນຂໍ້ (ຂ);

(ຊ) ລັດພາຄີທີ່ກ່ຽວຂ້ອງດັ່ງທີ່ບົ່ງໄວ້ຢູ່ໃນຂໍ້ (ຂ), ມີສິດທີ່ຈະມີຕົວແທນຂອງຕົນເຂົ້າອະທິບາຍເມື່ອບັນຫານັ້ນຖືກນຳເຂົ້າພິຈາລະນາຢູ່ໃນຄະນະກຳມະການ ແລະ ມີສິດທີ່ຈະອະທິບາຍດ້ວຍທາງປາກເປົ່າ ຫຼື ເປັນລາຍລັກອັກສອນ;

(ຍ) ຄະນະກຳມະການສະເໜີບົດລາຍງານພາຍນກຳນົດ ສິບສອງ ເດືອນ ພາຍຫຼັງໄດ້ຮັບການແຈ້ງຕາມຂໍ້ (ຂ):

   (i) ຖ້າການແກ້ໄຂຫາກບັນລຸໄດ້ຕາມຂໍ້ (ຈ), ຄະນະກຳມະການຈະຂຽນບົດລາຍງານຂອງຕົນເປັນການສະຫຼຸບໂດຍຫຍໍ້ກ່ຽວກັບຂໍ້ເທັດຈິງ ແລະ ການແກ້ໄຂທີ່ຕົກລົງກັນໄດ້.

   (ii) ຖ້າການແກ້ໄຂບໍ່ສາມາດບັນລຸໄດ້ຕາມເງື່ອນໄຂຂອງຂໍ້ (ຈ), ຄະນະກຳມະການກໍຈະຂຽນບົດລາຍງານຂອງຕົນເປັນການສະຫຼຸບຫຍໍ້ຂໍ້ເທັດຈິງ; ຄຳເຫັນເປັນລາຍລັກອັກສອນຂອງລັດພາຄີ ແລະ ບົດບັນທຶກການອະພິປາຍໂດຍປາກເປົ່າຂອງລັດດັ່ງກ່າວຈະຖືກຕິດແນບໄປນຳບົດລາຍງານຂອງຄະນະກຳມະການ ໃນທຸກບັນຫາບົດລາຍງານຂອງຄະນະກຳມະການຈະຖືກສົ່ງເຖິງລັດພາຄີທີ່ກ່ຽວຂ້ອງ.

2. ຂໍ້ບັນຍັດຂອງມາດຕານີ້ຈະມີຜົນບັງຄັບໃຊ້ເມື່ອລັດພາຄີ ສິບ ລັດຂອງສົນທິສັນຍາສະບັບນີ້ ໄດ້ປະກາດຕາມທີ່ໄດ້ກຳນົດໄວ້ໃນວັກໜຶ່ງຂອງມາດຕານີ້, ຄຳປະກາດນັ້ນຈະຖືກຍື່ນໂດຍລັດພາຄີຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ ຊຶ່ງຈະສົ່ງສຳເນົາຄຳປະກັນນັ້ນໄປໃຫ້ລັດພາຄີອື່ນໆ ຄຳປະກັນນັ້ນ

ອາດຈະຖອນ ເມື່ອໃດກໍໄດ້ໂດຍແຈ້ງໃຫ້ເລຂາທິການໃຫຍ່ສະຫະປະຊາຊາດຊາບ ກ່ຽວກັບການຖອນດັ່ງກ່າວ. ການຖອນຄຳປະກາດນັ້ນຈະບໍ່ແຕະຕ້ອງເຖິງການພິຈາລະນາບັນຫາໃດໜຶ່ງ ໃນບົດລາຍງານທີ່ໄດ້ສົ່ງໄປແລ້ວຕາມມາດຕານີ້. ພາຍຫຼັງເລຂາທິການໃຫຍ່ສະຫະປະຊາຊາດໄດ້ຮັບຊາບການຖອນຄຳປະກາດແລ້ວ ຄະນະກຳມະການຈະບໍ່ຮັບບົດລາຍງານ ກ່ຽວກັບ ລັດພາຄີທີ່ຖອນຄຳປະກາດ, ເວັ້ນເສຍແຕ່ລັດດັ່ງກ່າວນັ້ນໄດ້ແຈ້ງເຈດຕະນາຂອງຕົນຄືນໃໝ່.

## ມາດຕາ 42

1. (ກ) ຖ້າວ່າບັນຫາທີ່ໄດ້ຖືກນຳສະເໜີຕໍ່ຄະນະກຳມະການຕາມມາດຕາ 41 ຫາກບໍ່ຖືກແກ້ໄຂເປັນທີ່ເພິ່ງພໍໃຈຂອງລັດພາຄີທີ່ກ່ຽວຂ້ອງ, ຄະນະກຳມະການອາດຈະແຕ່ງຕັ້ງຄະນະກຳມາທິການໄກ່ເກ່ຍສະເພາະກິດຂຶ້ນໂດຍໄດ້ຮັບການເຫັນດີຈາກລັດພາຄີທີ່ກ່ຽວຂ້ອງ (ຊຶ່ງຕໍ່ໄປນີ້ຈະເອີ້ນວ່າ: "ຄະນະກຳມາທິການ"). ການໄກ່ເກ່ຍຂອງຄະນະກຳມາທິການຈະຊ່ວຍລັດພາຄີທີ່ກ່ຽວຂ້ອງແກ້ໄຂບັນຫາໃນຖານເປັນເພື່ອນມິດທີ່ດີນຳກັນບົນພື້ນຖານແຫ່ງການເຄົາລົບສົນທິສັນຍາສະບັບນີ້.

   (ຂ) ຄະນະກຳມາທິການນີ້ຈະປະກອບດ້ວຍສະມາຊິກຫ້າຄົນ ຊຶ່ງເປັນທີ່ຍອມຮັບຈາກລັດພາຄີທີ່ກ່ຽວຂ້ອງ. ຖ້າລັດທີ່ກ່ຽວຂ້ອງບໍ່ສາມາດຕົກລົງກັນໄດ້ພາຍໃນ ສາມເດືອນ ກ່ຽວກັບ ການປະກອບສະມາຊິກທັງໝົດ ຫຼື ບາງສ່ວນຂອງຄະນະກຳມາທິການດັ່ງກ່າວ. ສະມາຊິກກຳມາທິການທີ່ບໍ່ສາມາດຕົກລົງກັນໄດ້ນັ້ນ ຈະຕ້ອງຖືກປ່ອນບັດເລືອກຕັ້ງເອົາແບບປິດລັບ ໂດຍຄະແນນສຽງສອງສ່ວນສາມຂອງຄະນະກຳມະການ.
2. ສະມາຊິກຄະນະກຳມາທິການຈະຕ້ອງປະຕິບັດໜ້າທີ່ໃນຖານະສ່ວນຕົວ. ພວກກ່ຽວຈະບໍ່ແມ່ນບຸກຄົນທີ່ມີສັນຊາດຂອງລັດພາຄີທີ່ກ່ຽວຂ້ອງ ຫຼື ສັນຊາດຂອງລັດທີ່ບໍ່ໄດ້ເປັນພາຄີຂອງສົນທິສັນຍາສະບັບນີ້, ຫຼື ຂອງລັດພາຄີທີ່ບໍ່ໄດ້ມີການປະກາດຕາມມາດຕາ 41.
3. ຄະນະກຳມາທິການຈະເລືອກຕັ້ງເອົາປະທານ ແລະ ວາງລະບຽບການພາຍໃນຂອງຕົນ.
4. ກອງປະຊຸມຂອງຄະນະກຳມາທິການຕາມປົກກະຕິແລ້ວ ຈະຖືກຈັດຂຶ້ນທີ່ສຳນັກງານໃຫຍ່ສະຫະປະຊາຊາດ ຫຼື ສຳນັກງານສະຫະປະຊາຊາດ ທີ່ ເຊີແນວ ເຖິງຢ່າງໃດກໍ່ຕາມກອງປະຊຸມດັ່ງກ່າວອາດຈະຖືກຈັດຂຶ້ນໃນສະຖານທີ່ອື່ນກໍ່ໄດ້ຕາມທີ່ຄະນະກຳມາທິການເຫັນສະດວກ ໂດຍມີການປຶກສາກັບເລຂາທິການໃຫຍ່ສະຫະປະຊາຊາດ ແລະ ລັດພາຄີທີ່ກ່ຽວຂ້ອງ. ກອງເລຂາຊຶ່ງຈັດຕັ້ງຂຶ້ນຕາມມາດຕາ 36 ນັ້ນກໍຈະໄດ້ຮັບໃຊ້ຄະນະກຳມາທິການທີ່ຖືກແຕ່ງຕັ້ງຂຶ້ນ ຕາມມາດຕານີ້ເຊັ່ນດຽວກັນ.
5. ຂໍ້ມູນທີ່ຄະນະກຳມະການໄດ້ຮັບ ແລະ ກວດສອບແລ້ວນັ້ນ ຈະຖືກສົ່ງໃຫ້ຄະນະກຳມາທິການ. ນອກນັ້ນແລ້ວ, ຄະນະກຳມາທິການຍັງສາມາດທວງຖາມເອົາຂໍ້ມູນເພີ່ມເຕີມນຳລັດພາຄີທີ່ກ່ຽວຂ້ອງໄດ້.

6. ເມື່ອຄະນະກຳມາທິການ ໄດ້ພິຈາລະນາບັນຫາທີ່ເກີດຂຶ້ນນັ້ນຢ່າງຖີ່ຖ້ວນແຕ່ບໍ່ຊ້າເກີນ 12 ເດືອນ ພາຍຫຼັງທີ່ຕົນໄດ້ຮັບກໍລະນີຂັດແຍ່ງແລ້ວ, ຄະນະກຳມາທິການຈະສົ່ງບົດລາຍງານ ກ່ຽວກັບ ບັນຫາດັ່ງກ່າວໃຫ້ແກ່ປະທານຄະນະກຳມະການ ເພື່ອສົ່ງຕໍ່ໄປຍັງລັດພາຄີທີ່ກ່ຽວຂ້ອງ.
   (ກ) ຖ້າຄະນະກຳມາທິການບໍ່ສາມາດສຳເລັດການພິຈາລະນາບັນຫາດັ່ງກ່າວ.
   (ຂ) ຖ້າມີການແກ້ໄຂຖານມິດບົນພື້ນຖານແຫ່ງຄວາມເຄົາລົບສິດທິທີ່ຮັບຮູ້ໃນສົນທິສັນຍາສະບັບນີ້, ຄະນະກຳມາທິການຈະເຮັດບົດສະຫຼຸບຫຍໍ້ກ່ຽວກັບຂໍ້ເທດຈິງ ແລະ ການແກ້ໄຂທີ່ຕົກລົງກັນໄດ້.
   (ຄ) ຖ້າການແກ້ໄຂບໍ່ສາມາດໄດ້ຕາມເງື່ອນໄຂຂອງຂໍ້ (ຂ) ບົດລາຍງານຂອງຄະນະກຳມາທິການຈະຕ້ອງບັນຈຸສິ່ງທີ່ຄະນະກຳມາທິການຊອກເຫັນ ກ່ຽວກັບ ຂໍ້ເທັດຈິງທັງໝົດທີ່ພົວພັນກັບບັນຫາລະຫວ່າງລັດພາຄີທີ່ກ່ຽວຂ້ອງ ພ້ອມດ້ວຍທັດສະນະຂອງຄະນະກຳມາທິການທີ່ກ່ຽວຂ້ອງກັບຄວາມເປັນໄປໄດ້ຂອງການແກ້ໄຂແບບຖານມິດ, ບົດລາຍງານນີ້ຈະລວບລວມເອົາຄຳເຫັນເປັນລາຍລັກອັກສອນ ແລະ ບົດບັນທຶກຄຳເຫັນທາງປາກເປົ່າຂອງລັດພາຄີທີ່ກ່ຽວຂ້ອງ.
   (ງ) ຖ້າບົດລາຍງານຂອງຄະນະກຳມາທິການທີ່ຖືກສະເໜີໃຫ້ລັດພາຄີທີ່ກ່ຽວຂ້ອງຕາມຂໍ້ (ຄ), ລັດພາຄີທີ່ກ່ຽວຂ້ອງຈະຕ້ອງແຈ້ງໃຫ້ປະທານຄະນະກຳມາທິການຊາບພາຍໃນ ສາມເດືອນ ນັບແຕ່ມື້ໄດ້ເຮັດບົດລາຍງານວ່າ ພວກຕົນຍອມຮັບເນື້ອໃນຂອງບົດລາຍງານນັ້ນ ຫຼື ບໍ່.
7. ຂໍ້ບັນຍັດຂອງມາດຕານີ້ ບໍ່ມີຜົນສະທ້ອນຕໍ່ໜ້າທີ່ຮັບຜິດຊອບຂອງຄະນະກຳມະການ ຕາມມາດຕາ 41.
8. ລັດພາຄີທີ່ກ່ຽວຂ້ອງຈະແບ່ງປັນພາລະຄວາມຮັບຜິດຊອບເທົ່າທຽມກັນ ໃນການໃຊ້ຈ່າຍຂອງຄະນະກຳມາທິການຕາມການປະເມີນຂອງເລຂາທິການໃຫຍ່ສະຫະປະຊາຊາດ.
9. ຖ້າຈຳເປັນ, ເລຂາທິການໃຫຍ່ສະຫະປະຊາຊາດອາດຈະອອກຄ່າໃຊ້ຈ່າຍຂອງຄະນະກຳມາທິການໃຫ້ກ່ອນຕາມຂໍ້ບັນຍັດຂອງວັກ 8 ໃນມາດຕານີ້

## <u>ມາດຕາ 43</u>

ສະມາຊິກຂອງຄະນະກຳມະການ ແລະ ຄະນະກຳມາທິການຊຶ່ງຖືກສ້າງຕັ້ງຂຶ້ນຕາມມາດຕາ 42 ຈະຕ້ອງມີສິດໄດ້ຮັບຄວາມສະດວກ ອະພິສິດ ແລະ ການຄຸ້ມກັນຂອງນັກຊ່ຽວຊານທີ່ພວມປະຕິບັດງານໃຫ້ແກ່ສະຫະປະຊາຊາດ ຊຶ່ງບົ່ງໄວ້ໃນພາກຕ່າງໆທີ່ກ່ຽວຂ້ອງຂອງສົນທິສັນຍາ ວ່າດ້ວຍ ອະພິສິດ ແລະ ການຄຸ້ມກັນຂອງສະຫະປະຊາຊາດ.

## <u>ມາດຕາ 44</u>

ຂໍ້ບັນຍັດສຳລັບການປະຕິບັດສົນທິສັນຍາສະບັບນີ້ ຈະຕ້ອງຖືກນຳໃຊ້ໂດຍປາສະຈາກການແຕະຕ້ອງເຖິງລະບຽບການທີ່ກຳນົດໄວ້ໃນຂົງເຂດສິດທິມະນຸດ ຕາມເອກະສານ ແລະ ສົນທິສັນຍາຂອງສະຫະ

ປະຊາຊາດ ແລະ ອົງການວິຊາສະເພາະ ແລະ ຈະບໍ່ກີດກັ້ນລັດພາຄີຂອງສົນທິສັນຍາສະບັບນີ້ໃນການຊອກສະແຫວງຫາທາງແກ້ໄຂຕາມວິທີການອື່ນໆ ເພື່ອຢຸດຕິຂໍ້ຜິດພາດໂດຍສອດຄ່ອງກັບສົນທິສັນຍາສາກົນທົ່ວໄປ ຫຼື ພິເສດທີ່ມີຜົນບັງຄັບໃຊ້ລະຫວ່າງລັດພາຄີທີ່ກ່ຽວຂ້ອງ.

## ມາດຕາ 45

ຄະນະກຳມະການຈະສົ່ງບົດລາຍງານປະຈຳປີ ກ່ຽວກັບ ການດຳເນີນງານຂອງຕົນໃຫ້ສະມັດຊາໃຫຍ່ສະຫະປະຊາຊາດ ໂດຍຜ່ານສະພາເສດຖະກິດ ແລະ ສັງຄົມ.

# ພາກທີ V

## ມາດຕາ 46

ບໍ່ມີຂໍ້ບັນຍັດໃດໆ ໃນສົນທິສັນຍາສະບັບນີ້ຈະຖືກຕີຄວາມໝາຍໄປໃນທາງທີ່ຈະແຕະຕ້ອງເຖິງຂໍ້ບັນຍັດຂອງກົດບັດສະຫະປະຊາຊາດ ແລະ ທຳມະນູນຂອງອົງການວິຊາສະເພາະ ຊຶ່ງໄດ້ກຳນົດຄວາມຮັບຜິດຊອບໃຫ້ອົງການຕ່າງໆທີ່ຂຶ້ນກັບອົງການສະຫະປະຊາຊາດ ກໍຄືໃຫ້ອົງການວິຊາສະເພາະໃນເລື່ອງຕ່າງໆໃນສ່ວນທີ່ກ່ຽວຂ້ອງກັບສົນທິສັນຍາສະບັບນີ້.

## ມາດຕາ 47

ບໍ່ມີຂໍ້ບັນຍັດໃດໆ ໃນສົນທິສັນຍາສະບັບນີ້ທີ່ຈະຖືກຕີຄວາມໝາຍໄປໃນທາງທີ່ຈະຂັດກັບສິດຂອງປະຊາຊົນຕ່າງໆ ໃນການຊົມໃຊ້ຄວາມອຸດົມຮັ່ງມີ ແລະ ຊັບພະຍາກອນທຳມະຊາດຂອງຕົນຢ່າງມີເສລີພາບ ແລະ ເຕັມສ່ວນ.

# ພາກທີ VI

## ມາດຕາ 48

1. ສົນທິສັນຍາສະບັບນີ້ເປີດຮັບການລົງນາມຂອງລັດສະມາຊິກສະຫະປະຊາຊາດ ຫຼື ສະມາຊິກຂອງອົງການວິຊາສະເພາະ, ລັດພາຄີຂອງທຳມະນູນສານຍຸຕິທຳສາກົນ ແລະ ລັດອື່ນໆ ທີ່ຖືກສະມັດຊາໃຫຍ່ສະຫະປະຊາຊາດເຊື້ອເຊີນໃຫ້ເຂົ້າຮ່ວມ.
2. ສົນທິສັນຍາສະບັບນີ້ ຈະຕ້ອງໄດ້ໃຫ້ສັດຕະຍາບັນ, ສານໃຫ້ສັດຕະຍາບັນຈະຕ້ອງຍື່ນໃຫ້ເລຂາທິການໃຫຍ່ສະຫະປະຊາຊາດ.
3. ສົນທິສັນຍາສະບັບນີ້ຈະເປີດຮັບການເຂົ້າຮ່ວມຂອງລັດທີ່ກ່າວໄວ້ໃນວັກ 1 ຂອງມາດຕານີ້.
4. ການເຂົ້າເປັນພາຄີ ຈະມີຜົນຫຼັງຈາກມີການຍື່ນສານຂໍເຂົ້າຮ່ວມນຳເລຂາທິການໃຫຍ່ສະຫະປະຊາຊາດ.

5. ເລຂາທິການໃຫຍ່ສະຫະປະຊາຊາດຈະແຈ້ງໃຫ້ໝົດທຸກລັດພາຄີ ທີ່ໄດ້ລົງນາມ ຫຼື ໄດ້ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບນີ້ຊາບແຕ່ລະຄັ້ງທີ່ມີການຍື່ນສານໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບນີ້.

## ມາດຕາ 49

1. ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຫຼັງຈາກ ສາມເດືອນ ນັບແຕ່ມື້ໄດ້ມີການຍື່ນສານໃຫ້ສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີ ສາມສິບຫ້າ ຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ.
2. ສໍາລັບແຕ່ລະລັດທີ່ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບນີ້ ລຸນຫຼັງການຍື່ນສານໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີສະບັບທີສາມສິບຫ້ານັ້ນ ສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ສໍາລັບລັດດັ່ງກ່າວຫຼັງຈາກ ສາມເດືອນ ນັບແຕ່ມື້ລັດນັ້ນຍື່ນສານໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີ.

## ມາດຕາ 50

ຂໍ້ບັນຍັດໃນສົນທິສັນຍາສະບັບນີ້ຈະມີຜົນບັງຄັບໃຊ້ຕໍ່ໝົດທຸກພາກສ່ວນຂອງລັດ ທີ່ເຫັນສະຫະພັນໂດຍປາສະຈາກຂໍ້ຈໍາກັດ ຫຼື ຍົກເວັ້ນໃດໆທັງສິ້ນ.

## ມາດຕາ 51

1. ທຸກລັດພາຄີຂອງສົນທິສັນຍາສະບັບນີ້ ລ້ວນແຕ່ມີສິດຍື່ນຂໍ້ສະເໜີດັດແກ້ສົນທິສັນຍານີ້ ໂດຍຍື່ນຂໍ້ສະເໜີດັດແກ້ດັ່ງກ່າວ ຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ ຈະແຈ້ງທຸກໆຂໍ້ສະເໜີດັດແກ້ໃຫ້ທຸກລັດພາຄີຂອງສົນທິສັນຍາສະບັບນີ້ ທັງຄໍາເຫັນວ່າ ຄວນຈະມີກອງປະຊຸມລັດພາຄີ ເພື່ອພິຈາລະນາ ແລະ ລົງຄະແນນສຽງເອົາຂໍ້ສະເໜີດັດແກ້ນັ້ນ ຫຼື ບໍ່. ໃນກໍລະນີມີໜຶ່ງສ່ວນສາມຂອງລັດພາຄີຫາກເຫັນດີເປີດກອງປະຊຸມ, ເລຂາທິການໃຫຍ່ສະຫະປະຊາຊາດຈະຮຽກໂຮມກອງປະຊຸມດັ່ງກ່າວ ພາຍໃຕ້ການນໍາພາຂອງສະຫະປະຊາຊາດ, ຂໍ້ດັດແກ້ໃດໆທີ່ຖືກຮັບຮອງເອົາດ້ວຍສຽງສ່ວນຫຼາຍຂອງລັດພາຄີທີ່ມີໜ້າ ແລະ ລົງຄະແນນສຽງໃນກອງປະຊຸມນັ້ນ ຈະໄດ້ຖືກນໍາຂຶ້ນສະເໜີຕໍ່ກອງປະຊຸມສະມັດຊາໃຫຍ່ສະຫະປະຊາຊາດເພື່ອຮັບຮອງເອົາ.
2. ຂໍ້ດັດແກ້ຕ່າງໆຈະມີຜົນບັງຄັບໃຊ້ ໃນເມື່ອໄດ້ຖືກສະມັດຊາໃຫຍ່ສະຫະປະຊາຊາດຮັບຮອງເອົາ ແລະ ຖືກຮັບຮອງໂດຍສອງສ່ວນສາມຂອງລັດພາຄີຂອງສົນທິສັນຍາສະບັບນີ້ ໂດຍສອດຄ່ອງກັບລັດຖະທໍາມະນູນຂອງແຕ່ລະລັດພາຄີ.
3. ເມື່ອໃດຂໍ້ດັດແກ້ມີຜົນບັງຄັບໃຊ້ ເມື່ອນັ້ນຂໍ້ດັດແກ້ດັ່ງກ່າວຈະມີຜົນບັງຄັບໃຊ້ຕໍ່ລັດພາຄີທີ່ໄດ້ຮັບຮອງຂໍ້ດັດແກ້ດັ່ງກ່າວ. ລັດພາຄີອື່ນຍັງຈະຖືກຜູກມັດໂດຍຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ແລະ ຂໍ້ດັດແກ້ທີ່ລັດນັ້ນໄດ້ຮັບຮອງເອົາຜ່ານມາ.

**ມາດຕາ 52**

ໂດຍບໍ່ກ່ຽວຂ້ອງກັບແຈ້ງການທີ່ກ່າວຢູ່ໃນມາດຕາ 48 ວັກ 5, ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງແຈ້ງໃຫ້ທຸກໆລັດທີ່ໄດ້ກ່າວໄວ້ໃນວັກ 1 ຂອງມາດຕາ 48 ຊາບກ່ຽວກັບ:

(ກ) ການລົງນາມໃນສົນທິສັນຍາສະບັບນີ້, ສານໃຫ້ສັດຕະຍາບັນ ແລະ ສານເຂົ້າຮ່ວມສົນທິສັນຍາ ທີ່ໄດ້ຍື່ນຕາມມາດຕາ 48;

(ຂ) ມື້ທີ່ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້ຕາມມາດຕາ 49 ແລະ ມື້ທີ່ຂໍ້ດັດແກ້ມີຜົນບັງຄັບໃຊ້ ຕາມມາດຕາ 51.

**ມາດຕາ 53**

1. ສົນທິສັນຍາສະບັບນີ້ຕົ້ນສະບັບເປັນພາສາຈີນ, ຝຣັ່ງ, ຣັດເຊຍ, ແລະ ແອັດສະປາຍ ຊຶ່ງມີຄຸນຄ່າເທົ່າທຽມກັນຈະຖືກເກັບຮັກສາໄວ້ຢູ່ຫ້ອງສາລະບັນຂອງສະຫະປະຊາຊາດ.
2. ເລຂາທິການໃຫຍ່ສະຫະປະຊາຊາດ ຈະສົ່ງສະບັບສຳເນົາຂອງສົນທິສັນຍາສະບັບນີ້ ທີ່ໄດ້ຢັ້ງຢືນຖືກຕ້ອງກັບສົນທິສັນຍາສະບັບນີ້ ໄປໃຫ້ໝົດທຸກລັດພາຄີທີ່ໄດ້ບົ່ງໄວ້ໃນມາດຕາ 48.

----------------------000------------------------

**ສົນທິສັນຍາສາກົນ**
**ວ່າດ້ວຍ ການປາບປາມ ແລະ ລົງໂທດອາຊະຍາກຳອາປາກເຕັດ**

---

*ຮັບຮອງເອົາ, ເປີດຮັບການລົງນາມ ແລະ ໃຫ້ສັດຕະຍາບັນຕາມຍັດຕິຂອງສະມັດຊາໃຫຍ່*
*ສະຫະປະຊາຊາດ ເລກທີ 3068 (XXVIII) ລົງວັນທີ 30 ພະຈິກ 1973*
**ເລີ່ມມີຜົນບັງຄັບໃຊ້: ໃນວັນທີ 18 ກໍລະກົດ 1976 ໂດຍສອດຄ່ອງກັບມາດຕາ XV**
**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຂົ້າເປັນພາຄີລົງນາມ: 5 ຕຸລາ 1981**

## *ອາລຳພະບົດ*

***ໂດຍທວນຄືນເຖິງ*** ຂໍ້ບັນຍັດຂອງກົດບັດສະຫະປະຊາຊາດ ຊຶ່ງໃນນັ້ນບັນດາລັດພາຄີ ໄດ້ປະຕິຍານຕົນທີ່ໄດ້ເອົາມາດຕະການຮ່ວມກັນ ແລະ ໂດຍຕົນເອງໃນການຮ່ວມມືກັບອົງການສະຫະປະຊາຊາດ ເພື່ອບັນລຸເຖິງການເຄົາລົບ ແລະ ນັບຖືໂດຍທົ່ວໄປສິດທິມະນຸດ ແລະ ເສລີພາບພື້ນຖານສຳລັບທຸກຄົນໂດຍປະສາຈາກການຈຳແນກເຊື້ອຊາດ, ເພດ, ພາສາ ຫຼື ສາສະໜາ.

***ໂດຍເຫັນວ່າ*** ຖະແຫຼງການສາກົນ ວ່າດ້ວຍ ສິດທິມະນຸດ ຊຶ່ງໄດ້ກ່າວໄວ້ວ່າ ທຸກຄົນລ້ວນແຕ່ມີເສລີພາບມາໂດຍກຳເນີດ, ມີສິດ ແລະ ກຽດສັກສີສະເໝີພາບກັນ. ສະນັ້ນ, ທຸກຄົນຍ່ອມໄດ້ຮັບສິດ ແລະ ອິດສະລະພາບທັງໝົດທີ່ໄດ້ກຳນົດໄວ້ໃນຖະແຫຼງການດັ່ງກ່າວນັ້ນ, ໂດຍປາສະຈາກການຈຳແນກໃດໆທັງສິ້ນ, ໂດຍສະເພາະແມ່ນກ່ຽວກັບ ເຊື້ອຊາດ, ຜິວພັນ ຫຼື ສັນຊາດກຳເນີດ.

***ໂດຍເຫັນວ່າ*** ຖະແຫຼງການ ວ່າດ້ວຍ ການມອບເອກະລາດໃຫ້ແກ່ບັນດາປະເທດ ແລະ ປະຊາຊົນເມືອງຂຶ້ນ ຊຶ່ງສະມັດຊາໃຫຍ່ສະຫະປະຊາຊາດ ໄດ້ກ່າວໄວ້ໃນຖະແຫຼງການນັ້ນວ່າ ຂະບວນການປົດປ່ອຍຊາດແມ່ນບໍ່ສາມາດຕ້ານທານ ແລະ ຕ່າວປີ້ນໄດ້. ສະມັດຊາໃຫຍ່ຍັງໄດ້ກ່າວໄວ້ອີກວ່າ ເພື່ອຜົນປະໂຫຍດທາງດ້ານກຽດສັກສີ, ຄວາມກ້າວໜ້າ ແລະ ຄວາມຍຸຕິທຳຂອງມະນຸດ, ລັດພາຄີລ່າເມືອງຂຶ້ນ ແລະ ທຸກພຶດຕິກຳແບ່ງແຍກ ແລະ ຈຳແນກທີ່ເກີດຈາກລັດດັ່ງກ່າວຈະຕ້ອງສິ້ນສຸດລົງ.

***ສັງເກດເຫັນວ່າ*** ໂດຍສອດຄ່ອງກັບສົນທິສັນຍາສາກົນ ວ່າດ້ວຍ ການຈຳກັດທຸກຮູບການຈຳແນກເຊື້ອຊາດ, ບັນດາລັດພາຄີກ່າວປະນາມຢ່າງເຄັ່ງຂຶມ ໂດຍສະເພາະຕໍ່ການແບ່ງແຍກທາງດ້ານເຊື້ອຊາດ ແລະ ລັດທິອາປາເຕັດ ແລະ ໃຫ້ຄຳໝັ້ນສັນຍາທີ່ຈະສະກັດກັ້ນ, ເກືອດຫ້າມ ແລະ ລົບລ້າງທຸກພຶດຕິກຳໃນລັກສະນະດັ່ງກ່າວນີ້ໃຫ້ໝົດສິ້ນໄປຈາກດິນແດນທີ່ຢູ່ພາຍໃຕ້ອຳນາດຂອງຕົນ.

***ໂດຍສັງເກດເຫັນວ່າ*** ໃນສົນທິສັນຍາ ວ່າດ້ວຍ ການສະກັດກັ້ນ ແລະ ລົງໂທດອາຊະຍາກຳດັບສູນເຊື້ອຊາດນັ້ນ ບາງການກະທຳຊຶ່ງອາດຈະມີຄຸນລັກສະນະເປັນອາຊະຍາກຳອາປາກເຕັດນັ້ນແມ່ນອາຊະຍາກຳ ໜຶ່ງພາຍໃຕ້ກົດໝາຍສາກົນ.

***ໂດຍສັງເກດເຫັນວ່າ*** ໃນສົນທິສັນຍາ ວ່າດ້ວຍ ການບໍ່ສິ້ນສຸດຂອງອາຍຸຄວາມອາຊະຍາກຳສົງຄາມ ແລະ ອາຊະຍາກຳຕ້ານມວນມະນຸດ "ການກະທຳທີ່ໄຮ້ມະນຸດສະທຳທີ່ເກີດຈາກລັດທິອາປາເຕັດ" ນັ້ນແມ່ນຄົບເງື່ອນໄຂທີ່ຈະເປັນອາຊະຍາກຳຕ້ານມວນມະນຸດ.

***ໂດຍສັງເກດເຫັນວ່າ*** ສະມັດຊາໃຫຍ່ສະຫະປະຊາຊາດ ໄດ້ຮັບຮອງເອົາຍັດຕິຈຳນວນໜຶ່ງ ຊຶ່ງໃນນັ້ນນະໂຍບາຍ ກໍຄືພຶດຕິກຳຂອງລັດທິອາປາກເຕັດໄດ້ຖືກກ່າວປະນາມໃນຖານະເປັນອາຊະຍາກຳຕ້ານມວນມະນຸດ.

***ໂດຍສັງເກດເຫັນວ່າ*** ສະພາຄວາມໝັ້ນຄົງໄດ້ກ່າວຢໍ້າວ່າ ລັດທິອາປາເຕັດ ແລະ ການສືບຕໍ່ເພີ່ມທະວີຄວາມຮ້າຍແຮງ ແລະ ແຜ່ຂະຫຍາຍຂອງລັດທິດັ່ງກ່າວໄດ້ເປັນການຂົ່ມຂູ່ສັນຕິພາບ ແລະ ຄວາມໝັ້ນຄົງສາກົນ.

***ໂດຍເຊື່ອວ່າ*** ສົນທິສັນຍາສາກົນ ວ່າດ້ວຍ ການປາບປາມ ແລະ ລົງໂທດອາຊະຍາກຳອາປາກເຕັດນີ້ຈະຊ່ວຍໃຫ້ການເອົາມາດຕະການໃນລະດັບສາກົນ ແລະ ລະດັບຊາດທີ່ມີປະສິດທິຜົນກວ່າເກົ່າ ເພື່ອປາບປາມ ແລະ ລົງໂທດອາຊະຍາກຳອາປາກເຕັດນັ້ນເປັນໄປໄດ້.

**ລັດພາຄີຂອງສົນທິສັນຍາສະບັບນີ້ ຈຶ່ງໄດ້ຕົກລົງດັ່ງຕໍ່ໄປນີ້:**

## ມາດຕາ 1

1. ລັດພາຄີຂອງສົນທິສັນຍາສະບັບນີ້ຖະແຫຼງວ່າ ລັດທິອາປາກເຕັດເປັນອາຊະຍາກຳຕ້ານມວນມະນຸດ ແລະ ເປັນການກະທຳທີ່ໄຮ້ມະນຸດສະທຳອັນເກີດມາຈາກນະໂຍບາຍ ແລະ ພຶດຕິກຳຂອງລັດທິອາປາກເຕັດ ແລະ ນະໂຍບາຍກໍຄືພຶດຕິກຳຂອງການແບ່ງແຍກ ແລະ ຈຳແນກເຊື້ອຊາດທີ່ຄ້າຍຄືກັນນັ້ນດັ່ງທີ່ໄດ້ກຳນົດໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້, ເປັນອາຊະຍາກຳທີ່ລະເມີດຫຼັກການຂອງກົດໝາຍສາກົນ ໂດຍສະເພາະແມ່ນຈຸດປະສົງ ແລະ ຫຼັກການຂອງກົດບັດສະຫະປະຊາຊາດ ແລະ ເປັນການຂົ່ມຂູ່ຢ່າງຮ້າຍແຮງ ຕໍ່ສັນຕິພາບ ແລະ ຄວາມໝັ້ນຄົງສາກົນ.
2. ລັດພາຄີຂອງສົນທິສັນຍາສະບັບນີ້ ປະກາດວ່າ ບັນດາອົງການຈັດຕັ້ງ, ສະຖາບັນ, ຕະຫຼອດເຖິງບຸກຄົນ ທີ່ໄດ້ກໍ່ອາຊະຍາກຳອາປາກເຕັດນັ້ນເປັນອາຊະຍາກອນ.

## ມາດຕາ 2

ເພື່ອຈຸດປະສົງຂອງສົນທິສັນຍາສະບັບນີ້, ຄຳວ່າ "ອາຊະຍາກຳອາປາເຕັດ" ຊຶ່ງລວມທັງນະໂຍບາຍ ກໍ່ຄືພຶດຕິກຳຂອງການແບ່ງແຍກ ແລະ ຈຳແນກເຊື້ອຊາດ ທີ່ຄ້າຍຄືກັນນັ້ນ ທີ່ປະຕິບັດກັນຢູ່ພາກໃຕ້ຂອງທະວີບອາຟຣິການັ້ນ ຈະຕ້ອງໝາຍເຖິງການກະທຳໄຮ້ມະນຸດສະທຳດັ່ງຕໍ່ໄປນີ້, ທີ່ກໍ່ຂຶ້ນເພື່ອຈຸດປະສົງສ້າງ ແລະ ຮັກສາໄວ້ຊຶ່ງການຄອບຄອງໂດຍກຸ່ມເຊື້ອຊາດໜຶ່ງຕໍ່ກຸ່ມເຊື້ອຊາດອື່ນ ດ້ວຍວິທີກົດຂີ່ຂົ່ມເຫັງຢ່າງເປັນລະບົບ:

(ກ) ປະຕິເສດສິດທິໃນການມີຊີວິດ ແລະ ເສລີພາບສ່ວນບຸກຄົນຂອງສະມາຊິກຂອງກຸ່ມເຊື້ອຊາດໃດໜຶ່ງເຊັ່ນ:

- (i) ດ້ວຍການຄາດຕະກຳສະມາຊິກຂອງກຸ່ມເຊື້ອຊາດໃດໜຶ່ງ.
- (ii) ດ້ວຍການສ້າງຄວາມເປັນພິດໄພ ຢ່າງຮ້າຍແຮງຕໍ່ຮ່າງກາຍ ແລະ ຈິດໃຈ, ດ້ານການລະເມີດເສລີພາບ ແລະ ກຽດສັກສີຂອງເຂົາເຈົ້າ ຫຼື ໂດຍເອົາພວກເຂົາເປັນເປົ້າໝາຍຂອງການທໍລະມານ ຫຼື ການກະທຳ ຫຼື ການກລົງໂທດອັນໂຫດຮ້າຍປ່າເຖື່ອນ, ໄຮ້ມະນຸດສະທຳ ຫຼື ເສື່ອມຊາມ.
- (iii) ດ້ວຍການຈັບກຸມໂດຍພາລະການ ແລະ ຈຳຄຸກສະມາຊິກຂອງກຸ່ມເຊື້ອຊາດໃດໜຶ່ງຢ່າງຜິດກົດໝາຍ.

(ຂ) ຈົງໃຈສ້າງເງື່ອນໄຂການດຳລົງຊີວິດຕໍ່ກຸ່ມເຊື້ອຊາດໃດໜຶ່ງ ເພື່ອແນໃສ່ເຮັດໃຫ້ກຸ່ມເຊື້ອຊາດນັ້ນພັງທະລາຍຢ່າງສິ້ນເຊີງ ຫຼື ສ່ວນໃດສ່ວນໜຶ່ງ.

(ຄ) ທຸກມາດຕະການທາງນິຕິບັນຍັດ ແລະ ມາດຕະການອື່ນໆ ໂດຍແນໃສ່ສະກັດກັ້ນການເຂົ້າຮ່ວມຂອງກຸ່ມເຊື້ອຊາດໃນຊີວິດການເມືອງ, ສັງຄົມ, ເສດຖະກິດ ແລະ ວັດທະນະທຳຂອງຊາດ ແລະ ສ້າງເງື່ອນໄຂໂດຍເຈດຕະນາ ເພື່ອສະກັດກັ້ນການພັດທະນາຂອງກຸ່ມດັ່ງກ່າວ ໂດຍສະເພາະດ້ວຍການປະຕິເສດສິດທິມະນຸດ ແລະ ເສລີພາບອັນພື້ນຖານຂອງສະມາຊິກຂອງກຸ່ມເຊື້ອຊາດດັ່ງກ່າວອັນລວມທັງສິດທິໃນການອອກແຮງງານ, ສິດທິໃນການສ້າງຕັ້ງອົງການກຳມະບານ, ສິດທິການສຶກສາ, ສິດທິໃນການເດີນທາງອອກ ແລະ ກັບຄືນປະເທດຕົນ, ສິດທິມີສັນຊາດ, ສິດເສລີພາບໃນການໄປມາ ແລະ ຕັ້ງພູມລຳເນົາ, ສິດເສລີພາບໃນການສະແດງຄວາມຄິດເຫັນ ແລະ ສິດເສລີພາບໃນການໂຮມຊຸມນຸມ ຫຼື ເຂົ້າຮ່ວມສະມາຄົມ.

(ງ) ທຸກມາດຕະການລວມທັງມາດຕະການທາງນິຕິບັນຍັດ ທີ່ແນໃສ່ແຍກປະຊາຊົນພົນລະເມືອງອອກຈາກກັນແຕ່ລະເຊື້ອຊາດດ້ວຍການແບ່ງເຂດສະຫງວນ ແລະ ເຂດກຸ່ມຊົນຊາດ, ການຫ້າມ

ການສົມລົດປະສົມລະຫວ່າງສະມາຊິກກຸ່ມຕ່າງໆ ການຍຶດຊັບສິນທີ່ດິນຂອງກຸ່ມ ຫຼື ຂອງສະມາຊິກຂອງກຸ່ມເຊື້ອຊາດດັ່ງກ່າວ.

(ຈ) ການຂູດຮີດແຮງງານຂອງສະມາຊິກຂອງກຸ່ມເຊື້ອຊາດ ໂດຍສະເພາະແມ່ນການໃຊ້ແຮງງານຂອງພວກເຂົາເຈົ້າແບບບັງຄັບ.

(ສ) ການທຳການປາບປາມກວດລ້າງການຈັດຕັ້ງ ແລະ ບຸກຄົນດ້ວຍການຕັດເສລີພາບພື້ນຖານຂອງພວກເຂົາເຈົ້າ ຍ້ອນວ່າພວກເຂົາເຈົ້າຄັດຄ້ານນະໂຍບາຍຂອງລັດທິອາປາກເຕັດ.

**<u>ມາດຕາ 3</u>**

ໂດຍບໍ່ຄຳນຶງເຖິງເຫດຜົນທີ່ກ່ຽວຂ້ອງ, ຄວາມຮັບຜິດຊອບທາງອາຍາສາກົນຈະຕ້ອງນຳໃຊ້ກັບບຸກຄົນ, ສະມາຊິກຂອງອົງການຈັດຕັ້ງ, ສະຖາບັນ ແລະ ຕົວແທນຂອງລັດ ບໍ່ວ່າຈະມີພູມລຳເນົາຢູ່ໃນດິນແດນຂອງລັດອື່ນໆກໍ່ຕາມໃນເມື່ອພວກເຂົາຫາກ:

(ກ) ກໍ່ຂຶ້ນ, ເຂົ້າຮ່ວມ, ຍຸຍົງໂດຍກົງ ຫຼື ຮ່ວມຫົວໃນການກະທຳທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້.

(ຂ) ຊ່ວຍເຫຼືອໂດຍກົງ, ຊຸກຍູ້ ຫຼື ຮ່ວມມືໃນການກໍ່ອາຊະຍາກຳອາປາກເຕັດ.

**<u>ມາດຕາ 4</u>**

ບັນດາລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະ:

(ກ) ດຳເນີນທຸກມາດຕະການທາງດ້ານນິຕິບັນຍັດ ຫຼື ມາດຕະການອື່ນໆທີ່ຈຳເປັນ ເພື່ອປາບປາມ ແລະ ສະກັດກັ້ນທຸກການຍຸຍົງສົ່ງເສີມການກໍ່ອາຊະຍາກຳອາປາກເຕັດ ແລະ ນະໂຍບາຍແບ່ງແຍກເຊື້ອຊາດທີ່ມີລັກສະນະຄ້າຍຄືກັນກັບອາປາກເຕັດ ຫຼື ການສະແດງອອກເຖິງນະໂຍບາຍເຫຼົ່ານັ້ນ ແລະ ເພື່ອລົງໂທດຜູ້ທີ່ມີຄວາມຜິດໃນອາຊະຍາກຳດັ່ງກ່າວ.

(ຂ) ດຳເນີນມາດຕະການທາງນິຕິບັນຍັດ, ຕຸລາການ ແລະ ບໍລິຫານ ເພື່ອກ່າວຟ້ອງ, ດຳເນີນການໄຕ່ສວນ ແລະ ລົງໂທດບຸກຄົນທີ່ຮັບຜິດຊອບ ຫຼື ຕ້ອງຄະດີກ່ຽວກັບການກະທຳທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້ ຕາມຂອບເຂດສິດອຳນາດສານຂອງຕົນ, ເຖິງແມ່ນວ່າບຸກຄົນດັ່ງກ່າວນັ້ນຈະມີພູມລຳເນົາຢູ່ໃນດິນແດນ ຫຼື ເປັນພົນລະເມືອງຂອງລັດທີ່ມີການກະທຳດັ່ງກ່າວເກີດຂຶ້ນ ຫຼື ເປັນພົນລະເມືອງຂອງລັດອື່ນ ຫຼື ເປັນຄົນບໍ່ມີສັນຊາດກໍ່ຕາມ.

**ມາດຕາ 5**

ບຸກຄົນທີ່ຖືກກ່າວຫາວ່າໄດ້ມີການກະທຳຜິດ ທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້ ອາດຈະຖືກພິຈາລະນາຄະດີ ໂດຍສານທີ່ມີສິດອຳນາດກ່ຽວຂ້ອງຂອງລັດພາຄີໃດຂອງສົນທິສັນຍາສະບັບນີ້ ກໍ່ໄດ້ ຊຶ່ງອາດຈະມີສິດອຳນາດກ່ຽວຂ້ອງຂອງລັດພາຄີໃດຂອງສົນທິສັນຍາສະບັບນີ້ກໍ່ໄດ້ ຊຶ່ງອາດຈະມີສິດອຳນາດໃນການພິຈາລະນາຄະດີຂອງບຸກຄົນດັ່ງກ່າວ ຫຼື ໂດຍສານອາຍາສາກົນ ທີ່ມີສິດອຳນາດກ່ຽວຂ້ອງກັບການກະທຳຜິດດັ່ງກ່າວສຳລັບບັນດາລັດພາຄີທີ່ໄດ້ຮັບຮອງສິດອຳນາດໃນການພິຈາລະນາຄະດີຂອງສານດັ່ງກ່າວ

**ມາດຕາ 6**

ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະຮັບຮອງ ແລະ ປະຕິບັດມະຕິຕົກລົງຂອງສະພາຄວາມໝັ້ນຄົງ ໂດຍສອດຄ່ອງກັບກົດບັດສະຫະປະຊາຊາດ ແນໃສ່ສະກັດກັ້ນ, ປາບປາມ ແລະ ລົງໂທດອາຊະຍາກຳອາປາກເຕັດ, ພ້ອມກັນນັ້ນກໍ່ຮ່ວມມືກັນໃນການຈັດຕັ້ງປະຕິບັດມະຕິຕົກລົງຂອງອົງການທີ່ມີສິດອຳນາດກ່ຽວຂ້ອງຂອງສະຫະປະຊາຊາດ ເພື່ອບັນລຸຈຸດປະສົງຂອງສົນທິສັນຍາສະບັບນີ້.

**ມາດຕາ 7**

1. ບັນດາລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະສົ່ງບົດລາຍງານປະຈຳໄລຍະໃຫ້ແກ່ໜ່ວຍງານທີ່ສ້າງຕັ້ງຂຶ້ນຕາມມາດຕາ 9 ຂອງສົນທິສັນຍາສະບັບນີ້ ກ່ຽວກັບ ມາດຕະການທາງນິຕິບັນຍັດ, ຕຸລາການ, ບໍລິຫານ ຫຼື ມາດຕະການອື່ນໆ ທີ່ໄດ້ຮັບຮອງເອົາເພື່ອເຮັດໃຫ້ຂໍ້ບັນຍັດຂອງສົນທິສັນຍາມີຜົນສັກສິດ.
2. ສຳເນົາຂອງບົດລາຍງານນັ້ນ ຈະຕ້ອງໄດ້ສົ່ງໄປຍັງຄະນະກຳມະການພິເສດ ວ່າດ້ວຍ ລັດທິອາປາກເຕັດ ໂດຍຜ່ານເລຂາທິການໃຫຍ່ສະຫະປະຊາຊາດ.

**ມາດຕາ 8**

ລັດພາຄີໃດກໍ່ຕາມຂອງສົນທິສັນຍາສະບັບນີ້ ແມ່ນລ້ວນແຕ່ມີສິດຮຽກຮ້ອງໄປຍັງອົງການທີ່ກ່ຽວຂ້ອງໃດໜຶ່ງຂອງອົງການສະຫະປະຊາຊາດ ເພື່ອໃຫ້ດຳເນີນການຕາມກົດບັດສະຫະປະຊາຊາດ ຕາມທີ່ຕົນເຫັນວ່າ ເໝາະສົມ ເພື່ອສະກັດກັ້ນ ແລະ ປາບປາມອາຊະຍາກຳອາປາກເຕັດ.

**ມາດຕາ 9**

1. ປະທານຄະນະກຳມາທິການສິດທິມະນຸດ ຈະຕ້ອງແຕ່ງຕັ້ງໜ່ວຍງານໜຶ່ງຂຶ້ນ ຊຶ່ງປະກອບດ້ວຍສະມາຊິກຂອງຄະນະກຳມາທິການ 3 ຄົນ ທັງເປັນຜູ້ຕາງໜ້າຂອງລັດພາຄີຂອງສົນທິສັນຍາສະບັບນີ້ ເພື່ອພິຈາລະນາບົດລາຍງານຂອງລັດພາຄີຕາມມາດຕາ 7 ຂອງສົນທິສັນຍາສະບັບນີ້.

2. ຖ້າຫາກວ່າ ຄະນະກຳມາທິການສິດທິມະນຸດ ບໍ່ມີຜູ້ຕາງໜ້າຂອງລັດພາຄີຂອງສົນທິສັນຍາສະບັບນີ້ ຫຼື ກໍ່ມີໜ້ອຍກວ່າສາມຄົນ, ເລຂາທິການໃຫຍ່ອົງການສະຫະປະຊາຊາດ ພາຍຫຼັງໄດ້ປຶກສາກັບທຸກລັດພາຄີຂອງສົນທິສັນຍາສະບັບນີ້ ຈະຕ້ອງແຕ່ງຕັ້ງຜູ້ຕາງໜ້າຜູ້ໜຶ່ງຂອງລັດພາຄີດັ່ງກ່າວ ຫຼື ບັນດາຜູ້ຕາງໜ້າຂອງບັນດາລັດພາຄີ ທີ່ບໍ່ໄດ້ເປັນສະມາຊິກຂອງຄະນະກຳມາທິການສິດທິມະນຸດນັ້ນ ເຂົ້າຮ່ວມໃນວຽກງານຂອງໜ່ວຍງານ ທີ່ໄດ້ສ້າງຕັ້ງຂຶ້ນຕາມວັກໜຶ່ງຂອງມາດຕານີ້ ຈົນກວ່າຈະມີການເລືອກຕັ້ງເອົາຜູ້ຕາງໜ້າຂອງລັດພາຄີຂອງສົນທິສັນຍາສະບັບນີ້ ເຂົ້າໃນຄະນະກຳມາທິການສິດທິມະນຸດ.
3. ໜ່ວຍງານນີ້ສາມາດຮຽກປະຊຸມກັນ ໃນໄລຍະເວລາບໍ່ເກີນ 5 ວັນກ່ອນເປີດ ຫຼື ຫຼັງຈາກປິດກອງປະຊຸມສະໄໝສາມັນຂອງຄະນະກຳມາທິການສິດທິມະນຸດ ເພື່ອພິຈາລະນາບົດລາຍງານຕ່າງໆ ທີ່ໄດ້ສົ່ງໃຫ້ຕົນຕາມມາດຕາ 7 ຂອງສົນທິສັນຍາສະບັບນີ້.

<u>**ມາດຕາ 10**</u>

1. ບັນດາລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ສິດແກ່ຄະນະກຳມາທິການສິດທິມະນຸດໃນການ:
   (ກ). ຂໍໃຫ້ບັນດາອົງກອນຂອງສະຫະປະຊາຊາດໃນເມື່ອມີການສົ່ງສຳເນົາຈົດໝາຍຮ້ອງທຸກພາຍໃຕ້ມາດຕາ 15 ຂອງສົນທິສັນຍາ ວ່າດ້ວຍ ການກຳຈັດທຸກຮູບການຈຳແນກເຊື້ອຊາດນັ້ນ ຈົ່ງໄດ້ເອົາໃຈໃສ່ຕໍ່ຄຳຮ້ອງທຸກ ກ່ຽວກັບ ການກະທຳທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້.
   (ຂ). ບົນພື້ນຖານຂອງບົດລາຍງານຈາກບັນດາອົງກອນ ທີ່ກ່ຽວຂ້ອງຂອງອົງການສະຫະປະຊາຊາດ ແລະ ບົດລາຍງານປະຈຳໄລຍະຂອງລັດພາຄີຂອງສົນທິສັນຍາສະບັບນີ້, ກະກຽມ, ຂຶ້ນບັນຊີບຸກຄົນ, ອົງການຈັດຕັ້ງ, ສະຖາບັນ ແລະ ຜູ້ຕາງໜ້າທີ່ຖືກກ່າວຫາວ່າ ມີຄວາມຮັບຜິດຊອບຕໍ່ອາຊະຍາກຳທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້ ພ້ອມທັງພວກທີ່ໄດ້ຖືກລັດພາຄີຂອງສົນທິສັນຍາສະບັບນີ້ ດຳເນີນຄະດີທາງກົດໝາຍໄປແລ້ວ.
   (ຄ) ສະເໜີຂໍ້ມູນນຳບັນດາອົງກອນທີ່ກ່ຽວຂ້ອງຂອງສະຫະປະຊາຊາດ ກ່ຽວກັບ ມາດຕະການທີ່ເຈົ້າໜ້າທີ່ຮັບຜິດຊອບການປົກຄອງດິນແດນພາຍໃຕ້ອາລັກຂາ ແລະ ດິນແດນທີ່ບໍ່ທັນໄດ້ຮັບສິດແຫ່ງການປົກຄອງຕົນເອງ ແລະ ດິນແດນອື່ນໆ ຊຶ່ງນອນຢູ່ໃນຂອບເຂດຍັດຕິຂອງສະມັດຊາໃຫຍ່ເລກທີ 1514 (XV) ລົງວັນທີ 14 ພະຈິກ 1960 ນັ້ນໄດ້ດຳເນີນບຸກຄົນທີ່ຖືກກ່າວຫາວ່າເປັນຜູ້ຮັບຜິດຊອບຕໍ່ອາຊະຍາກຳພາຍໃຕ້ສິດອຳນາດອະທິປະໄຕທາງດ້ານການປົກຄອງ ແລະ ທາງດ້ານດິນແດນຂອງລັດທີ່ປົກຄອງດິນແດນເຫຼົ່ານັ້ນ.
2. ໃນໄລຍະລໍຖ້າການບັນລຸເປົ້າໝາຍຂອງຖະແຫຼງການ ວ່າດ້ວຍ ການມອບເອກະລາດໃຫ້ແກ່ບັນດາປະເທດ ແລະ ປະຊາຊົນເມືອງຂຶ້ນຕາມທີ່ໄດ້ລະບຸໄວ້ໃນຍັດຕິເລກທີ 1514 (XV) ຂອງສະມັດຊາໃຫຍ່ສະຫະປະຊາຊາດ, ຂໍ້ບັນຍັດຂອງສົນທິສັນຍາສະບັບນີ້ ຈະແມ່ນດ້ວຍວິທີໃດກໍ່ຕາມຈະຕ້ອງບໍ່

ຈຳກັດສິດຮ້ອງຟ້ອງຂອງປະຊາຊົນທີ່ໄດ້ຮັບຈາກສົນທິສັນຍາສາກົນອື່ນໆ ຫຼື ຈາກສະຫະປະຊາຊາດ ແລະ ອົງການວິຊາສະເພາະຂອງສະຫະປະຊາຊາດ.

**<u>ມາດຕາ 11</u>**

1. ບັນດາການກະທຳທີ່ບົ່ງໄວ້ໃນມາດຕາ 2 ຂອງສົນທິສັນຍາສະບັບນີ້ ຈະຕ້ອງບໍ່ຖືກຖືວ່າ ເປັນອາຊະຍາກຳທາງດ້ານການເມືອງ ເພື່ອຈຸດປະສົງສົ່ງຜູ້ກະທຳຜິດດັ່ງກ່າວຂ້າມແດນ.
2. ໃນກໍລະນີທີ່ຈະຕ້ອງສົ່ງຂ້າມແດນ ລັດພາຄີຂອງສົນທິສັນຍາສະບັບນີ້ ໃຫ້ຄຳໝັ້ນສັນຍາທີ່ຈະອະນຸມັດການສົ່ງຂ້າມແດນຕາມກົດໝາຍຂອງຕົນ ແລະ ຕາມສົນທິສັນຍາທີ່ມີຜົນບັງຄັບໃຊ້.

**<u>ມາດຕາ 12</u>**

ທຸກຂໍ້ຂັດແຍ່ງລະຫວ່າງລັດພາຄີ ກ່ຽວກັບ ການຕີຄວາມໝາຍ, ການນຳໃຊ້ ແລະ ການປະຕິບັດສົນທິສັນຍາສະບັບນີ້ ຊຶ່ງບໍ່ສາມາດແກ້ໄຂໄດ້ໂດຍການເຈລະຈານັ້ນ ຈະຕ້ອງນຳຂຶ້ນມາພິຈາລະນາຢູ່ສານຍຸດຕິທຳສາກົນຕາມການສະເໜີຂອງບັນດາລັດຄູ່ກໍລະນີ ໃນຂໍ້ຂັດແຍ່ງດັ່ງກ່າວຫາກຕົກລົງກັນໃຊ້ວິທີການແກ້ໄຂແບບອື່ນ.

**<u>ມາດຕາ 13</u>**

ສົນທິສັນຍາສະບັບນີ້ ເປີດຮັບການລົງນາມຂອງທຸກລັດ. ລັດໃດທີ່ໄດ້ລົງນາມໃນສົນທິສັນຍາສະບັບນີ້ກ່ອນເລີ່ມມີຜົນບັງຄັບໃຊ້ມີສິດເຂົ້າຮ່ວມເປັນພາຄີຂອງສົນທິສັນຍານີ້ເລີຍ.

**<u>ມາດຕາ 14</u>**

1. ສົນທິສັນຍາສະບັບນີ້ ຈະຕ້ອງໄດ້ຮັບການໃຫ້ສັດຕະຍາບັນ. ສານສັດຕະຍາບັນຈະຕ້ອງເກັບຮັກສາໄວ້ນຳເລຂາທິການໃຫຍ່ສະຫະປະຊາຊາດ.
2. ການເຂົ້າເປັນພາຄີຈະຕ້ອງຍື່ນສານເຂົ້າຮ່ວມເປັນພາຄີ ຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ.

**<u>ມາດຕາ 15</u>**

1. ສົນທິສັນຍາສະບັບນີ້ຈະເລີ່ມມີຜົນບັງຄັບໃຊ້ໃນມື້ທີ່ ສາມສິບ ນັບແຕ່ວັນທີມີການຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີຊາວຕໍ່ເລຂາທິການໃຫຍ່ສະຫະປະຊາຊາດ.
2. ສຳລັບລັດທີ່ໃຫ້ສັດຕະຍາບັນ ຫຼື ເຂົ້າຮ່ວມເປັນພາຄີຂອງສົນທິສັນຍາສະບັບນີ້ ພາຍຫຼັງມີການຍື່ນສານລັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີສະບັບທີຊາວແລ້ວນັ້ນ, ສົນທິສັນຍາສະບັບນີ້ ຈະມີຜົນບັງຄັບໃຊ້ໃນມື້ທີ ສາມສິບ ພາຍຫຼັງວັນທີ ທີ່ລັດດັ່ງກ່າວໄດ້ຍື່ນສານສັດຕະຍາບັນ ຫຼື ສານເຂົ້າຮ່ວມເປັນພາຄີ.

## <u>ມາດຕາ 16</u>

ທຸກລັດພາຄີສາມາດຖອນຕົວອອກຈາກສົນທິສັນຍາສະບັບນີ້ໄດ້ ໂດຍແຈ້ງເປັນລາຍລັກອັກສອນ ໄປຍັງເລຂາທິການໃຫຍ່ສະຫະປະຊາຊາດ. ການຖອນຕົວດັ່ງກ່າວ ຈະມີຜົນສັກສິດພາຍຫຼັງ ໜຶ່ງປີ ນັບແຕ່ ວັນທີ ທີ່ເລຂາທິການໃຫຍ່ໄດ້ຮັບແຈ້ງດັ່ງກ່າວ.

## <u>ມາດຕາ 17</u>

1. ທຸກລັດພາຄີສາມາດສະເໜີທົບທວນຄືນສົນທິສັນຍາສະບັບນີ້ ໄດ້ທຸກເວລາ ໂດຍແຈ້ງເປັນລາຍລັກ ອັກສອນ ໄປຍັງເລຂາທິການໃຫຍ່ສະຫະປະຊາຊາດ.
2. ສະມັດຊາໃຫຍ່ສະຫະປະຊາຊາດ ຈະຕົກລົງ ກ່ຽວກັບ ມາດຕະການ, ຖ້າມີ, ທີ່ຈະຕ້ອງດຳເນີນ ເພື່ອ ຕອບສະໜອງການສະເໜີດັ່ງກ່າວ.

## <u>ມາດຕາ 18</u>

ເລຂາທິການໃຫຍ່ສະຫະປະຊາຊາດ ຈະແຈ້ງໃຫ້ບັນດາລັດພາຄີກ່ຽວກັບເລື່ອງຕ່າງໆດັ່ງລຸ່ມນີ້:

(ກ) ການລົງນາມ, ການໃຫ້ສັດຕະຍາບັນ ແລະ ການເຂົ້າຮ່ວມເປັນພາຄີຕາມມາດ 13 ແລະ 14.

(ຂ) ວັນທີ ທີ່ສົນທິສັນຍາສະບັບນີ້ມີຜົນບັງຄັບໃຊ້ຕາມມາດຕາ 15.

(ຄ) ການຖອນຕົວຕາມມາດຕາ 16.

(ງ) ການແຈ້ງການຕາມມາດຕາ 17.

## <u>ມາດຕາ 19</u>

1. ສົນທິສັນຍາສະບັບນີ້ ຊຶ່ງສະບັບພາສາອັງກິດ, ຈີນ, ແອັດສະປາຍ, ຝຣັ່ງ ແລະ ຣັດເຊຍ ລ້ວນແຕ່ ມີຄຸນຄ່າເທົ່າທຽມກັນນັ້ນ ຈະຖືກເກັບຮັກສາໄວ້ຢູ່ທີ່ຫ້ອງສາລະບັນຂອງສະຫະປະຊາຊາດ.
2. ເລຂາທິການໃຫຍ່ສະຫະປະຊາຊາດ ຈະຕ້ອງສົ່ງສະບັບສຳເນົາທີ່ຢັ້ງຢືນຖືກຕ້ອງຂອງສົນທິສັນຍາໄປ ໃຫ້ບັນດາລັດພາຄີ.

--------------------000--------------------